ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ບົດລາຍງານສັງລວມຂໍ້ສະເໜີກ່ຽວກັບມາດຕະການ ແລະ ນະໂຍບາຍເພື່ອຫຼຸດຜ່ອນຜົນກະທົບ ແລະ ຟື້ນຟູເສດຖະກິດ ຈາກວິກິດການຂອງ COVID-19

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ ລາວ

ນະຄອນຫຼວງວຽງຈັນ, ວັນທີ  18 ພຶດສະພາ 2020

# ສາລະບານ

- ສາລະບານ
- ບົດສັງລວມ


I. ພາບລວມດ້ານເສດຖະກິດ ຂອງ ສປປ ລາວ. ..... 1

1.1 ພາບລວມດ້ານເສດຖະກິດ. ..... 1

1.2 ພາບລວມຂອງທຸລະກິດ. ..... 1

II. ຜົນກະທົບຕໍ່ພາກທຸລະກິດ. ..... 5

2.1 ການສຳຫຼວດຜົນກະທົບຕໍ່ພາກທຸລະກິດຂອງ ສຄອ ແຫ່ງຊາດລາວ. ..... 5

2.2 ຜົນກະທົບຕໍ່ທຸລະກິດຕາມຂະແໜງການທຸລະກິດ. ..... 8

2.2.1 ຜົນກະທົບຕໍ່ຂະແໜງອຸດສາຫະກຳປຸງແຕ່ງ ..... 8

2.2.2 ຜົນກະທົບຕໍ່ຂະແໜງກະສິກຳ. ..... 10

2.2.3 ຜົນກະທົບຕໍ່ຂະແໜງທຸລະກິດທ່ອງທ່ຽວ. ..... 11

2.3 ຜົນກະທົບທາງດ້ານການເງິນ. ..... 12

2.4 ຜົນກະທົບຕໍ່ການລົງທຶນຈາກຕ່າງປະເທດ (FDI). ..... 14

2.5 ຜົນກະທົບດ້ານແຮງງານ. ..... 15

III. ຂໍ້ສະເໜີສະເພາະເພື່ອຮັບມືກັບວິກິດການ COVID-19 ໃນໄລຍະການລະບາດຂອງພະຍາດ. ..... 17

3.1 ຂໍ້ສະເໜີຂອງບັນດາຂະແໜງການທຸລະກິດ. ..... 17

3.1.1 ຂໍ້ສະເໜີຂອງຂະແໜງອຸດສາຫະກຳປຸງແຕ່ງ. ..... 17

3.1.3 ຂໍ້ສະເໜີຂອງຂະແໜງທຸລະກິດທ່ອງທ່ຽວ. ..... 19

3.1.4 ຂໍ້ສະເໜີດ້ານການເງິນ ..... 20

3.1.5 ຂໍ້ສະເໜີດ້ານແຮງງານ ..... 21

3.2 ສັງລວມຂໍ້ສະເໜີມາດຕະການໃນໄລຍະພະຍາດລະບາດຂອງ ສຄອ ແຫ່ງຊາດລາວ. ..... 21

IV. ຂໍ້ສະເໜີສະເພາະເພື່ອຟື້ນຟູເສດຖະກິດຈາກວິກິດການ COVID-19. ..... 28

4.1 ຂໍ້ສະເໜີຕໍ່ນະໂຍບາຍ ແລະ ມາດຕະການດ້ານການເງິນ ແລະ ການລົງທຶນ. ..... 29

4.1.1 ນະໂຍບາຍ ແລະ ມາດຕະການໃຫ້ທະນາຄານ ແລະ ສະຖາບັນການເງິນ. ..... 29

4.1.2 ນະໂຍບາຍ ແລະ ມາດຕະການ ເພື່ອລະດົມທຶນຈາກຕ່າງປະເທດ. ...................................... 30

4.1.3 ຄາດຄະເນຄວາມຕ້ອງການທຶນເພື່ອຈັດຕັ້ງປະຕິບັດມາດຕະການ. ....................................... 32

4.2 ຂໍ້ສະເໜີຕໍ່ນະໂຍບາຍ ແລະ ມາດຕະການດ້ານພາສີອາກອນ ແລະ ຄ່າທຳນຽມ ........................... 34

4.3 ຂໍ້ສະເໜີຕໍ່ນະໂຍບາຍ ແລະ ມາດຕະການປັບປຸງແວດລ້ອມການດຳເນີນທຸລະກິດ ແລະ ກົນໄກການຄຸ້ມຄອງ. ........................................................................................................ 35

V. ແຜນການໃນຕໍ່ໜ້າ.................................................................................................. 38

## ເອກະສານຊ້ອນທ້າຍ

ບົດລາຍງານຜົນໄດ້ຮັບຈາກການສຳຫຼວດຜົນກະທົບຂອງ COVID-19 ຕໍ່ກັບພາກທຸລະກິດ

# ບົດສັງລວມ

❖ **<u>ສະພາບເສດຖະກິດ ແລະ ທຸລະກິດໃນ ສປປ ລາວ:</u>**

1. ກ່ອນພະຍາດ COVID-19 ລະບາດ ເສດຖະກິດມະຫາພາກ ຂອງ ສປປ ລາວ ແມ່ນຢູ່ໃນທາທີຫຼຸດລົງ. GDP ຂອງປີ 2019 ເທົ່າ 5%. ນະໂຍບາຍ, ເສດຖະກິດມີຈຸດສຸມ ໃນການພັດທະນາອຸດສາຫະກຳ ກະເສດ, ອຸດສາຫະກຳປຸງແຕ່ງ ແລະ ກິດຈະການບໍລິການທີ່ປົ່ນອ້ອມ. ຈຸດສຸມໃນການພັດທະນາພາກທຸລະກິດ ແມ່ນການພັດທະນາ SME ທີ່ກວມເອົາ 98% ຂອງວິສາຫະກິດ ແລະ ໂຄງປະກອບຂອງການຜະລິດທຸລະກິດ ໃນ ສປປ ລາວ ປະກອບດ້ວຍ 166,000 ກວ່າວິສາຫະກິດໃນລະບົບ ແລະ ຄາດຄະເນມີປະມານ 300,000 ຫົວໜ່ວຍທີ່ເຄື່ອນໄຫວນອກລະບົບ ຫຼື ເຄິ່ງລະບົບ. ວິສາຫະກິດສ່ວນໃຫຍ່ ຕັ້ງຢູ່ນະຄອນຫຼວງວຽງຈັນ (32%) ແລະ ວິສາຫະກິດຂາຍຍົກ, ຂາຍຍ່ອຍ ກວມເຖິງ 53.6% ຂອງຈຳນວນວິສາຫະກິດ ສະແດງໃຫ້ເຫັນວ່າ ການຂະຫຍາຍຂອງອຸດສາຫະກຳ ແມ່ນຍັງຢູ່ໃນລະດັບຕໍ່າ ໃນນັ້ນອຸດສາຫະກຳປຸງແຕ່ງກວມພຽງແຕ່ 5% ຂອງຈຳນວນວິສາຫະກິດ. ນະໂຍບາຍຂອງລັດຖະບານ ແມ່ນໃຫ້ຫຼຸດຜ່ອນການຂຸດຄົ້ນຊັບພະຍາກອນທຳມະຊາດ ໄປສຸມໃສ່ການຜະລິດກະສິກຳ, ອຸດສາຫະກຳປຸງແຕ່ງ ແລະ ການບໍລິການທ່ອງທ່ຽວແຕ່ຍັງຂາດຫຼາຍປັດໃຈ ເພື່ອຊຸກຍູ້ການຜະລິດຂອງພາກສ່ວນດັ່ງກ່າວທີ່ເປັນທຸລະກິດ SME. ສິ່ງກີດຂວາງອັນໃຫຍ່ຫຼວງແມ່ນສະພາບແວດລ້ອມທີ່ອຳນວຍຄວາມສະດວກໃຫ້ແກ່ການທຳເດີນທຸລະກິດແມ່ນຢູ່ໃນລະດັບຕໍ່າທີ່ສຸດ (ອັນດັບທີ 154 ທຽບໃສ່ 190 ປະເທດ).

❖ **<u>ຜົນກະທົບຂອງ COVID-19 ຕໍ່ທຸລະກິດ:</u>**

2. ສຄອ ແຫ່ງຊາດລາວ ໄດ້ສຳຫຼວດຜົນກະທົບຂອງ COVID-19 ຕໍ່ຜູ້ປະກອບການ ໃນໄລຍະວັນທີ 6 ເຖິງ 27 ເມສາ 2020 . ຜົນຂອງການສຳຫຼວດໄດ້ໃຫ້ເຫັນວ່າ ມີຜູ້ປະກອບການຫຼາຍກວ່າ 65% ທີ່ເຫັນວ່າຕົນເອງມີຄວາມສ່ຽງທີ່ຈະປິດກິດຈະການໂດຍສະເພາະຜູ້ປະກອບການໃນທຸລະກິດ ທີ່ພັກອາໄສ, ຂົນສົ່ງ ແລະ ການຄ້າ. ສ່ວນຂະແໜງການເງິນ ແລະ ປະກັນໄພ ຄາດວ່າຈະບໍ່ມີການປິດກິດຈະການ. ໃນໄລຍະພະຍາດລະບາດ ວິສາຫະກິດ ມີພົບກັບອຸປະສັກໃນການດຳເນີນທຸລະກິດ ໂດຍສະເພາະແມ່ນບໍ່ສາມາດຈ່າຍເງິນເດືອນພະນັກງານ, ບໍ່ສາມາດຊຳລະດອກເບ້ຍ ແລະ ຕົ້ນທຶນເງິນກູ້ ແລະ ການບໍລິການສິນຄ້າຫຼຸດລົງ. 71% ຂອງວິສາຫະກິດໄດ້ເອົາຈຳນວນ ພະນັກງານກຳມະກອນອອກຈຳນວນໜຶ່ງ ໃນນັ້ນມີຈຳນວນ 50% ທີ່ຈະປົດແຮງງານອອກເກືອບເຄິ່ງໜຶ່ງຂອງຈຳນວນແຮງງານ. ລາຍຮັບຂອງວິສາຫະກິດໃນໄຕມາດ 01 ປີ 2020 ແມ່ນໄດ້ຫຼຸດລົງ ສຳລັບ 83% ຂອງວິສາຫະກິດ ໃນນັ້ນມີ 27.5% ມີລາຍຮັບຫຼຸດລົງເຖິງ 80 ຫາ 100%. ການສຳຫຼວດໄດ້ວິເຄາະວ່າ ຜົນກະທົບ ຕໍ່ລາຍຮັບຂອງທຸລະກິດໃນໄຕມາດທີ 1 ປີ 2020 ແມ່ນຄາດຄະເນເທົ່າກັບປະມານ 1.17ຕື້ ໂດລາ (ບໍ່ລວມຂະແໜງພະລັງງານໄຟຟ້າ ແລະ ລັດວິສາຫະກິດ ຂະແໜງບໍ່ແຮ່), ຫຼື ເທົ່າກັບ ປະມານ 6% ຂອງ GDP ຄາດຄະເນ ປີ 2019.
3. ວິກິດການ COVID-19 ແມ່ນຮ້າຍແຮງຍ້ອນມັນເຮັດໃຫ້ຕ່ອງໂສ້ທັງສອງເບື້ອງຄື: ເບື້ອງຄວາມຕ້ອງການ ແລະ ເບື້ອງການສະໜອງມີບັນຫາ ແລະ ໄດ້ຢຸດສະຫງັກໄປພ້ອມກັນ ເຊິ່ງມັນເປັນຜົນກະທົບທີ່ຮຸນແຮງ ແລະ ແກ່ຍາວ. ບົດນີ້ໄດ້ສັງລວມເຖິງຜົນກະທົບຕໍ່ຂະແໜງການອຸດສາຫະກຳປຸງແຕ່ງ, ຂະແໜງກະສິກຳ, ອຸດສາຫະກຳກະເສດ ແລະ ຂະແໜງທ່ອງທ່ຽວ ທີ່ບໍ່ໄດ້ກວມເອົາອຸດສາຫະກຳໃຫຍ່ໃນຂະແໜງບໍ່ແຮ່ ແລະ ພະລັງງານ ພ້ອມດ້ວຍລັດວິສາຫະກິດ.
4. ຂະແໜງອຸດສາຫະກຳປຸງແຕ່ງມີມູນຄ່າການຜະລິດ 27,953 ຕື້ກີບ ແລະ ກວມເອົາ 9% ຂອງ GDP. ຕົວເລກສົ່ງອອກສິນຄ້າໃນອັນດັບ 10.3% ຕໍ່ປີ ແລະ ມີມູນຄ່າສົ່ງອອກ 4.45 ຕື້ ໂດລາສາຫາລັດ. ອຸດສາຫະກຳນີ້ແມ່ນໄດ້ຮັບຜົນກະທົບຫຼາຍ ຍ້ອນຄວາມຫຍຸ້ງຍາກໃນການນຳເຂົ້າປັດໄຈການຜະລິດ ແລະ ວັດຖຸດິບ ເຊິ່ງບໍ່ສາມາດນຳສົ່ງຜະລິດຕະພັນອອກຕາມສັນຍາຜູກພັນ. ການປະຕິບັດຄຳສັ່ງເລກທີ 06/ນຍ ໄດ້ເພີ່ມຜົນກະທົບຍ້ອນການສັ່ງໃຫ້ປິດໂຮງງານມີຫຼາຍໂຮງງານທີ່ບໍ່ສາມາດສົ່ງສິນຄ້າອອກໄດ້ ຈຶ່ງມີການຢຸດຕິສັນຍາ ແລະ ມີກໍລະນີຜູ້ຊື້ໄດ້ໂອນສັນຍາໄປປະເທດໃກ້ຄຽງ. ການສັ່ງປິດໂຮງງານໄດ້ສົ່ງຜົນສະທ້ອນໃຫ້ຜູ້ປະກອບການຫຼຸດແຮງງານລົງ, ບໍ່ສາມາດຈ່າຍດອກເບ້ຍ ແລະ ຕົ້ນທຶນເງິນກູ້, ຈ່າຍຄ່າເຊົ່າສະຖານທີ່ ແລະ ຊຳລະອາກອນ.
5. ຂະແໜງກະສິກຳກວມເອົາ 15.7% ຂອງ GDP ແລະ ກວມເອົາເກືອບ 70% ຂອງປະຊາກອນ. ການຜະລິດອຸດສາຫະກຳກະເສດ ແມ່ນໄດ້ຮັບຜົນກະທົບເຊັ່ນດຽວກັນ ກັບຂະແໜງອຸດສາຫະກຳປຸງແຕ່ງ. ສະເພາະທຸລະກິດກະສິກຳ ແບບກະເສດ-ສັນຍາ ແມ່ນໄດ້ມີຜົນກະທົບຍ້ອນການຢຸດສະຫງັກຂອງຕະຫຼາດທ່ອງທ່ຽວໃນເບື້ອງຕົ້ນ ແລະ ໄດ້ຮັບຜົນກະທົບຈາກການຈຳກັດການຂົນສົ່ງຜ່ານ ແຂວງຕໍ່ແຂວງ ແລະ ຜ່ານແດນເພື່ອການສົ່ງອອກສິນຄ້າກະສິກຳໄປປະເທດໃກ້ຄຽງ. ຜົນກະທົບດັ່ງກ່າວໄດ້ມີຜົນສະທ້ອນຕໍ່ຊາວກະສິກອນ ແລະ ທຸລະກິດ ທີ່ປົ່ນອ້ອມຕ່ອງໂສ້ການຜະລິດ ເຮັດໃຫ້ຜູ້ປະກອບການຂາດທຶນຮອນໃນການກະກຽມການຜະລິດຄືນ ໃໝ່ ສະພາບການເຂົ້າເຖິງແຫຼ່ງທຶນຂອງຊາວກະສິກອນຍັງເປັນບັນຫາໜັກໜ່ວງ.
6. ຂະແໜງການທ່ອງທ່ຽວ ແມ່ນກວມເອົາປະມານ 12% ຂອງ GDP ແລະ ໄດ້ຂະຫຍາຍຕົວໄວ. ໃນປີ 2019 ມີນັກທ່ອງທ່ຽວຈຳນວນ 4.7 ລ້ານຄົນມາທ່ຽວໃນ ສປປ ລາວ ແລະ ໄດ້ສ້າງລາຍຮັບຈຳນວນ 935 ລ້ານໂດລາສາຫາລັດ. ຕະຫຼາດທ່ອງທ່ຽວຕົ້ນຕໍ

ຂອງລາວ ແມ່ນນັກທ່ອງທ່ຽວຈາກປະເທດໄທ, ສປ ຈີນ, ຫວຽດນາມ ແລະ ເກົາຫຼີໃຕ້. ສ່ວນນັກທ່ອງທ່ຽວຈາກຕະຫຼາດທ່ອງທ່ຽວອື່ນແມ່ນມີຈຳນວນຈຳກັດ, ຜົນກະທົບຕໍ່ຂະແໜງການແມ່ນເລີ່ມຕົ້ນຕັ້ງແຕ່ຕົ້ນປີ 2020. ໃນນັ້ນມີເກືອບ 60% ຂອງໂຮງແຮມ, ບ້ານພັກ ແລະ ສະຖານທີ່ທ່ອງທ່ຽວໄດ້ປິດກິດຈະການຂອງຕົນ. ກິດຈະການທ່ອງທ່ຽວໃນເມືອງຫຼວງພະບາງ, ວັງວຽງ ໄດ້ປິດກິດຈະການເກືອບ 100% ໃນທ້າຍເດືອນ 03 ປີ 2020 ສ່ວນການປະຕິບັດຄຳສັ່ງເລກທີ 06/ນຍ ມີຜົນກະທົບຕໍ່ທຸລະກິດ ແລະລັກສະນະດຽວກັນ ກັບຂະແໜງອຸດສາຫະກຳປຸງແຕ່ງ ແຕ່ໃນຂະແໜງທ່ອງທ່ຽວຄວາມສ່ຽງແມ່ນສູງກວ່າ ເພາະການຟື້ນຟູຈະຂຶ້ນກັບສະພາບຂອງຕະຫຼາດທ່ອງທ່ຽວໃນໂລກ.

7. ຜົນກະທົບຕົ້ນຕໍຂອງອຸດສາຫະກຳຂ້າງເທິງນີ້ແມ່ນບັນຫາທາງດ້ານການເງິນ ແລະ ການສະໜອງທຶນໃຫ້ແກ່ທຸລະກິດໃນໄລຍະວິກິດການນີ້. ຜົນກະທົບຕໍ່ການສະໜອງທຶນໃຫ້ທຸລະກິດ ແມ່ນຍ້ອນບັນດາສະຖາບັນການເງິນທາງພາກລັດ ແລະ ພາກທຸລະກິດ (ເອກະຊົນ) ມີຄວາມຈຳກັດໃນການຍືດຢຸ່ນການບໍລິການດ້ານການເງິນ ຍ້ອນຂະແໜງການເງິນມີຄວາມສ່ຽງສູງໃນຕະຫຼາດທຶນທີ່ເນື່ອງມາຈາກສະພາບເສດຖະກິດມະຫາພາກຂອງ ສປປ ລາວ ບໍ່ເຂັ້ມແຂງ ແລະ ຖືກຫັດກຸມ. ມີທະນາຄານທຸລະກິດ ແລະ ສະຖາບັນການເງິນຈຳນວນໜຶ່ງຂາດສະພາບຄ່ອງດ້ານທຶນຮອນເພື່ອສະໜອງໃຫ້ພາກທຸລະກິດ, ລະບົບສະໜອງເງິນກູ້ນອກລະບົບ ແລະ ເຄິ່ງລະບົບແມ່ນກວມເອົາປະມານ 50% ຂອງຈຳນວນທຶນທີ່ສະໜອງໃຫ້ພາກທຸລະກິດ.

8. ແຮງງານຢູ່ ສປປ ລາວ ມີ 4.7 ລ້ານຄົນກວມເອົາ 68% ຂອງປະຊາກອນ ຕາມການສຳຫຼວດປີ 2017 ໃນນັ້ນມີ 1.9 ລ້ານຄົນທີ່ຖືເປັນກຳລັງແຮງງານ. ລະບົບສະຫວັດດີການປະກອບມີ 1,783 ຫົວໜ່ວຍທຸລະກິດ ແລະ ແຮງງານ 124,000 ຄົນທີ່ຢູ່ໃນລະບົບ. ຜົນກະທົບຕໍ່ແຮງງານມາຈາກການຢຸດຈ້າງງານຊົ່ວຄາວ ແລະ ບໍ່ຊົ່ວຄາວຂອງວິສາຫະກິດທີ່ຖືກຜົນກະທົບຈາກວິກິດການ. ຄວາມບໍ່ແນ່ນອນໃນຕະຫຼາດແຮງງານເຮັດໃຫ້ແຮງງານໄປຊອກຫາອາຊີບອື່ນເຮັດ ຫຼື ກັບໄປຖິ່ນຖານຂອງຕົນ ທີ່ອາດຈະເພີ່ມຄວາມຂາດເຂີນຕໍ່ຄົວເຮືອນ. ລະບົບສະຫວັດດີການສັງຄົມແມ່ນສາມາດຊ່ວຍເຫຼືອພຽງແຕ່ 0.6% ຂອງກຳລັງແຮງງານຍ້ອນມີສະມາຊິກໃນຈຳນວນຈຳກັດ ຜົນກະທົບຕາມມາຂອງແຮງງານທີ່ຫວ່າງງານ ແມ່ນບໍ່ສາມາດຈ່າຍດອກເບ້ຍໄດ້ ແລະ ຕົ້ນທຶນເງິນກູ້, ຍານພະຫານະ, ເຄື່ອງໃຊ້ໃນຄົວເຮືອນ, ການຈ່າຍຄ່າເຊົ່າເຮືອນ ແລະ ອື່ນໆ.

❖ **<u>ຂໍ້ສະເໜີເພື່ອຮັບມືກັບວິກິດການໃນໄລຍະພະຍາດລະບາດ:</u>**

9. ຂໍ້ສະເໜີຂອງຂະແໜງອຸດສາຫະກຳປຸງແຕ່ງ ແມ່ນໃຫ້ຫຼຸດຜ່ອນມາດຕະການປິດໂຮງງານຕາມຄຳສັ່ງເລກທີ 06/ນຍ ແລະ ຄຳສັ່ງແນະນຳເລກທີ 031/ສພກ ໃຫ້ອຳນວຍຄວາມສະດວກໃນການຂົນສົ່ງພາຍໃນ ແລະ ລະຫວ່າງປະເທດ, ໃຫ້ທະນາຄານເລື່ອນການຊຳລະດອກເບ້ຍ ແລະ ຕົ້ນທຶນເງິນກູ້ເປັນທຶນໝູນວຽນໃຫ້ແກ່ທຸລະກິດ ເພື່ອການຜະລິດຄືນໃໝ່ ແລະ ໃຫ້ລັດຖະບານກຳນົດເງິນອຸດໜູນແຮງງານທີ່ຖືກຫວ່າງງານ.

10. ຂໍ້ສະເໜີຂອງຂະແໜງກະສິກຳ ແມ່ນໃຫ້ລັດຖະບານເພີ່ມການອຳນວຍຄວາມສະດວກຢູ່ດ້ານຊາຍແດນ ເພື່ອການສົ່ງອອກສິນຄ້າກະສິກຳ, ໃຫ້ບັນດາແຂວງອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງສິນຄ້າລະຫວ່າງແຂວງ, ອອກນະໂຍບາຍຍົກເວັ້ນພາສີນຳເຂົ້າວັດຖຸປັດໃຈການຜະລິດກະສິກຳ, ໃຫ້ທະນາຄານ ແລະ ສະຖາບັນການເງິນຜ່ອນຜັນເງິນກູ້ໃຫ້ຊາວກະສິກອນຢ່າງທົ່ວເຖິງ, ປ່ອຍສິນເຊື່ອໂຄງການ SME ແລະ ໃຫ້ລັດຖະບານຊ່ວຍຄອບຄົວຊາວກະສິກອນທີ່ໄດ້ຫວ່າງງານຍ້ອນການຢຸດສະຫງັກດ້ານການຜະລິດ.

11. ຂໍ້ສະເໜີຂອງຂະແໜງທ່ອງທ່ຽວ ແມ່ນ ໃຫ້ລັດຖະບານເລື່ອນເວລາຊຳລະອາກອນຕໍ່ທຸລະກິດທີ່ຢູ່ໃນລະບົບຕ່ອງໂສ້ການຜະລິດຂອງອຸດສາຫະກຳທ່ອງທ່ຽວ ເຊັ່ນ: ອາກອນມູນຄ່າເພີ່ມ, ອາກອນກຳໄລ ແລະ ອາກອນເງິນເດືອນ. ໃຫ້ທະນາຄານ ແລະ ສະຖາບັນການເງິນເລື່ອນການຈ່າຍດອກເບ້ຍ ແລະ ຕົ້ນທຶນເງິນກູ້ ເຖິງເດືອນທັນວາ 2020. ໃຫ້ຫຼຸດຄ່ານໍ້າປະປາ, ໄຟຟ້າ ແລະ ຄ່າອິນເຕີເນັດ, ຄ່າເຊົ່າສະຖານທີ່ໃຫ້ຜູ້ປະກອບການທ່ອງທ່ຽວເຖິງ 50% ແລະ ປະຕິບັດແຕ່ເດືອນ 02 ເຖິງ 12 ປີ 2020. ໃຫ້ທະນາຄານສະໜອງເງິນກູ້ເພື່ອເປັນທຶນໝູນວຽນເວລາມີການຜະລິດຄືນໃໝ່, ໃຫ້ລັດຖະບານອຸດໜູນຄ່າແຮງງານໃຫ້ຜູ້ຫວ່າງງານຈາກອຸດສາຫະກຳທ່ອງທ່ຽວແຕ່ເດືອນ 02 ເຖິງ 12 ປີ 2020 ເປັນຕົ້ນມາ.

12. ຂໍ້ສະເໜີຂອງ ສຄອ ແຫ່ງຊາດລາວ ຕໍ່ຂະແໜງການເງິນແມ່ນໃຫ້ທະນາຄານເລື່ອນການຊຳລະໜີ້ລວມຕົ້ນທຶນ ແລະ ດອກເບ້ຍເປັນເວລາ 06 ເດືອນ ໃຫ້ຜູ້ປະກອບການໃນທຸກໆຂະແໜງການ ແລະ ຈັດສັນເງິນກູ້ເພື່ອສະໜອງເປັນທຶນໝູນວຽນ. ໃນໄລຍະ 1.5 ເຖິງ 2 ປີ ໃນຂະແໜງທີ່ເປັນຍຸດທະສາດ. ເພື່ອໃຫ້ສະຖາບັນການເງິນສະໜອງທຶນໃຫ້ທຸລະກິດໄດ້ ສະເໜີໃຫ້ລັດຖະບານຜ່ອນຜັນຂໍ້ກຳນົດເພື່ອປ່ອຍທຶນບາງສ່ວນ, ຜ່ອນຜັນຂໍ້ກຳນົດການປ່ອຍເງິນກູ້ເປັນເງິນຕາຕ່າງປະເທດ ແລະ ສ້າງກົນໄກສັບປ່ຽນສະກຸນເງິນຕາ, ລະດົມໃຫ້ສະຖາບັນການເງິນຈຸລະພາກ (ສກຈ) ປະຕິບັດຂໍ້ຕົກລົງຂອງທະນາຄານແຫ່ງລັດເລກທີ 238/ທຫລ ແລະ ໃຫ້ລັດຖະບານປ່ອຍເງິນກູ້ສຸກເສີນໃຫ້ ສະຖາບັນການເງິນຈຸລະພາກ (ສກຈ) ໃນອັດຕາດອກເບ້ຍພິເສດ ພ້ອມທັງໃຫ້ເລື່ອນການຊຳລະອາກອນກຳໄລລ່ວງໜ້າ ສຳລັບໄຕມາດທີ 01 ແລະ 02 ຂອງ ສະຖາບັນການເງິນຈຸລະພາກ (ສກຈ) ເພື່ອເອົາເງິນດັ່ງກ່າວໄປປ່ອຍກູ້. ໃຫ້ລັດຖະບານເລື່ອນການຊຳລະອາກອນກຳໄລລ່ວງໜ້າຂອງ ສະຖາບັນການເງິນ ໄປທ້າຍປີ 2020.

13. ຂໍ້ສະເໜີຂອງ ສຄອ ແຫ່ງຊາດລາວ ດ້ານແຮງງານ ແມ່ນ ໃຫ້ລັດຖະບານກຳນົດອັດຕາເງິນຫວ່າງງານໃຫ້ແກ່ແຮງງານທີ່ເປັນສະມາຊິກກອງທຶນປະກັນສັງຄົມ ແລະໃຫ້ມີການໂຄສະນາເຜີຍແຜ່ນະໂຍບາຍເງິນອຸດໜູນຫວ່າງງານໃຫ້ຜູ້ປະກອບການ ແລະ ຜູ້

ອອກແຮງງານຢ່າງທົ່ວເຖິງ. ໃຫ້ມີຄວາມຊັດເຈນໃນການຊ່ວຍເຫຼືອການຈ່າຍເງິນເດືອນໃຫ້ພະນັກງານທີ່ວິສາຫະກິດມີການຢຸດຕິການຜະລິດ ຫຼື ເຄື່ອນໄຫວທຸລະກິດຕາມຄຳສັ່ງເລກທີ 06/ນຍ. ໃຫ້ຫຼຸດຜ່ອນເງື່ອນໄຂການເປີດໂຮງງານໃນຄຳສັ່ງເລກທີ 031/ສພກ ຂອງຄະນະສະເພາະກິດ ເພື່ອໃຫ້ບັນດາໂຮງງານ ສາມາດດຳເນີນການຜະລິດຄືນໃໝ່ ແລະ ສາມາດນຳເອົາແຮງງານເຂົ້າມາເຮັດວຽກຄືນ ເພື່ອຫຼຸດຜ່ອນຈຳນວນຄົນຫວ່າງງານ ແລະ ພາລະຂອງລັດຖະບານ.

14. ສຄອ ແຫ່ງຊາດລາວ ໄດ້ມີການຕິດຕາມ ແລະ ມີການວິການເຄາະສະພາບຕາມຕົວຈິງ ແລະ ຜົນກະທົບຕໍ່ທຸລະກິດ ຈາກການສຳຫຼວດ ແລະ ການເຮັດວຽກໃນກຸ່ມຄົ້ນຄວ້າຂອງບັນດາຂະແໜງການທຸລະກິດ. ສຄອ ແຫ່ງຊາດລາວໄດ້ສົ່ງໜັງສືສະເໜີຫຼາຍສະບັບໃຫ້ແກ່ລັດຖະບານກ່ອນ ແລະ ຫຼັງຄຳສັ່ງເລກທີ 06/ນຍ. ລວມມີບົດສະເໜີເລກທີ 0259/ສຄອຊ ລົງວັນທີ 12 ມີນາ 2020. ບົດສະເໜີເລກທີ 0340/ສຄອຊ ລົງວັນທີ 17 ເມສາ 2020 ແລະ ບົດສະເໜີເລກທີ 0355/ສຄອຊ ສຳລັບວັນທີ 29 ເມສາ 2020, ຄະນະສະເພາະກິດກໍ່ໄດ້ເອົາໃຈໃສ່ພິຈາລະນາ ເນື້ອໃນຂອງຂໍ້ສະເໜີດັ່ງໄດ້ສັງລວມໃນບົດນີ້.

- ❖ **<u>ຂໍ້ສະເໜີຂອງພາກທຸລະກິດເພື່ອການຟື້ນຟູເສດຖະກິດ:</u>**

15. ວິກິດການ COVID-19 ຈະເຮັດໃຫ້ອັດຕາຂະຫຍາຍຕົວຂອງເສດຖະກິດຫຼຸດລົງທົບໄປຕື່ມອີກ GDP ຄື ຈະຫຼຸດລົງຈາກ 5% ໃນປີ 2019 ມາຢູ່ໃນລະດັບ 1-2% ໃນປີ 2020 ແລະ ມີລັກສະນະແກ່ຍາວ ສະພາບການລະບາດຂອງພະຍາດໃນໂລກ ແລະ ໃນພາກພື້ນ ແລະ ບັນດາມາດຕະການເພື່ອສະກັດກັ້ນການແຜ່ລະບາດທີ່ກະທົບເຖິງການຜະລິດທຸລະກິດ ແລະ ເສດຖະກິດຂອງ ສປປ ລາວ.
16. ການຟື້ນຟູເສດຖະກິດຈາກວິກິດການ COVID-19 ຮຽກຮ້ອງໃຫ້ລັດຖະບານໄດ້ວາງນະໂຍບາຍ ແລະ ມາດຕະການສະເພາະເພື່ອສ້າງໄມ້ງັດເສດຖະກິດ ໃນການຜະລິດໃນທຸກໆຂະແໜງການໄດ້ຜະລິດຄືນໃໝ່ໂດຍມີປະສິດທິພາບສູງກວ່າເກົ່າ. ການຟື້ນຟູເສດຖະກິດອາດໃຊ້ເວລາເຖິງ 28 ເດືອນ ຕາມສະພາບຄວາມເປັນຈິງຂອງແຕ່ລະຂະແໜງການ. ຂະແໜງການທີ່ອາໄສຕະຫຼາດຕ່າງປະເທດໃນການຜະລິດເຊັ່ນ: ຂະແໜງການທ່ອງທ່ຽວ ແລະ ຂະແໜງການອຸດສາຫະກຳປຸງແຕ່ງເພື່ອການສົ່ງອອກຈະໃຊ້ເວລາໃນການຟື້ນຟູຫຼາຍກວ່າຂະແໜງການອື່ນໆ.
17. ນະໂຍບາຍ ແລະ ມາດຕະການ ການເງິນ ແລະ ການສະໜອງທຶນເປັນໄມ້ງັດທີ່ສຳຄັນກວ່າໝູ່ ໃຫ້ແກ່ການຟື້ນຟູທຸລະກິດທີ່ມີຄວາມຕ້ອງການທຶນໝູນວຽນເພື່ອຜະລິດຄືນໃໝ່. ນະໂຍບາຍ ແລະ ມາດຕະການແມ່ນຕ້ອງໄດ້ແກ້ໄຂໃຫ້ບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນມີສະພາບຄ່ອງ ໃນການສະໜອງທຶນກູ້ຢືມໃຫ້ແກ່ທຸລະກິດອັນສຳຄັນ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຄຳສັ່ງເລກທີ 238/ທຫລ ຂອງທະນາຄານແຫ່ງລັດ ເປັນເອກະພາບ. ມາດຕະການສະເພາະສຸກເສີນປະກອບດ້ວຍ ການຜ່ອນຜັນຂໍ້ກຳນົດຜ່ອນທຶນ, ການປ່ອຍເງິນກູ້ເປັນເງິນຕາຕ່າງປະເທດ, ການສ້າງກົນໄກສັບປ່ຽນສະກຸນເງິນຕາ, ການສ້າງກອງທຶນຄໍ້າປະກັນເງິນກູ້, ການປ່ອຍເງິນກູ້ສຸກເສີນໃຫ້ ສະຖາບັນການເງິນ (ສກຈ) ແລະ ການປ່ອຍເງິນກູ້ຂອງກອງທຶນສົ່ງເສີມ SME.
18. ອີງຕາມການລາຍງານຂອງກະຊວງການເງິນ ໃນຄະນະສະເພາະກິດ ແລະ ຂໍ້ມູນຈາກສາກົນ ບັນດາປະເທດທີ່ພັດທະນາແລ້ວມີຄວາມພ້ອມໃນການຜ່ອນຜັນ ການຊຳລະໜີ້ສິນໃຫ້ລູກໜີ້ຂອງຕົນທີ່ເປັນປະເທດດ້ອຍພັດທະນາຄື ສປປ ລາວ. ໃນນັ້ນເງື່ອນໄຂທຳອິດເພື່ອຮັບການຊ່ວຍເຫຼືອປະເທດ ລູກໜີ້ຈະຕ້ອງໄດ້ເຂົ້າຮ່ວມຈັດຕັ້ງປະຕິບັດໂຄງການກອງທຶນ ການເງິນສາກົນ (IMF) ທີ່ໄດ້ມີນະໂຍບາຍສະໜອງແຫຼ່ງທຶນໃຫ້ປະເທດດ້ອຍພັດທະນາ ທີ່ໄດ້ຮັບຜົນກະທົບຈາກ COVID-19 ຈຳນວນ 142 ລ້ານໂດລາສາຫາລັດຕໍ່ປີ ພ້ອມນັ້ນຍັງມີໂຄງການຈາກທະນາຄານໂລກ, ທະນາຄານພັດທະນາອາຊີ (ADB), ສະຫະພາບເອີຣົບ (EU) ແລະ ຈາກປະເທດເພື່ອນມິດອື່ນໆ. ສຄອ ແຫ່ງຊາດລາວ ຂໍສະໜັບສະໜູນໃຫ້ລັດຖະບານ ພິຈາລະນາເຂົ້າຮ່ວມໂຄງການຂອງ IMF ຍ້ອນເຫັນວ່າຈະເປັນການຊ່ວຍເຫຼືອແກ້ໄຂບັນຫາລະດັບມະຫາພາກເພື່ອການຟື້ນຟູ ແລະ ຂະຫຍາຍເສດຖະກິດຂອງ ສປປ ລາວ.
19. ຕະຫຼາດທຶນໃນ ສປປ ລາວ ແມ່ນຄັບແຄບ ແລະ ເຄື່ອນໄຫວແຕ່ຢູ່ໃນວົງລ້ອມຂອງສະຖາບັນການເງິນທີ່ມີຢູ່. ຜະລິດຕະພັນການເງິນປະເພດອື່ນຈະຕ້ອງໄດ້ຖືກຊຸກຍູ້ໃຫ້ເກີດມີການຂະຫຍາຍຕົວໃນ ສປປ ລາວ ໃນນັ້ນຄືຜະລິດຕະພັນ (ການເງິນ) ການສະໜອງທຶນເຂົ້າໃນຮຸ້ນຂອງທຸລະກິດ. ໃນ ສປປ ລາວ ການສະໜອງທຶນເຂົ້າໃນຮຸ້ນຂອງທຸລະກິດທີ່ບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ ແມ່ນຍັງບໍ່ມີ. ສຄອ ແຫ່ງຊາດລາວ ຈຶ່ງສະເໜີໃຫ້ມີການພັດທະນາການບໍລິການຮຸ້ນເອກະຊົນທີ່ກ່າວມານີ້. ໂດຍການອະນຸຍາດສ້າງກອງທຶນຮຸ້ນເອກະຊົນ (Private Equity-PE), ຜູ້ລົງທຶນໃນຮຸ້ນ (Venture Capital-VC) ແລະ ການບໍລິການອື່ນໆເພື່ອລະດົມທຶນເຂົ້າມາຟື້ນຟູເສດຖະກິດ.
20. ວິທີການໜຶ່ງທີ່ຈະຊ່ວຍໃຫ້ລັດຖະບານລະດົມທຶນໃນຮູບແບບເງິນສົດເຂົ້າສູ່ລະບົບເສດຖະກິດ ແມ່ນການຂາຍຊັບສິນບາງສ່ວນຂອງລັດຖະບານ ໃຫ້ແກ່ນັກລົງທຶນທີ່ເໝາະສົມ. ຊັບສິນຂອງລັດ (ຊັບສົມບັດຄົງທີ່) ມີທີ່ດິນ, ອາຄານ, ພະຫານະ, ເຄື່ອງຈັກ ແລະ ອື່ນໆ. ນອກຈາກນີ້ຍັງມີຊັບສິນການເງິນທີ່ເປັນຮຸ້ນໃນລັດວິສາຫະກິດ. ລັດຖະບານຄວນຂາຍຊັບສິນທີ່ບໍ່ໄດ້ນຳໃຊ້ ແລະ ມີສະພາບບໍ່ຄ່ອຍດີປານໃດ ແລະ ການເກັບຊັບສິນທີ່ມີປະໂຫຍດ ແລະ ມີສະພາບດີໄວ້ ຖ້າຜູ້ຊື້ຮຸ້ນຂອງວິສາຫະກິດຫາກ

ແມ່ນນັກລົງທຶນທີ່ມີຄຸນນະພາບ ມັນຈະນຳຜົນປະໂຫຍດໃຫ້ແກ່ວິສາຫະກິດນັ້ນ ແລະ ສ້າງລາຍຮັບເຂົ້າງົບປະມານທີ່ແນ່ນອນ. ຂະບວນການຂາຍນັ້ນຕ້ອງໄດ້ມາດຕະຖານສາກົນດ້ານຄວາມໂປ່ງໃສ ແລະ ຍຸດຕິທຳ.

21. ເພື່ອສາມາດຟື້ນຟູການຜະລິດທຸລະກິດ ແລະ ເສດຖະກິດ ສຄອ ແຫ່ງຊາດລາວໄດ້ຄຳນວນວ່າລັດຖະບານຄວນຈະຕ້ອງໄດ້ຈັດສັນທຶນຢ່າງຕ່ຳສຸດ 380 ລ້ານໂດລາສາຫາລັດ ຫຼື 2% ຂອງ GDP ປີ 2019 ເພື່ອມາຖົມຊຸມການໃຊ້ຈ່າຍງົບປະມານ, ຈັດສັນໃຫ້ພາກທຸລະກິດຜະລິດຄືນໃໝ່ ແລະ ປະຕິບັດພັນທະຕໍ່ສັງຄົມທີ່ຖືກກະທົບ. ໃນນັ້ນຕ້ອງການໃຫ້ພາກທຸລະກິດຈຳນວນປະມານ 152 ລ້ານໂດສາຫາລັດ ຫຼື 40% ຂອງຈຳນວນເງິນທີ່ລະດົມມາ. ການຈັດສັນທຶນແມ່ນສາມາດເຮັດໄດ້ໂດຍການຈັດສັນງົບປະມານຄືນໃໝ່ ແລະ ການກູ້ຢືມຈາກຕ່າງປະເທດ.

22. ນະໂຍບາຍ ແລະ ມາດຕະການດ້ານພາສີອາກອນທີ່ ສອຄ ແຫ່ງຊາດລາວ ໄດ້ສະເໜີປະກອບດ້ວຍ ການຫຼຸດອາກອນມູນຄ່າເພີ່ມເປັນ 5% (ຫຼຸດລົງ 50%) ແລະ ຍົກເວັ້ນອາກອນກຳໄລ ໃຫ້ແກ່ຂະແໜງການທີ່ຖືກກະທົບຫຼາຍ ແລະ ເປັນບູລິມາສິດໃນໄລຍະ 28 ເດືອນ ນັບແຕ່ເດືອນ 7 ປີ 2020 ເປັນຕົ້ນໄປ. ການຍົກເວັ້ນພາສີນຳເຂົ້າກົນຈັກ, ອຸປະກອນ, ເຄື່ອງປະກອບຂອງລະບົບໂຮງງານ, ໃຫ້ໂຮງງານທີ່ຕ້ອງການປັບປຸງ ຫຼື ຂະຫຍາຍເພື່ອໃຫ້ແທດເໝາະກັບຕະຫຼາດໃໝ່, ພ້ອມທັງຍົກເວັ້ນພາສີນຳເຂົ້າຂອງວັດຖຸປັດໃຈການຜະລິດກະສິກຳ. ນອກຈາກນັ້ນຍັງສະເໜີໃຫ້ທົບທວນຄືນການຄິດໄລ່ໂຄງສ້າງນ້ຳມັນຄືນໃໝ່ໂດຍການຫຼຸດຜ່ອນຄ່າທຳນຽມຕ່າງໆທີ່ເຮັດໃຫ້ລາຄານ້ຳມັນສູງ.

23. ສະເໜີໃຫ້ລັດຖະບານໄດ້ສືບຕໍ່ປັບປຸງນະໂຍບາຍ ແລະ ວາງມາດຕະການເພື່ອປັບປຸງແວດລ້ອມທຸລະກິດໃຫ້ດີຂຶ້ນ ເຮັດໃຫ້ລະດັບການດຳເນີນທຸລະກິດໄດ້ຫຼຸດລົງຈາກທີ່ 154 ໂດຍສະເພາະແມ່ນການສືບຕໍ່ນຳໃຊ້ເວທີທຸລະກິດລາວ (LBF) ເປັນເວທີ ແລະ ເຄື່ອງມືໃນການແກ້ໄຂບັນຫາ ແລະ ຂໍ້ຈຳກັດຮ່ວມກັບພາກທຸລະກິດ. ສິ່ງສຳຄັນອີກຢ່າງໜຶ່ງແມ່ນການເພີ່ມທະວີການປະຕິບັດຄຳສັ່ງເລກທີ 02/ນຍ ແລະ ການຈັດຕັ້ງຄະນະປະສານງານພາກລັດ ແລະ ພາກທຸລະກິດ ເພື່ອຕິດຕາມປະເມີນຜົນການຈັດຕັ້ງປະຕິບັດມະຕິດັ່ງກ່າວ.

24. ເພື່ອໃຫ້ການຟື້ນຟູເສດຖະກິດ ໃຫ້ຖືກຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ, ມີຄວາມຮຽກຮ້ອງຕ້ອງການໃຫ້ພາກລັດ ແລະ ພາກທຸລະກິດສ້າງພັນທະພາບໃຫ້ສະໜິດແໜ້ນຂຶ້ນ ເພື່ອການວາງແຜນພັດທະນາ, ຈັດຕັ້ງປະຕິບັດ, ຕິດຕາມ ແລະ ປະເມີນຜົນບັນຫາແຜນງານ ແລະ ໂຄງການຂອງລັດຖະບານ. ພັນທະພາບລັດ-ທຸລະກິດແມ່ນຕ້ອງໄດ້ປັບປຸງໃນການຊຸກຍູ້ສົ່ງເສີມການຜະລິດສິນຄ້າ, ການຊົມໃຊ້ຜະລິດຕະພັນຢູ່ພາຍໃນ ແລະ ການຄຸ້ມຄອງການນຳເຂົ້າສິນຄ້າອຸປະໂພກ (ຕາມຂໍ້ຕົກລົງເລກທີ 51/ນຍ) ພ້ອມທັງໃນການພັດທະນາລະບົບການສຶກສາເຕັກນິກວິຊາຊີບ (TVET) ແລະ ໃນການພັດທະນາ ແລະ ການໂຄສະນາການທ່ອງທ່ຽວ.

## ❖ **ແຜນການໃນຕໍ່ໜ້າ**

25. ສຄອ ແຫ່ງຊາດລາວ ຈະໄດ້ສືບຕໍ່ແຜນການໃນຕໍ່ໜ້າ ໃນການຕິດຕາມຜົນກະທົບຂອງວິກິດການ COVID-19 ຕໍ່ທຸລະກິດ ແລະ ລາຍງານໃຫ້ຄະນະສະເພາະກິດຂອງລັດຖະບານເປັນປະຈຳ. ສຄອ ແຫ່ງຊາດລາວ ຈະໄດ້ຕິດຕາມການພິຈາລະນານະໂຍບາຍ ແລະ ມາດຕະການສະເພາະເພື່ອຟື້ນຟູການຜະລິດຄືນໃໝ່ຂອງລັດຖະບານ ແລະ ເຜີຍແຜ່ນະໂຍບາຍ ແລະ ມາດຕະການໃໝ່ໃຫ້ແກ່ຜູ້ປະກອບການທຸລະກິດ. ສຄອ ແຫ່ງຊາດລາວ ຍັງຈະໄດ້ສ້າງ ແລະ ຈັດຕັ້ງປະຕິບັດໂຄງການນຳລ່ອງ ເພື່ອລິເລີ່ມການຈັດຕັ້ງປະຕິບັດການຟື້ນຟູການຜະລິດຄືນໃໝ່ທີ່ປະກອບມີ: 1).ໂຄງການປັບປຸງລະບົບກູ້ຢືມໃຫ້ກຸ່ມຊາວສວນ ແລະ MSME ຢູ່ນະຄອນຫຼວງວຽງຈັນ; 2).ໂຄງການສະໜອງສິນເຊື່ອຈາກກອງທຶນ SME; 3).ໂຄງການພື້ນຟູທຸລະກິດທ່ອງທ່ຽວ; 4). ໂຄງການຟື້ນຟູອຸດສາຫະກຳປຸງແຕ່ງ; ແລະ 5). ໂຄງການສ້າງໜ່ວຍງານໃຫ້ຄຳປຶກສາຕໍ່ SME (SME Clinic) ທີ່ຖືກກະທົບຈາກ COVID-19. ສຸດທ້າຍ ສຄອ ແຫ່ງຊາດລາວ ຈະໄດ້ປັບປຸງເນື້ອໃນຂອງຍຸດທະສາດ ແລະ ແຜນການ 5 ປີ 2021-2025 ເພື່ອພັດທະນາຂະແໜງທຸລະກິດ ຂອງ ສຄອ ແຫ່ງຊາດລາວ ໃຫ້ແທດເໝາະກັບການປ່ຽນແປງສະພາບ ແລະ ຄວາມຕ້ອງການຈາກວິກິດການ COVID-19.

# I. ພາບລວມດ້ານເສດຖະກິດ ຂອງ ສປປ ລາວ.

## 1.1 ພາບລວມດ້ານເສດຖະກິດ.

ໃນໄລຍະກ່ອນພະຍາດ COVID-19 ລະບາດ ເສດຖະກິດມະຫາພາກຂອງ ສປປ ລາວ ແມ່ນມີທ່າຫຼຸດລົງຈາກການຂະຫຍາຍຕົວໃນລະດັບ 8.5% ໃນປີ 2010 ມາຂະຫຍາຍຕົວຢູ່ລະດັບ 6 ເຖິງ 5% ໃນປີ 2019. ທີ່ເນື່ອງມາຈາກສະພາບບໍ່ຄ່ອງທາງດ້ານການເງິນ ແລະແວດລ້ອມການອຳນວຍຄວາມສະດວກໃຫ້ແກ່ການຜະລິດທຸລະກິດທີ່ຢູ່ໃນລະດັບຕ່ຳ, ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງໃນປີ 2019 ໄດ້ເຮັດໃຫ້ການຜະລິດກະສິກຳ ແລະ ການຜະລິດພະລັງງານໄຟຟ້ານ້ຳຕົກໄດ້ຖືກກະທົບຢ່າງຮ້າຍແຮງ ແລະ ເປັນສາເຫດເຮັດໃຫ້ການຂະຫຍາຍຕົວທາງດ້ານເສດຖະກິດແມ່ນຫຼຸດລົງໄປອີກຕື່ມ.

ໃນປີ 2019 ຜົນຜະລິດຕໍ່ຫົວຄົນ (GDP per capita) ແມ່ນ 2,568 ໂດລາສະຫະລັດ ຈຶ່ງເຮັດໃຫ້ ສປປ ລາວ ຖືກຈັດເປັນປະເທດທີ່ມີລາຍຮັບປານກາງລະດັບຕ່ຳ (Lower Middle Income Country) ທີ່ເປັນເງື່ອນໄຂໜຶ່ງໃຫ້ປະເທດຫຼຸດພົ້ນອອກຈາກບັນຊີປະເທດດ້ອຍພັດທະນາ.

ລັດຖະບານມີນະໂຍບາຍເສດຖະກິດທີ່ຢາກຫຼຸດຜ່ອນການຂຸດຄົ້ນຊັບພະຍາກອນທຳມະຊາດ ໂດຍການຂຸດຄົ້ນປ່າໄມ້ ແລະ ບໍ່ແຮ່ ໄປພັດທະນາເສດຖະກິດທີ່ມີຜົນປະໂຫຍດໃຫ້ປວງຊົນ, ສ້າງລາຍຮັບ ແລະ ວຽກເຮັດງານທຳໃນສັງຄົມ ໂດຍການເລັ່ງຈຸດສຸມໃນການພັດທະນາອຸດສາຫະກຳການກະເສດ, ອຸດສາຫະກຳປຸງແຕ່ງ ແລະ ບັນດາອຸດສາຫະກຳ ແລະ ກິດຈະກຳການບໍລິການທີ່ປົ່ນອ້ອມ, ຈຸດສຸມເພື່ອຂະຫຍາຍເສດຖະກິດແມ່ນພັດທະນາພາກທຸລະກິດຂະໜາດນ້ອຍ, ຂະໜາດກາງ (SME) ແລະ ຈຸນລະວິສາຫະກິດ (MSME) ທີ່ກວມເອົາ 98% ຂອງວິສາຫະກິດໃນ ສປປ ລາວ ແລະ ລ້ວນແລ້ວແຕ່ເປັນວິສາຫະກິດຈາກພາກເອກະຊົນ.

ຂະແໜງເສດຖະກິດຕົ້ນຕໍຍັງແມ່ນຂະແໜງການກະສິກຳທີ່ກວມເອົາ 16% ຂອງ GDP ແລະ ນຳໃຊ້ 2/3 ຂອງກຳລັງແຮງງານ, ຂະແໜງການອຸດສາຫະກຳໂດຍສະເພາະອຸດສາຫະກຳປຸງແຕ່ງ ແມ່ນມີທ່າຂະຫຍາຍຕົວສູງ ແລະ ໄດ້ກວມເອົາ 31.5% ຂອງ GDP ສ່ວນຂະແໜງການບໍລິການ ທີ່ລວມມີຂະແໜງການທ່ອງທ່ຽວແມ່ນມີທ່າຂະຫຍາຍຕົວເຊັ່ນດຽວກັນ ແລະ ໄດ້ກວມເອົາ 42% ຂອງ GDP ຕາມສະຖິຕິປີ 2018 ຂະແໜງການ ແລະ ກິດຈະການເສດຖະກິດທີ່ປະກອບເຂົ້າໃນ GDP ລວມມີຄື: ການຄ້າ ແລະ ສ້ອມແປງ ກວມເອົາ 14%, ພະລັງງານໄຟຟ້າ ກວມເອົາ 11%, ການຜະລິດກະສິກຳ ກວມເອົາ 9.7%, ການຜະລິດບໍ່ແຮ່ ກວມເອົາ 8.5%, ການກໍ່ສ້າງ ກວມເອົາ 7.9% ແລະ ອະສັງຫາລິມະຊັບ ກວມເອົາ 6.7%.

ໃນຕົ້ນປີ 2020 ສະພາບການແຜ່ລະບາດຂອງພະຍາດ COVID-19 ແລະ ບັນດາມາດຕະການທີ່ລັດຖະບານລາວ ແລະ ຂອງຫຼາຍໆປະເທດ ໄດ້ວາງໄວ້ເພື່ອຕ້ານກັບການແຜ່ລະບາດຂອງພະຍາດດັ່ງກ່າວ ໄດ້ກະທົບເຖິງການຜະລິດຢູ່ ສປປ ລາວ ຢ່າງແນ່ນອນ. ຂະແໜງການທີ່ຖືກຜົນກະທົບຫຼາຍກວ່າໝູ່ແມ່ນຂະແໜງການທ່ອງທ່ຽວ, ຂະແໜງການອຸດສາຫະກຳປຸງແຕ່ງ ລວມເຖິງການຜະລິດກະສິກຳເພື່ອສົ່ງອອກ.

## 1.2 ພາບລວມຂອງທຸລະກິດ.

ໂຄງປະກອບຂອງການຜະລິດທຸລະກິດໃນ ສປປ ລາວ ປະກອບດ້ວຍ 166,000 ວິສາຫະກິດ ທີ່ໄດ້ຈົດທະບຽນຖືກຕ້ອງເປັນທາງການ ແລະ ອີງຕາມການຂາດຄະເນຂອງ ສຄອ ແຫ່ງຊາດ ຍັງມີປະມານ 300,000 ຫົວໜ່ວຍວິສາຫະກິດທີ່ເຄື່ອນໄຫວນອກລະບົບ ຫຼື ເຄິ່ງລະບົບ.

ໃນໂຄງປະກອບດັ່ງກ່າວກວມເອົາ 98% ຂອງວິສາຫະກິດເປັນທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ (SME), ໃນນັ້ນ 91.5% ເປັນທຸລະກິດເອກະຊົນທີ່ອອກຊື່ຄົນລາວ, 8% ທີ່ເປັນທຸລະກິດຕ່າງປະເທດ ແລະ 0.5% ເປັນລັດວິສາຫະກິດ, ວິສາຫະກິດສ່ວນໃຫຍ່ຕັ້ງຢູ່ໃນນະຄອນຫຼວງວຽງຈັນ (32%) ແລະ ໄດ້ຈຳນວນໃນແຕ່ລະແຂວງດັ່ງຕາຕາລາງລຸ່ມນີ້:

**ຕາຕາລາງ 1.1: ຫົວໜ່ວຍວິສາຫະກິດແບ່ງເປັນແຂວງ ແລະ ນະຄອນຫຼວງວຽງຈັນ**

| ລ/ດ | ຈຳນວນແຂວງໃນ ສປປ ລາວ | ຈຳນວນ ຫົວໜ່ວຍວິສາຫະກິດ | ຄິດໄລ່ເປັນ% |
|---|---|---|---|
| 1 | ຄຳມ່ວນ | 6,491 | 3.9% |
| 2 | ຈຳປາສັກ | 12,531 | 7.5% |
| 3 | ຊຽງຂວາງ | 8,972 | 5.3% |
| 4 | ນະຄອນຫຼວງວຽງຈັນ | 52,964 | 31.8% |
| 5 | ບໍລິຄຳໄຊ | 4,513 | 2.7% |
| 6 | ບໍ່ແກ້ວ | 4,931 | 2.9% |
| 7 | ຜົ້ງສາລີ | 2,038 | 1.2% |
| 8 | ວຽງຈັນ | 13,377 | 8% |
| 9 | ສະຫວັນນະເຂດ | 9,814 | 5.8% |
| 10 | ສາລະວັນ | 5,476 | 3.2% |
| 11 | ຫົວພັນ | 5,794 | 3.4% |
| 12 | ຫຼວງນ້ຳທາ | 3,752 | 2.2% |
| 13 | ຫຼວງພະບາງ | 13,665 | 8.2% |
| 14 | ອັດຕະປື | 2,299 | 1.3% |
| 15 | ອຸດົມໄຊ | 5,747 | 3.4% |
| 16 | ເຊກອງ | 1,754 | 1% |
| 17 | ໄຊຍະບູລີ | 10,087 | 6% |
| 18 | ໄຊສົມບູນ | 2,169 | 1.3% |
| **ລວມ** | | **166,374** | **100%** |

ຂໍ້ມູນຈາກກົມ: ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ, www.ned.gov.la

ວິສາຫະກິດການຄ້າ ຂາຍຍົກຂາຍຍ່ອຍແມ່ນກວມເອົາເຖິງ 53.6% ຂອງວິສາຫະກິດ, ສະພາບດັ່ງກ່າວສະແດງໃຫ້ເຫັນວ່າການຜະລິດພາຍໃນແມ່ນຍັງຕ່ຳ ແລະ ມີການເຄື່ອນໄຫວການຄ້າລະຫວ່າງປະເທດໃນລະດັບສູງ ພ້ອມທັງການບໍລິໂພກສິນຄ້າມາຈາກຕ່າງປະເທດຢູ່ໃນລະດັບສູງ, ວິສາຫະກິດກະສິກຳມີຢູ່ 9% ຂອງຈຳນວນວິສາຫະກິດ, ອຸດສາຫະກຳປຸງແຕ່ງມີພຽງແຕ່ 5% ຂອງຈຳນວນວິສາຫະກິດ, ໂຮງແຮມ ແລະ ຮ້ານອາຫານ ກວມເອົາ 9.2% ຂອງວິສາຫະກິດ ແລະ ບໍລິສັດກໍ່ສ້າງ 6.5% ຂອງຈຳນວນວິສາຫະກິດ ລວມໂຄງປະກອບຂອງວິສາຫະກິດຕາມຂະແໜງການແມ່ນສະແດງຢູ່ໃນຕາຕາລາງລຸ່ມນີ້:

**ຕາຕາລາງ 1.2: ຫົວໜ່ວຍວິສາຫະກິດຕາມຂະແໜງການ**

| **ການລາຍງານໂດຍຂະແໜງການທີ່ກ່ຽວຂ້ອງ** | **ຈຳນວນ ກິດຈະກຳ ວິສາຫະກິດ** |
|---|---|
| ກະສິກຳ, ປ່າໄມ້ ແລະ ການປະມົງ | 35,598 |
| ການກໍ່ສ້າງ | 19,369 |
| ການຂົນສົ່ງ ແລະ ສາງສິນຄ້າ | 37,711 |
| ການຄ້າ ຂາຍຍົກ ແລະ ຂາຍຍ່ອຍ; ສ້ອມແປງລົດຍົນ ແລະ ລົດຈັກ | 253,270 |
| ການບໍລິຫານມວນຊົນ ແລະ ການປ້ອງກັນຊາດ, ການປົກປ້ອງສັງຄົມ ແບບບັງຄັບ | 37 |
| ການສະໜອງ ໄຟຟ້າ, ອາຍແກັສ, ອາຍຮ້ອນ, ແລະ ອາກາດປັບແຕ່ງ | 624 |
| ການສະໜອງນໍ້າ, ລະບາຍນໍ້າເສຍ, ການບໍລິຫານຈັດການແລະການເຄື່ອນໄຫວ ບຳບັດ ສິ່ງເສດເຫຼືອ | 418 |
| ການສຶກສາ | 3,097 |
| ການເຄື່ອນໄຫວ ຂອງບັນດາອົງການຈັດຕັ້ງສາກົນ ແລະ ສະຖານທູດ | 1 |
| ການເຄື່ອນໄຫວ ດ້ານ ອະສັງຫາລິມະຊັບ | 3,773 |
| ການເຄື່ອນໄຫວ ດ້ານການເງິນ ແລະ ການປະກັນໄພ | 2,197 |
| ການເຄື່ອນໄຫວ ບໍລິການ ສະໜັບສະໜູນ ແລະ ຄຸ້ມຄອງບໍລິຫານ | 11,190 |
| ການເຄື່ອນໄຫວກ່ຽວກັບສຸຂະພາບມະນຸດ ແລະ ວຽກງານທາງສັງຄົມ | 1,404 |
| ການເຄື່ອນໄຫວດ້ານ ສາຍວິຊາຊີບ, ວິທະຍາສາດ ແລະ ເຕັກນິກ | 8,633 |
| ການເຄື່ອນໄຫວບໍລິການອື່ນໆ | 14,023 |
| ການເຄື່ອນໄຫວໃຫ້ທີ່ພັກເຊົາ ແລະ ບໍລິການ ອາຫານ | 30,510 |
| ການເຄື່ອໄຫວຂອງບັນດາຄົວເຮືອນ ທີ່ເປັນນາຍຈ້າງ, ການເຄື່ອນໄຫວ ຜະລິດສິນຄ້າ ແລະ ບໍລິການ ທີ່ບໍ່ສາມາດແຍກໄດ້ ຂອງ ບັນດາຄົວເຮືອນ ສຳລັບຊົມໃຊ້ເອງ | 44 |
| ຂໍ້ມູນຂ່າວສານ ແລະ ການຕິດຕໍ່ສື່ສານ | 6,375 |
| ສິລະປະ, ການບັນເທີງ ແລະ ພັກຜ່ອນ | 2,732 |
| ອຸດສາຫະກຳບໍ່ແຮ່ ແລະ ການຂຸດຄົ້ນ | 3,578 |
| ອຸດສາຫະກຳປຸງແຕ່ງ | 33,220 |
| **ລວມ** | **467,804** |

ຂໍ້ມູນຈາກ: ຕົວເລກລວມກິດຈະກຳວິສາຫະກິດຫຼາຍກວ່າ ຈຳນວນວິສາຫະກິດ ເນື່ອຈາກວິສາຫະກິດໜຶ່ງສາມາດມີຫຼາຍກິດຈະກຳ ໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ,www.ned.gov.la.

ດັ່ງທີ່ໄດ້ຊີ້ແຈງຂ້າງເທິງນີ້ ທຸລະກິດເອກະຊົນໃນ ສປປ ລາວ ຍັງບໍ່ທັນຂະຫຍາຍຕົວ ມີລັກສະນະກຸ້ມຕົນເອງ, ຜະລິດຕະພາບ ແລະ ທັດສະນະແຂ່ງຂັນຕໍ່ສາກົນແມ່ນຍັງຕໍ່າຫຼາຍ ດັ່ງນັ້ນ ຈຶ່ງຕ້ອງການໃຫ້ມີການຊ່ວຍເຫຼືອຫຼາຍດ້ານເພື່ອສາມາດຂະຫຍາຍຕົວໄດ້.

ນະໂຍບາຍຂອງລັດຖະບານໃຫ້ຫຼຸດຜ່ອນການຂຸດຄົ້ນຊັບພະຍາກອນທຳມະຊາດ ໄປສຸ່ມໃສ່ການຜະລິດກະສິກຳ, ອຸດສາຫະກຳປຸງແຕ່ງ ແລະ ການບໍລິການແມ່ນຖືກຕ້ອງ ແຕ່ຍັງຂາດຫຼາຍປັດໄຈເພື່ອຊຸກຍູ້ການຜະລິດຂອງພາກທຸລະກິດກໍ່ຄື SME ແລະ MSME ສິ່ງກີດຂວາງອັນໃຫຍ່ຫຼວງກວ່າໝູ່ແມ່ນສະພາບແວດລ້ອມທີ່ອຳນວຍຄວາມສະດວກໃຫ້ແກ່ການດຳ

ເນີນທຸລະກິດແມ່ນຢູ່ໃນລະດັບຕ່ຳທີ່ສຸດ ຍົກຕົວຢ່າງການສະເໜີສ້າງຕັ້ງວິສາຫະກິດກໍຄືການລົງທຶນໃນການຜະລິດ ແລະ ການດຳເນີນທຸລະກິດໃນທຸກຂະແໜງການມີຂໍ້ຫຍຸ້ງຍາກ, ການຜະລິດຢູ່ ສປປ ລາວ ມີຕົ້ນທຶນສູງ ລວມເຖິງ ສປປ ລາວ ເປັນປະເທດທີ່ບໍ່ມີທາງອອກສູ່ທະເລເຮັດໃຫ້ການຂົນສົ່ງ ແລະ ໂລຈິສຕິກ ຢູ່ໃນລະດັບສູງສົມຄວນ.

ສປປ ລາວ ແມ່ໄດ້ຖືກຈັດໃນອັນດັບດັ່ງລຸ່ມນີ້:

- ອັນດັບການອຳນວຍຄວາມສະດວກໃຫ້ທຸລະກິດຂອງທະນາຄານໂລກ ແມ່ນອັນດັບທີ 154
- ອັນດັບທັດສະນະແຂ່ງຂັນ (Competitive Index) ແມ່ນອັນດັບທີ 113
- ອັນດັບການສໍ້ລາດບັງຫຼວງ ແມ່ນອັນດັບທີ 130

ໂດຍສັງລວມແລ້ວສະພາບດັ່ງກ່າວນີ້ ແມ່ນຍັງໄດ້ສະກັດກັ້ນການລົງທຶນທີ່ມີຄຸນະພາບໃນຂະແໜງການທີ່ເປັນເປົ້າໝາຍໃໝ່ເຊັ່ນ: ຂະແໜງການກະສິກຳ, ອຸດສາຫະກຳການກະເສດ, ອຸດສາຫະກຳປຸງແຕ່ງ, ອຸດສາຫະກຳທ່ອງທ່ຽວ ແລະ ທຸລະກິດທີ່ປິ່ນອ້ອມຂະແໜງການດັ່ງກ່າວ.

ໃນໄລຍະ 2-3 ປີ ຫຼັງນີ້ ລັດຖະບານກໍໄດ້ເອົາໃຈໃສ່ປັບປຸງບັນດາກົນໄກການຄຸ້ມຄອງ ແລະ ລະບົບການສົ່ງເສີມພາກເອກະຊົນ, ມາດຕະການຕໍ່ຕ້ານພະຍາດ COVID-19 ແລະ ມາດຕະການຟື້ນຟູຫຼັກຈາກການລະບາດຂອງພະຍາດນັ້ນ ເປັນກາລະໂອກາດໃຫ້ມີການປັບປຸງບັນດານະໂຍບາຍ ແລະ ກົນໄກເພື່ອສົ່ງເສີມການຜະລິດຂອງພາກທຸລະກິດຢູ່ໃນ ສປປ ລາວ ດັ່ງທີ່ໄດ້ອະທິບາຍໃນເອກະສານສະບັບນີ້.

# II. ຜົນກະທົບຕໍ່ພາກທຸລະກິດ.

## 2.1 ການສໍາຫຼວດຜົນກະທົບຕໍ່ພາກທຸລະກິດຂອງ ສຄອ ແຫ່ງຊາດລາວ.

ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດລາວ ໄດ້ສໍາຫຼວດຜົນກະທົບຂອງ COVID-19 ຕໍ່ຜູ້ປະກອບການ ເຊິ່ງຜູ້ປະກອບການທີ່ເຂົ້າຮ່ວມການສໍາຫຼວດລວມມີທັງຜູ້ປະກອບການລາວ ແລະ ຜູ້ປະກອບການຕ່າງປະເທດທີ່ໄດ້ລົງທຶນ ແລະ ເຄື່ອນໄຫວທຸລະກິດໃນທຸກໆຂະແໜງການເສດຖະກິດໃນ ສປປ ລາວ. ການເກັບກໍາຂໍ້ມູນແມ່ນຜ່ານແບບຟອມ ອອນລາຍ ຜ່ານເວັບໄຊຂອງສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງ ສປປ ລາວ ໂດຍໃຊ້ການໂຄສະນາຜ່ານສື່ທາງສັງຄົມອອນລາຍ, ບັນດາໜັງສືພິມຕ່າງໆ, ໄລຍະການສໍາຫຼວດແມ່ນໄດ້ປະຕິບັດແຕ່ວັນທີ 06 ເມສາ ເຖິງ 27 ເມສາ 2020 ແລະ ໄດ້ມີຜູ້ເຂົ້າຮ່ວມຕອບແບບສອບຖາມທັງໝົດ 474 ຄົນ, ຜົນຂອງການສໍາຫຼວດແມ່ນສະຫຼຸບໂດຍຫຍໍ້ດັ່ງຕໍ່ໄປນີ້:

- (1) ຄວາມສ່ຽງຕໍ່ການຢຸດກິດຈະການທຸລະກິດ: ມີຜູ້ປະກອບການ 65% ທີ່ເຫັນວ່າຕົນເອງ ມີຄວາມສ່ຽງໃນລະດັບໃດໜຶ່ງ ທີ່ຈະຢຸດກິດຈະການ, ເຊິ່ງ ໃນນັ້ນ ມີຜູ້ປະກອບການ 36% ທີ່ຄາດວ່າຕົນເອງມີຄວາມສ່ຽງ 100% ທີ່ຈະຢຸດກິດຈະການ, ມີຜູ້ປະກອບການ 14% ຄາດວ່າຕົນເອງມີຄວາມສ່ຽງ 50% ທີ່ຈະຢຸດກິດຈະການ ແລະ ມີ 5% ຂອງຜູ້ປະກອບການ ທີ່ຄາດວ່າຕົນເອງມີຄວາມສ່ຽງ 30% ທີ່ຈະຢຸດກິດຈະການ. ຂະແໜງການທີ່ມີທີ່ມີຄວາມສ່ຽງສູງກວ່າໝູ່ໃນການຢຸດກິດຈະການ ແມ່ນຂະແໜງການບໍລິການທີ່ພັກເຊົາ ແລະ ອາຫານ ແລະ ຂະແໜງການບໍລິການ ຂົນສົ່ງ ແລະ ສາງສິນຄ້າ. ສ່ວນຂະແໜງການບໍລິການດ້ານການເງິນ ແລະ ປະກັນໄພ ແມ່ນຄາດວ່າຈະບໍ່ໄດ້ມີການປິດກິດຈະການທຸລະກິດໃນໄລຍະພະຍາດລະບາດ.

**ຮູບທີ 2.1: ຄວາມສ່ຽງຕໍ່ການຢຸດກິດຈະການ ສົມທຽບລະຫວ່າງຂະແໜງການທຸລະກິດ**




**ໝາຍເຫດ:**
1. ຜູ້ປະກອບການຖືກຖາມວ່າ: 1) ປະເພດຂອງທຸລະກິດຂອງທ່ານແມ່ນຫຍັງ? ແລະ 2) ອີງໃສ່ສະຖານະການການແຜ່ລະບາດຂອງ ໂຄວິດ 19 ຄວາມສ່ຽງຕໍ່ການສູນເສຍ ຫຼື ຕ້ອງຢຸດເຊົາ ທຸລະກິດ/ກິດຈະການຮ້ານຄ້າ ຂອງທ່ານ ມີຫຼາຍປານໃດ?
2.ຂະແໜງການເຫຼົ່ານີ້ ແມ່ນ ຂະແໜງການທີ່ມີ ຈໍານວນຜູ້ຕອບແບບສອບຖາມເກີນ 10 ຄົນຂຶ້ນໄປ

***ທີ່ມາ:*** ຄິດໄລ່ຈາກຜົນໄດ້ຮັບຈາກແບບສໍາຫຼວດຜົນກະທົບຂອງ ໂຄວິດ-19 ຕໍ່ທຸລະກິດ ໂດຍ ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດລາວ.

- (2) ອຸປະສັກຕໍ່ການດໍາເນີນທຸລະກິດ: ອຸປະສັກທີ່ເປັນຜົນມາຈາກການແຜ່ລະບາດຂອງພະຍາດ ໂຄວິດ-19 ທີ່ຜູ້ປະກອບການສ່ວນໃຫຍ່ເຫັນວ່າເປັນອຸປະສັກຕົ້ນຕໍ ຕໍ່ການສືບຕໍ່ດໍາເນີນກິດຈະການ ແມ່ນ : (1) ການບໍ່ສາມາດ

ຈ່າຍເງິນເດືອນພະນັກງານ, (2) ການບໍ່ສາມາດຊໍາລະດອກເບ້ຍ ແລະ ຕົ້ນທຶນເງິນກູ້ ແລະ (3) ຄວາມຕ້ອງການສິນຄ້າ ແລະ ການບໍລິການຫຼຸດລົງ ດັ່ງທີ່ໄດ້ສະແດງຢູ່ໃນຮູບພາບລຸ່ມນີ້:

**ຮູບທີ 2.2: ອຸປະສັກໃນການດໍາເນີນທຸລະກິດ**




**ໝາຍເຫດ:**

1. ຜູ້ປະກອບການຖືກຖາມວ່າ: ດ້ານໃດແດ່ ທີ່ທ່ານຄິດວ່າໄດ້ຮັບຜົນກະທົບຫຼາຍກວ່າໝູ່ ຈາກການແຜ່ລະບາດຂອງ ໂຄວິດ 19? (ສາມາດເລືອກໄດ້ 0 ຫາ 3 ຕົວເລືອກ). ຈໍານວນຜູ້ຕອບແບບສອບຖາມໃນຂໍ້ນີ້ 474 ຄົນ, ຄໍາຕອບທີ່ຖືກເລືອກທັງໝົດ 1238 ຄໍາຕອບ

**ທີ່ມາ:** ຄິດໄລ່ຈາກຜົນໄດ້ຮັບຈາກແບບສໍາຫຼວດຜົນກະທົບຂອງ ໂຄວິດ-19 ຕໍ່ທຸລະກິດ ໂດຍ ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດລາວ.

- (3) ຜົນກະທົບຕໍ່ການຈ້າງງານ: ຈາກຜົນສໍາຫຼວດ ເຫັນໄດ້ວ່າ ມີຜູ້ປະກອບການເຖິງ 70% ທີ່ ຄາດວ່າຈະຕ້ອງໄດ້ປົດພະນັກງານ ອອກຈໍານວນໜຶ່ງ, ເຊິ່ງ 40% ຂອງຜູ້ປະກອບການ ແມ່ນຄາດວ່າຈະປົດແຮງງານອອກເກີນ 50% ຂອງຈໍານວນແຮງງານທັງໝົດ ແລະ 13% ຂອງຜູ້ປະກອບການ ແມ່ນຄາດວ່າຈະປົດແຮງງານ ອອກເກີນ 90% ຂອງຈໍານວນແຮງງານທັງໝົດ. ໃນນີ້ຍັງມີຜູ້ປະກອບການຈໍານວນ 30% ທີ່ຈະຮັກສາແຮງງານໄວ້ທັງໝົດ.

**ຮູບທີ 2.3: ຄວາມຈຳເປັນປິດຈຳນວນພະນັກງານ/ກຳມະກອນອອກຈາກງານ (ເປີເຊັນ)**




**ໝາຍເຫດ:**
1. ຜູ້ປະກອບການຖືກຖາມວ່າ: 1)ຈຳນວນພະນັກງານ ກ່ອນມີຜົນກະທົບ ຈາກການແຜ່ລະບາດ ໂຄວິດ 19 ມີຈັກຄົນ? ແລະ 2) ທ່ານຄາດວ່າ ຈະຕ້ອງຫຼຸດຈຳນວນພະນັກງານ ຫຼື ໃຫ້ອອກຈາກວຽກ ຈັກຄົນ ຍ້ອນຜົນກະທົບຂອງການແຜ່ລະບາດ ໂຄວິດ 19 ?. ຈຳນວນຜູ້ຕອບແບບສອບຖາມໃນຂໍ້ນີ້ 387 ຄົນ

**ທີ່ມາ:** ຄິດໄລ່ຈາກຜົນໄດ້ຮັບຈາກແບບສຳຫຼວດຜົນກະທົບຂອງ ໂຄວິດ-19 ຕໍ່ທຸລະກິດ ໂດຍ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ.

- (4) ຜົນກະທົບຂອງລາຍຮັບຂອງວິສາຫະກິດ ໃນໄຕມາດທີ 1 ຂອງປີ 2020 ຖ້າທຽບໃສ່ປີ 2019 ແມ່ນເຫັນວ່າ 83% ຂອງຜູ້ປະກອບການໄດ້ແຈ້ງວ່າມີລາຍຮັບຫຼຸດລົງ ໃນນັ້ນລວມມີ 27.50% ໄດ້ມີລາຍຮັບຫຼຸດລົງເຖິງ 81-100%.

**ຮູບທີ 2.4: ຜົນກະທົບຕໍ່ລາຍຮັບຂອງວິສາຫະກິດ**




**ໝາຍເຫດ:**
1. ຜູ້ປະກອບການຖືກຖາມວ່າ: 1)ຈຳນວນພະນັກງານ ກ່ອນມີຜົນກະທົບ ຈາກການແຜ່ລະບາດ ໂຄວິດ 19 ມີຈັກຄົນ? ແລະ 2) ລາຍຮັບຈາກທຸລະກິດ/ການຄ້າ ຂອງທ່ານ ຂອງ ໄຕມາດທີ 1 ຂອງປີ 2019? ຈຳນວນຜູ້ຕອບແບບສອບຖາມໃນຂໍ້ນີ້ 291 ຄົນ

**ທີ່ມາ:** ຄິດໄລ່ຈາກຜົນໄດ້ຮັບຈາກແບບສຳຫຼວດຜົນກະທົບຂອງ ໂຄວິດ-19 ຕໍ່ທຸລະກິດ ໂດຍ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ.

ຈາກການສຳຫຼວດ ເຫັນໄດ້ວ່າ ຜູ້ປະກອບການ ແມ່ນໄດ້ຮັບຜົນກະທົບຕໍ່ລາຍຮັບວິສາຫະກິດ ບໍ່ຫຼາຍກໍ່ໜ້ອຍ ຍ້ອນການລະບາດຂອງ COVID-19 ແລະ ໄດ້ກຽມພ້ອມທີ່ຈະຢຸດກິດຈະການທຸລະກິດ, ຫຼຸດຜ່ອນຈຳນວນພະນັກງານຂອງຕົນລົງ. ອຸປະສັກຕົ້ນຕໍຂອງການສືບຕໍ່ດຳເນີນທຸລະກິດ ແມ່ນຄວາມສາມາດໃນການຈ່າຍເງິນເດືອນພະນັກງານ, ຄວາມສາມາດໃນການຊຳລະດອກເບ້ຍ ແລະ ຕົ້ນທຶນເງິນກູ້ ແລະ ຄວາມຕ້ອງການຂອງສິນຄ້າ ແລະ ການບໍລິການທີ່ຫຼຸດລົງຂອງຕະຫຼາດ.

ອີງຕາມ ຜົນໄດ້ຮັບຈາກການສຳຫຼວດ ດັ່ງກ່າວ ເຫັນວ່າ ຄາດຄະເນຜົນກະທົບຕໍ່ລາຍລາຍຮັບໃນໄຕມາດທີ 1 ປີ 2020 ຂອງທຸລະກິດທີ່ໄດ້ຮັບຜົນກະທົບຫຼັກ ຈາກໂຄວິດ-19 ແມ່ນເທົ່າກັບປະມານ 1.17 ຕື້ໂດລາສະຫະລັດ (ບໍ່ລວມຜົນກະທົບຕໍ່ທຸລະກິດຂະແໜງການສະໜອງ ໄຟຟ້າ, ອາຍແກັສ ຕ່າງໆ ແລະ ຂະແໜງ ອຸດສາຫະກຳບໍ່ແຮ່ ແລະ ການຂຸດຄົ້ນ) ຫຼື

ເທົ່າກັບປະມານ 6% ຂອງຄາດຄະເນມູນຄ່າລວມຍອດຜະລິດຕະພັນພາຍໃນ (GDP) ຂອງ ສປປ ລາວ ຂອງປີ 2019. ໃນນີ້ ເຫັນວ່າ ຂະແໜງການທີ່ມີຜົນກະທົບສູງກວ່າໝູ່ ອີງຕາມຈຳນວນມູນຄ່າຄວາມເສຍຫາຍຕໍ່ລາຍຮັບ ແມ່ນ ຂະແໜງກະສິກຳ, ປ່າໄມ້ ແລະ ການປະມົງ ເຊິ່ງ ຄາດຄະເນຜົນເສຍຫາຍຕໍ່ກັບລາຍຮັບຂອງໄຕມາດທີ 1 ປີ 2020 ແມ່ນເທົ່າກັບປະມານ 292 ລ້ານໂດລາສະຫະລັດ.

ເຖິງຢ່າງໃດກໍ່ຕາມ ການຄາດຄະເນຜົນກະທົບດ້ານລາຍຮັບຕໍ່ພາກທຸລະກິດນີ້ ເປັນພຽງການຄາດຄະເນເບື້ອງຕົ້ນອີງໃສ່ສະຖິຕິຂໍ້ມູນໂຕເລກຂອງປີຜ່ານມາ, ແລະ ອີງໃສ່ບາງຂໍ້ສົມມຸດຕິຖານໃນການຄິດໄລ່, ບໍ່ໝາຍຄວາມວ່າຈະເປັນໂຕເລກຜົນກະທົບຕົວຈິງທີ່ເກີດຂຶ້ນໃນລະບົບເສດຖະກິດ ຂອງ ສປປ ລາວ. ຈຸດປະສົງຂອງການຄາດຄະເນຜົນກະທົບດ້ານລາຍຮັບຕໍ່ພາກທຸລະກິດ ນີ້ ແມ່ນ ເພື່ອປະກອບເປັນຂໍ້ມູນເພີ່ມເຕີມໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ ເຫັນເຖິງພາບລວມມູນຄ່າຄວາມເສຍຫາຍທີ່ເກີດຂຶ້ນຕໍ່ທຸລະກິດ ໃນ ສປປ ລາວ ແລະ ເພື່ອ ນຳໃຊ້ໃນການ ປະເມີນ, ກຳນົດນະໂຍບາຍ ຫຼື ມາດຕະການຊ່ວຍເຫຼືອເພື່ອຟື້ນຟູຈາກຜົນກະທົບຂອງພະຍາດໂຄວິດ-19 ທີ່ເໝາະສົມ ໃນໄລຍະສັ້ນນີ້. ໂຕເລກການຄາດຄະເນຜົນກະທົບດ້ານລາຍຮັບຕໍ່ພາກທຸລະກິດນີ້ ອາດຈະມີການປັບປ່ຽນເພີ່ມເຕີມ ໃນໄລຍະຕໍ່ໄປ ຖ້າຫາກວ່າການແຜ່ລະບາດຂອງພະຍາດໂຄວິດ-19 ມີການແກ່ຍາວເພີ່ມເຕີມ ທັງພາຍໃນປະເທດ ແລະ ໃນທົ່ວໂລກ.

ລາຍລະອຽດ ບົດລາຍງານຜົນໄດ້ຮັບຈາກການການສຳຫຼວດຜົນກະທົບ ຂອງ COVID-19 ຕໍ່ກັບພາກທຸລະກິດ, ສາມາດເບິ່ງໄດ້ໃນເອກະສານຊ້ອນທ້າຍຂອງບົດລາຍງານສະບັບນີ້.

ຜ່ານການສັງລວມແລ້ວ ຜົນກະທົບທີ່ມີຕໍ່ທຸລະກິດຈາກການລະບາດຂອງພະຍາດ COVID-19 ໄດ້ເຮັດໃຫ້ລະບົບທຸລະກິດໄດ້ຢຸດສະງັກ ໃນ 4 ດ້ານໄປພ້ອມໆກັນ, ໃນນັ້ນມີການຢຸດສະງັກດ້ານການເງິນ, ດ້ານການສະ ໜອງປັດໄຈການຜະລິດ, ດ້ານຄວາມຕ້ອງການຂອງຕະຫຼາດ ແລະ ຍັງມີຄວາມບໍ່ແນ່ນອນວ່າການແຜ່ລະບາດຈະມີໄລຍະເວລາເທົ່າໃດເຮັດໃຫ້ທຸລະກິດບໍ່ສາມາດວາງແຜນລ່ວງໜ້າໄວ້.

## 2.2 ຜົນກະທົບຕໍ່ທຸລະກິດຕາມຂະແໜງການທຸລະກິດ.

ບົດສັງລວມປະກອບມີ ຜົນກະທົບຕໍ່ຂະແໜງອຸດສາຫະກຳປຸງແຕ່ງ, ຂະແໜງກະສິກຳ ແລະ ອຸດສາຫະກຳກະເສດ, ຂະແໜງອຸດສາຫະກຳທ່ອງທ່ຽວ ແລະ ບໍ່ໄດ້ກວມເອົາອຸດສາຫະກຳໃຫຍ່ໃນຂະແໜງບໍ່ແຮ່ ແລະ ພະລັງງານພ້ອມດ້ວຍບັນດາລັດວິສາຫະກິດ.

### 2.2.1 ຜົນກະທົບຕໍ່ຂະແໜງອຸດສາຫະກຳປຸງແຕ່ງ.

ອີງຕາມບົດລາຍງານຂອງກົມອຸດສາຫະກຳ ແລະ ຫັດຖະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ, ປີ 2020 ຂະແໜງອຸດສາຫະກຳປຸງແຕ່ງມີມູນຄ່າການຜະລິດ 27,953 ຕື້ກີບ ແລະ ກວມເອົາ 9% ຂອງ GDP ໃນນັ້ນອຸດສາຫະກຳປຸງແຕ່ງທີ່ພົ້ນເດັ່ນປະກອບດ້ວຍອຸດສາຫະກຳປຸງແຕ່ງອາຫານ-ເຄື່ອງດື່ມ (ຜະລິດເຫຼົ້າ, ເບຍ, ນ້ຳດື່ມ, ນ້ຳອັດລົມ, ກາເຟ, ຊາ ແລະ ອາຫານ), ອຸດສາຫະກຳຕັດຫຍິບ, ອຸດສາຫະກຳວັດສະດຸກໍ່ສ້າງ ແລະ ອຸດສາຫະກຳໂລຫະພື້ນຖານທີ່ກວມເອົາ 60% ຂອງຈຳນວນອຸດສາຫະກຳປຸງແຕ່ງທັງໝົດ, ນອກຈາກກຸ່ມດັ່ງກ່າວຍັງມີອຸດສາຫະກຳປະກອບຊິ້ນສ່ວນອາໄຫຼ່, ເອເລັກໂຕນິກ ແລະ ເຍື່ອເຈ້ຍ ທີ່ກຳລັງຂະຫຍາຍຕົວເພື່ອການສົ່ງອອກ, ຕົວເລກການສົ່ງອອກສິນຄ້າອຸດສາຫະກຳປຸງແຕ່ງມີການຂະຫຍາຍໃນອັນດັບ 10.3% ຕໍ່ປີ ແຕ່ປີ 2016 ເປັນຕົ້ນມາ ແລະ ມີມູນຄ່າສົ່ງອອກເຖິງ 4.45 ຕື້ໂດລາສະຫະລັດ.

ໃນປີ 2019 ມີໂຮງງານທັງໝົດ 28,169 ແຫ່ງ ແບ່ງເປັນຂະໜາດໃຫຍ່ 745 ແຫ່ງ, ຂະໜາດກາງ 1,161 ແຫ່ງ, ຂະໜາດນ້ອຍ 9,819 ແຫ່ງ ແລະ ການຜະລິດອຸດສາຫະກຳແບບຄອບຄົວ (MSME) ຈຳນວນ 16,444 ແຫ່ງ, ຂະແໜງອຸດສາຫະກຳປຸງແຕ່ງໄດ້ສ້າງວຽກເຮັດງານທຳໃຫ້ 167,100 ຄົນ, ໃນນັ້ນ ອຸດສາຫະກຳອາຫານ ແລະ ເຄື່ອງດື່ມມີຄົນງານ 34,500 ຄົນ, ອຸດສາຫະກຳຕັດຫຍິບ 26,665 ຄົນ ແລະ ອຸດສາຫະກຳປຸງແຕ່ງແຮ່ທາດ 22,860 ຄົນ.

ອຸດສາຫະກຳປຸງແຕ່ງໄດ້ຮັບຜົນກະທົບຈາກການຢຸດສະງັກລວມມີ 4 ດ້ານດັ່ງທີ່ໄດ້ອະທິບາຍຜ່ານມາ, ສະພາບການກະທົບມີລັກສະນະດັ່ງລຸ່ມນີ້:

- ໃນໄລຍະເບື້ອງຕົ້ນຂອງການລະບາດຂອງພະຍາດ (ເດືອນມັງກອນ 2020) ມີຫຼາຍໂຮງງານເລີ່ມມີຜົນກະທົບຈາກການນຳສົ່ງສະໜອງປັດໃຈການຜະລິດ ແລະ ວັດຖຸດິບຈາກຕ່າງປະເທດ ໂດຍສະເພາະຈາກປະເທດ ສປ ຈີນ.
- ການສະໜອງປັດໃຈການຜະລິດຊັກຊ້າໄດ້ເຮັດໃຫ້ຫຼາຍໂຮງງານຜະລິດຊ້າລົງ, ຜະລິດຈຳນວນໜ້ອຍລົງ ແລະ ບໍ່ສາມາດຕອບສະໜອງຄວາມຕ້ອງການຂອງຕະຫຼາດ ກໍ່ຄືບໍ່ສາມາດນຳສົ່ງສິນຄ້າຕາມສັນຍາໄດ້.
- ມາດຕະການປິດໂຮງງານ ອີງຕາມມະຕິຄຳສັ່ງເລກທີ 06/ນຍ ໄດ້ເຮັດໃຫ້ ບັນດາໂຮງງານໄດ້ຢຸດຕິການຜະລິດ ແລະ ບໍ່ສາມາດສະໜອງສິນຄ້າຕາມສັນຍາພ້ອມທັງມີຄວາມສ່ຽງສູງທີ່ຈະຖືກປັບໃໝ ແລະ ຍົກເລີກສັນຍາໄລຍະຍາວ. ໂດຍສະເພາະອຸດສາຫະກຳຕັດຫຍິບແມ່ນໄດ້ຖືກປັບໄໝ, ຢຸດຕິສັນຍາຊື້ ແລະ ຜູ້ຊື້ແມ່ນໄດ້ໂອນສັນຍາໄປປະເທດໃກ້ຄຽງ, ເຊິ່ງມັນໄດ້ເຮັດໃຫ້ເສຍໂອກາດດ້ານເສດຖະກິດ ແລະ ມີຄວາມສ່ຽງສູງທີ່ລູກຄ້າຈະຍ້າຍໄປຜະລິດຢູ່ປະເທດອື່ນແບບຖາວອນ.
- ໃນເມື່ອມີການປິດໂຮງງານ ແລະ ການສົ່ງສິນຄ້າບໍ່ໄດ້ ຜູ້ປະກອບການກໍ່ບໍ່ມີລາຍຮັບ ຈຶ່ງມີຄວາມຈຳເປັນຫຼຸດຈຳນວນແຮງງານລົງ, ມີຫຼາຍໂຮງງານບໍ່ສາມາດຈ່າຍເງິນເດືອນໃຫ້ພະນັກງານຂອງຕົນ, ຍິ່ງໄປກວ່ານັ້ນຜູ້ປະກອບການຫຼາຍໂຮງງານກໍ່ບໍ່ສາມາດຈ່າຍຄ່າດອກເບ້ຍ ແລະ ຕົ້ນທຶນເງິນກູ້, ຈ່າຍຄ່າເຊົ່າສະຖານທີ່ ແລະ ສຳລະຄ່າອາກອນໃຫ້ແກ່ລັດຖະບານ.

ຜົນກະທົບຕໍ່ຂະແໜງອຸດສາຫະກຳປຸງແຕ່ງຍັງໄດ້ແຜ່ລາມໄປສູ່ບັນດາກິດຈະການ ຫຼືໂຮງງານການຜະລິດທີ່ປິ່ນອ້ອມບັນດາໂຮງງານປຸງແຕ່ງດັ່ງກ່າວ ໂດຍສະເພາະແມ່ນກິດຈະການທຸລະກິດທີ່ສະໜອງວັດຖຸປັດໃຈການຜະລິດ ແລະ ວັດຖຸດິບໃຫ້ແກ່ໂຮງງານທີ່ຢູ່ພາຍໃນປະເທດປະກອບມີຊາວສວນທີ່ຜະລິດໃຫ້ໂຮງງານ, ອຸດສາຫະກຳປຸງແຕ່ງໄມ້ ແລະ ປຸງແຕ່ງອະຫານ, ກິດຈະການຫຸ້ມຫໍ່, ການຂົນສົ່ງ ແລະ ລະບົບໂລຢິສຕິກ, ບໍລິສັດຂາຍຍົກ, ຂາຍຍ່ອຍ ແລະ ອື່ນໆ ທີ່ນອນຢູ່ໃນໂຄງປະກອບຂອງຕ່ອງໂສ້ການຜະລິດ ແລະ ການຈໍລະຈອນຈຳໜ່າຍຜະລິດຕະພັນຂອງອຸດສາຫະກຳປຸງແຕ່ງ.

**ຮູບທີ 2.5: ຜົນກະທົບຕໍ່ທຸລະກິດ-ການຢຸດສະງັກ 4 ດ້ານ**




ວິກິດການໃນຄັ້ງນີ້ ແມ່ນຮ້າຍແຮງຍ້ອນເຮັດໃຫ້ຕ່ອງໂສ້ທັງສອງເບື້ອງຄື: ເບື້ອງຄວາມຕ້ອງການ ແລະ ເບື້ອງການສະໜອງ, ມີບັນຫາ ແລະ ໄດ້ຢຸດສະງັກໄປພ້ອມກັບເປັນຜົນກະທົບທີ່ຮຸນແຮງ ແລະ ແກ່ຍາວ.ຮູບພາບລຸ່ມນີ້ສະແດງເຖິງຜົນກະທົບເຖິງໂຄງປະກອບການຜະລິດທຸລະກິດຕາມຄວາມສະໜອງ ແລະ ຕາມຕ້ອງການຂອງແຕ່ລະພາກສ່ວນ. ເຫັນໄດ້ວ່າຜົນກະທົບບໍ່ແມ່ນຈະກະທົບເຖິງທຸລະກິດເທົ່ານັ້ນ ແຕ່ຍັງກະທົບເຖິງການສະໜອງ ແລະ ຄວາມຕ້ອງການຂອງລັດຖະບານ ແລະ ຂອງຄົວເຮືອນ ກໍ່ຄືຂອງປະຊາຊົນໃນ ສປປ ລາວ.

**ຮູບທີ 2.6: ແຜນວາດສະແດງເສັ້ງທາງຜົນກະທົບຈາກ COVID-19 ຕໍ່ທຸລະກິດ**




## 2.2.2 ຜົນກະທົບຕໍ່ຂະແໜງກະສິກໍາ.

ຂະແໜງກະສິກໍາກວມເອົາພຽງແຕ່ 15.7% ຂອງ GDP ແລະ ມີທ່າຂະຫຍາຍຕົວຊ້າໃນລະບົບ 2.5% ໃນປີ 2018. ເຖິງຢ່າງໃດກໍ່ຕາມ ສປປ ລາວ ຍັງຖືເປັນປະເທດທີ່ອີງໃສ່ການກະສິກໍາ ເນື່ອງຈາກຂະແໜງນີ້ມີ 70% ຂອງປະຊາກອນ ຫຼື 50% ຂອງຄົວເຮືອນໃນທົ່ວປະເທດໄດ້ທໍາການຜະລິດກະສິດກໍາເພື່ອກຸ້ມຕົນເອງ.

ການເປີດເສດຖະກິດພາກພື້ນ ແລະ ການພັດທະນາຂະແໜງລະບົບການຂົນສົ່ງໂລຈິດຕິກ ແລະ ການຄ້າລະຫວ່າງປະເທດໃນໄລຍະຜ່ານມາໄດ້ພັດທະນາການຜະລິດກະສິກໍາຕາມຮູບແບບ ກະເສດ-ສັນຍາ (Contract Farming) ແລະ ຂະແໜງທຸລະກິດກະເສດໃນທົ່ວປະເທດ. ເຂດຜະລິດກະສະກໍາເປັນສິນຄ້າທີ່ສໍາຄັນປະກອບມີດັ່ງລຸ່ມນີ້:

- ເຂດພູພຽງບໍລະເວນປູ່ແຂວງພາກໃຕ້ທີ່ມີການຜະລິດກາເຟ, ຊາ, ພືດຜັກລະດູໜາວ ແລະ ອື່ນໆ.
- ເຂດແຂວງພາກເໜືອຕິດສາຍແດນ ສປ ຈີນ ທີ່ມີການຜະລິດຢາງພາລາ, ອ້ອຍ, ໝາກກ້ວຍ, ໝາກໂມ ແລະ ອື່ນໆ.
- ເຂດແຂວງທີ່ຕິດກັບສາຍແດນປະເທດໄທທີ່ມີການຜະລິດເຂົ້າ ແລະ ພືດຫຼາຍຊະນິດເພື່ອປ້ອນຕະຫຼາດປະເທດໄທ ແລະ ຕະຫຼາດນະຄອນຫຼວງ.

ອີງຕາມສະຖິຕິຂອງກະຊວງອຸດສາຫະກໍາ ແລະ ການຄ້າມີຈໍານວນ 35,600 ກວ່າບໍລິສັດທີ່ຈົດທະບຽນໃນຂະແໜງກະສິກໍາ ແລະ ປ່າໄມ້ ເຊິ່ງມີມູນຄ່າການລົງທຶນ 548,000 ຕື້ກີບ ທີ່ໄດ້ແບ່ງອອກເປັນໂຮງງານອຸດສາຫະກໍາ ແລະ ປຸງແຕ່ງໄມ້ສໍາເລັດຮູບຂະໜາດໃຫຍ່ ແລະ ຂະໜາດກາງ ເປັນບໍລິສັດສົ່ງເສີມ ແລະ ເກັບຊື້ຜະລິດຕະພັນກະສິກໍາເພື່ອສົ່ງອອກເປັນການຈໍາໜ່າຍວັດຖຸປັດໃຈການຜະລິດກະສິກໍາ ຫ້າງຮ້ານຈໍາໜ່າຍຜະລິດຕະພັນກະສິກໍາ ແລະ ອື່ນໆ.

ການຜະລິດກະສິກໍາແມ່ນໄດ້ຮັບຜົນກະທົບ ຈາກການລະບາດຂອງພະຍາດ COVID-19 ເຊັ່ນດຽວກັນກັບຂະແໜງການອື່ນຈາກການປຸດສະຫງັກ 4 ດ້ານດັ່ງທີ່ໄດ້ອະທິບາຍຜ່ານມາ ສະເພາະອຸດສາຫະກໍາປຸງແຕ່ງກະສິກໍາ ແລະ ປ່າໄມ້ ຜົນກະທົບຕໍ່ອຸດສາຫະກໍາດັ່ງກ່າວແມ່ນມີລັກສະນະກ່ຽວກັບອຸດສາຫະກໍາປຸງແຕ່ງດັ່ງທີ່ໄດ້ອະທິບາຍ (ໃນຂໍ້ 2.2.1).

ສະເພາະທຸລະກິດກະສິກໍາຕາມລະບົບ ກະເສດ-ສັນຍາ ລວມທັງການຜະລິດກະສິກໍາເພື່ອຮັບໃຊ້ການບໍລິໂພກໃນຕົວເມືອງ ແລະ ການທ່ອງທ່ຽວມີດັ່ງຕໍ່ໄປນີ້:

- ການປິດກິດຈະການໂຮງແຮມ ແລະ ຮ້ານອາຫານໃນໄລຍະຕົ້ນຂອງການລະບາດຂອງພະຍາດ COVID-19 ແມ່ນໄດ້ເຮັດໃຫ້ຄວາມຕ້ອງການຕະຫຼາດພືດຜັກ ແລະ ຊີ້ນ ແມ່ນຫຼຸດລົງ. ນອກຈາກນັ້ນການລັກລອບເອົາສິນຄ້າດັ່ງກ່າວມາແຕ່ປະເທດໃກ້ຄຽງໄດ້ກະທົບເຖິງການຈຳໜ່າຍຜະລິດຕະພັນຂອງລາວ, ເຮັດໃຫ້ຜູ້ຜະລິດຂະໜາດນ້ອຍຈຳນວນໜຶ່ງໄດ້ຢຸດຕິການຜະລິດ.
- ໃນໄລຍະການປະຕິບັດມະຕິຄຳສັ່ງເລກທີ 06/ນຍ ໃນເບື້ອງຕົ້ນຜູ້ຜະລິດກະສິກຳບໍ່ສາມາດຂົນສົ່ງສິນຄ້າລະຫວ່າງແຂວງໄດ້ຍ້ອນການຈັດຕັ້ງປະຕິບັດມະຕິຄຳສັ່ງໃນແຕ່ລະແຂວງແມ່ນບໍ່ຄືກັນ, ມີດ່ານກວດຫຼາຍ ທີ່ເຮັດໃຫ້ການຂົນສົ່ງຜະລິດຕະພັນກະສິກຳເສຍຫາຍໄດ້ງ່າຍ ແລະ ບໍ່ສາມາດປະຕິບັດໄດ້.
- ໃນໄລຍະການປະຕິບັດມະຕິຄຳສັ່ງເລກທີ 06/ນຍ ຜູ້ຜະລິດກະສິກຳບໍ່ສາມາດສົ່ງສິນຄ້າຕາມລະບົບ ກະເສດ-ສັນຍາໄດ້ງ່າຍດາຍ , ມີອຸປະສັກຫຼາຍຈຶ່ງເຮັດໃຫ້ການຂົນສົ່ງຜະລິດຕະພັນ ຂ້າມສາຍແດນມີຄວາມເສຍຫາຍໃນລະຫວ່າງການເດີນທາງ.
- ໃນເມື່ອບໍ່ສາມາດຈຳໜ່າຍຜະລິດຕະພັນໄດ້ ຫຼື ຜະລິດຕະພັນໄດ້ມີຄວາມເສຍຫາຍ, ຜູ້ປະກອບການຈຶ່ງບໍ່ມີລາຍຮັບ ແລະ ຂາດສະພາບຄ່ອງທາງດ້ານການເງິນ ເພື່ອການລົງທຶນຄືນໃໝ່ໃສ່ລະດູການຜະລິດໃໝ່.
- ວົງຈອນການຂາດສະພາບຄ່ອງທາງດ້ານການເງິນແມ່ນໄດ້ກະທົບຕ່ອງໂສ້ການຜະລິດທັງໝົດລວມທັງ, ຜູ້ສົ່ງເສີມ ແລະ ເກັບຊື້, ຂົນສົ່ງ ແລະ ຊາວກະສິກອນຜູ້ຜະລິດ.
- ເນື່ອງຈາກສະພາບຄາດແຄ້ນດ້ານການເງິນຜູ້ປະກອບການພ້ອມທັງຊາວກະສິກອນ ແມ່ນບໍ່ມີຄວາມສາມາດໃນການຈ່າຍຄ່າເຊົ່າທີ່ດິນ, ຄ່າແຮງງານຜະລິດ ແລະ ບໍລິການຂອງຕົນ, ບໍ່ມີຄວາມສາມາດຈ່າຍດອກເບ້ຍ ແລະ ຕົ້ນທຶນເງິນກູ້ຈາກທະນາຄານ, ຈາກສະຖາບັນການເງິນຈຸລະພາກ ແລະ ເງິນກູ້ນອກລະບົບ, ລວມທັງບໍ່ສາມາດຈ່າຍອາກອນຕ່າງໆໃຫ້ລັດຖະບານ.

ຂະແໜງການກະສິກຳຢູ່ ສປປ ລາວ ແມ່ນມີທ່າແຮງໂດຍສະເພາະຈາກການພັດທະນາການຜະລິດແບບກະເສດ-ສັນຍາໄປສູ່ອຸດສາຫະກຳປຸງແຕ່ງ. ການລະບາດຂອງພະຍາດ COVID-19 ແມ່ນໄດ້ເຮັດໃຫ້ໄລຍະການປ່ຽນແປງໄປສູ່ອຸດສາຫະກຳແມ່ນມີຄວາມຫຼ້າຊ້າຢ່າງແນ່ນອນ.

### 2.2.3 ຜົນກະທົບຕໍ່ຂະແໜງທຸລະກິດທ່ອງທ່ຽວ.

ຂະແໜງການອຸດສາຫະກຳທ່ອງທ່ຽວກວມເອົາປະມານ 12% ຂອງ GDP ແລະ ມີທ່າຂະຫຍາຍຕົວໄວໃນໄລຍະຊຸມປີທີ່ຜ່ານມາ. ອີງຕາມຕົວເລກສະຖິຕິປີ 2019 ຂອງກະຊວງ ຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ ແມ່ນມີນັກທ່ອງທ່ຽວຈຳນວນ 4,791,065 ຄົນ ທີ່ມາທ່ຽວໃນ ສປປ ລາວ ແລະ ໄດ້ຄາດຄະເນການສ້າງລາຍຮັບ ຈຳນວນ 934.7 ລ້ານໂດລາສະຫະລັດ. ຕະຫຼາດທ່ອງທ່ຽວປະກອບດ້ວຍນັກທ່ອງທ່ຽວໄທ ຈຳນວນ 2,160,300 ຄົນ ເພີ່ມຂຶ້ນເທົ່າກັບ 12%, ນັກທ່ອງທ່ຽວຈີນ ຈຳນວນ 1,022,727 ຄົນ ເພີ່ມຂຶ້ນເທົ່າກັບ 27%, ນັກທ່ອງທ່ຽວເກົາຫຼີໃຕ້ ຈຳນວນ 203,191 ຄົນ ເພີ່ມຂຶ້ນເທົ່າກັບ 17% ແລະ ນັກທ່ອງທ່ຽວຫວຽດນາມ ຈຳນວນ 924, 875 ຄົນ ເພີ່ມຂຶ້ນເທົ່າກັບ 7%.

ແຫຼ່ງທ່ອງທ່ຽວຢູ່ ສປປ ລາວ ເປັນແຫຼ່ງທ່ອງທ່ຽວທຳມະຊາດມີຈຳນວນທັງໝົດ 1,314 ແຫ່ງ, ແຫຼ່ງທ່ອງທ່ຽວວັດທະນາທຳຈຳນວນ 591 ແຫ່ງ ແລະ ແຫຼ່ງທ່ອງທ່ຽວທາງປະຫວັດສາດຈຳນວນ 294 ແຫຼ່ງ. ໃນແຫຼ່ງທ່ອງທ່ຽວວັດທະນາທຳປະກອບມີ: ເມືອງຫຼວງພະບາງ, ວັດພູຈຳປາສັກ ແລະ ທົ່ງໄຫຫີນແຂວງຊຽງຂວາງ ໄດ້ຈັດເປັນມໍລະດົກໂລກ.

ທຸລະກິດນັກທ່ອງທ່ຽວຍັງປະກອບມີເທດສະການປະເພນີ 10 ກວ່າງານຕໍ່ປີ, ງານປະຊຸມສຳມະນາ ແລະ ງານວາງສະແດງປະມານ 10 ງານຕໍ່ປີ. ໂຄງປະກອບຂອງການບໍລິການທ່ອງທ່ຽວມີໂຮງແຮມຈຳນວນ 637 ແຫ່ງ, ບ້ານພັກຈຳນວນ 2,283 ແຫ່ງ, ຮ້ານອາຫານຈຳນວນ 2,679 ແຫ່ງ ແລະ ຮ້ານບັນເທີງຈຳນວນ 305 ແຫ່ງໃນທົ່ວປະເທດ. ບໍລິສັດນຳທ່ຽວທີ່ຈົດທະບຽນມີຢູ່ 575 ບໍລິສັດ ໂດຍມີ 36 ບໍລິສັດເປັນສາຂາບໍລິສັດລະດັບສາກົນ. ອີງຕາມຕົວເລກສະຖິຕິຂອງກົມ

ທະບຽນ ກະຊວງອຸດສາຫະກຳການຄ້າ ຕົວເລກການລົງທຶນໃນວິສາຫະກິດໂຮງແຮມ ແລະ ຮ້ານອາຫານ ແລະ ການທ່ອງທ່ຽວມີມູນຄ່າກວ່າ 554, 765 ຕື້ກີບ.

ອຸດສາຫະກຳການທ່ອງທ່ຽວແມ່ນໄດ້ຮັບຜົນກະທົບຄືກັນກັບອຸດສາຫະກຳອື່ນໆ ເນື່ອງມາຈາກການຢຸດສະຫງັກທາງດ້ານການສະໜອງ, ຄວາມຕ້ອງການຂອງຕະຫຼາດດ້ານການເງິນ ແລະ ຄວາມບໍ່ແນ່ນອນຕໍ່ການດຳເນີນທຸລະກິດໃນອານາຄົດ , ເຊິ່ງແຕກຕ່າງກັບອຸດສາຫະກຳ ແລະ ທຸລະກິດອື່ນໆ ການຢຸດສະຫງັກທາງດ້ານການສະໜອງການບໍລິການທ່ອງທ່ຽວແມ່ນໄດ້ເລີ່ມແຕ່ທ້າຍປີ 2019 ເປັນຕົ້ນມາ ພາຍຫຼັງທີ່ ສປປ ຈີນ ແລະ ຫຼາຍປະເທດໄດ້ເລີ່ມປິດສາຍແດນ ແລະ ສາຍການບິນລະຫວ່າງປະເທດ ຜົນກະທົບຕໍ່ທຸລະກິດທ່ອງທ່ຽວສາມາດສັງລວມດັ່ງລຸ່ມນີ້:

- ອີງຕາມການປະເມີນເບື້ອງຕົ້ນໂດຍ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ເຫັນວ່າ ໃນໄລຍະແຜ່ລະບາດໄລຍະທຳອິດຂອງປີ 2020 ໄດ້ມີ 60% ຂອງທຸລະກິດໂຮງແຮມ ແລະ ບ້ານພັກໄດ້ປິດກິດຈະການຂອງຕົນ. ຍ້ອນມີການຍົກເລີກການມາທ່ຽວຂອງນັກທ່ອງທ່ຽວເຊັ່ນ: ເມືອງຫຼວງພະບາງ, ເມືອງວັງວຽງ ແລະ ອື່ນໆ ທີ່ເປັນຈຸດໝາຍຕົ້ນຕໍຂອງນັກທ່ອງທ່ຽວແມ່ນໄດ້ຢຸດກິດຈະການທັງໝົດໃນເດືອນ 03 ປີ 2020 ກ່ອນການປະກາດ ມະຕິຄຳສັ່ງເລກທີ 06/ນຍ ຂອງລັດຖະບານ.
- ໃນໄລຍະຈັດຕັ້ງປະຕິບັດ ມະຕິຄຳສັ່ງເລກທີ 06/ນຍ ເຊິ່ງລັດຖະບານໄດ້ອານຸຍາດໃຫ້ເປີດກິດຈະການ ໂຮງແຮມ ແລະ ການນຳສົ່ງອາຫານ ເຖິງຢ່າງໃດກໍ່ຕາມມີຈຳນວນ 90% ຂອງໂຮງແຮມແມ່ນໄດ້ປິດກິດຈະການຂອງຕົນໃນທົ່ວປະເທດ.
- ການປິດກິດຈະການທ່ອງທ່ຽວແມ່ນໄດ້ສົ່ງຜົນກະທົບທຸກໆຂະແໜງການຂອງທຸລະກິດທີ່ຢູ່ໃນຕ່ອງໂສ້ການຜະລິດຂອງອຸດສາຫະກຳທ່ອງທ່ຽວລວມໄປເຖິງທຸລະກິດບໍລິການທາງອ້ອມການຂົນສົ່ງ, ການຜະລິດກະສິກຳ, ອາຫານ ແລະ ອື່ນໆ.
- ເຊັ່ນດຽວກັນກັບອຸດສາຫະກຳອື່ນໆ, ການປ່ຽນແປງຂອງການຕະຫຼາດທ່ອງທ່ຽວ ແລະ ການປິດກິດຈະການໄດ້ເຮັດໃຫ້ຜູ້ປະກອບການຂາດລາຍຮັບ ແລະ ຂາດສະພາບຄ່ອງດ້ານການເງິນ ຈຶ່ງເປັນສາເຫດເຮັດໃຫ້ຜູ້ປະກອບການບໍ່ສາມາດຈ່າຍເງິນເດືອນ ແລະ ຄ່າແຮງງານຂອງພະນັກງານ ແລະ ມີຄວາມຈຳເປັນຢຸດຕິສັນຍາຈ້າງແບບບໍ່ມີກຳນົດ (ຕ່າງຈາກອຸດສາຫະກຳອື່ນ), ບໍ່ສາມາດຈ່າຍຄ່າເຊົ່າສະຖານທີ່, ບໍ່ສາມາດຈ່າຍອາກອນໃຫ້ລັດຖະບານເຊັ່ນດຽວກັນກັບທຸລະກິດຂະແໜງການອື່ນ.

ອຸດສາຫະກຳທ່ອງທ່ຽວແມ່ນມີທ່າແຮງຫຼາຍ ແລະ ສາມາດກາຍເປັນອຸດສາຫະກຳທີ່ສາມາດສ້າງລາຍຮັບໃນອັນດັບສູງໃຫ້ແກ່ປະເທດຊາດ. ການລະບາດຂອງພະຍາດ COVID-19 ໄດ້ສ້າງຄວາມບໍ່ແນ່ນອນ ວ່າອີກດົນປານໃດບັນດາປະເທດຈະອະນຸຍາດໃຫ້ຄົນເດີນທາງທ່ອງທ່ຽວ ແລະ ຈະມີນັກທ່ອງທ່ຽວຈະກັບມາຢ້ຽມຢາມສະຖານທີ່ຕ່າງໆຢູ່ ສປປ ລາວອີກ. ເຊິ່ງຕ່າງຈາກຂະແໜງການອື່ນ, ອຸດສາຫະກຳທ່ອງທ່ຽວແມ່ນຈະຖືກຜົນກະທົບໃນໄລຍະຍາວກວ່າໝູ່ ແລະ ມີຄວາມບໍ່ແນ່ນອນທີ່ສຸດ.

### 2.3 ຜົນກະທົບທາງດ້ານການເງິນ.

ໂດຍການສັງລວມຈາກຜົນກະທົບຂອງການແຜ່ລະບາດຂອງພະຍາດ COVID-19 ຕໍ່ອຸດສາຫະກຳພື້ນຖານທີ່ກ່າວມາຂ້າງເທິງນີ້ ການແກ້ໄຂບັນຫາທາງດ້ານການເງິນ ແລະ ການສະໜອງທຶນຖືເປັນໝາກຫົວໃຈໜຶ່ງທີ່ສຳຄັນຕໍ່ວິກິດການໃນຄັ້ງນີ້. ເນື່ອງຈາກວ່າວິກິດການ COVID-19 ໄດ້ເຮັດໃຫ້ຕ່ອງໂສ້ເລື່ອງຄວາມຕ້ອງການ ແລະ ການສະໜອງມີບັນຫາ ຫຼື ມີການຢຸດສະຫງັກພ້ອມກັນ ເຊິ່ງມັນໄດ້ເຮັດໃຫ້ທຸລະກິດມີການຢຸດຫງັກທັງການນຳເຂົ້າ ແລະ ການສົ່ງອອກ, ຄົວເຮືອນ (ປະຊາຊົນ) ຈະບໍ່ມີການໃຊ້ຈ່າຍ ຫຼື ໃຊ້ຈ່າຍໜ້ອຍໃນສັງຄົມ ເພາະເຂົາເຈົ້າໄດ້ຖືກຜົນກະທົບຈາກການຂາດລາຍໄດ້ເນື່ອງຈາກວ່າ ການຖືກຢຸດຈ້າງງານ, ການເສຍລາຍຮັບຈາກການຢຸດກິດຈະການທຸລະກິດຂອງຕົນ. ລັດຖະບານຈຶ່ງມີໜ້າທີ່ ແລະ ຄວາມຈຳເປັນເຂົ້າມາຊ່ວຍໃນການຮັກສາສະພາບຄ່ອງທາງດ້ານການເງິນ ແລະ ການສະໜອງທຶນໃຫ້ແກ່ວິສາຫະກິດ ແລະ ຄົວເຮືອນ.

ສະຖາບັນການເງິນທີ່ມີສ່ວນຮ່ວມໃນການສະໜອງທຶນແກ່ທຸລະກິດໃນ ສປປ ລາວ ໃຫ້ແກ່ພາກລັດປະກອບມີ: ສະຖາບັນການເງິນກູ້ຕ່າງປະເທດທີສະໜອງທຶນໃຫ້ແກ່ທະນາຄານກາງ ແລະ ກະຊວງການເງິນ (ຜ່ານໂຄງການຂອງລັດຖະບານ). ທຶນດັ່ງກ່າວໄດ້ສະໜອງໃຫ້ທະນາຄານຂອງລັດ, ບໍລິສັດປະກັນໄພຮ່ວມກັບລັດ ແລະ ຕະຫຼາດຫຼັກສັບ ໃຫ້ແກ່ພາກເອກະຊົນປະກອບມີ: ສະຖາບັນການເງິນຢູ່ຕ່າງປະເທດ, ນັກລົງທຶນຢູ່ຕ່າງປະເທດ, ຜູ້ສະໜອງປັດໃຈການຜະລິດ (ແບບກູ້ຢືມ) ໂດຍຜ່ານທະນາຄານທຸລະກິດ, ສາຂາທະນາຄານຕ່າງປະເທດ ທີ່ສະແດງໃນຮູບພາບ 2.7 ລຸ່ມນີ້:

**ຮູບທີ 2.7: ສັງລວມຜູ້ມີບົດບາດ ( ຕົວລະຄອນ) ໃນການສະໜອງທຶນແກ່ທຸລະກິດຢູ່ ສປປ ລາວ**




ດັ່ງທີ່ໄດ້ອະທິບາຍໃນຮູບພາບເທິງນີ້ ການສະໜອງທຶນແມ່ນຕົວຊ່ວຍທຸລະກິດໃນ ສປປ ລາວ ປະກອບມີ 3 ພາກສ່ວນຄື: 1). ພາກລັດ, 2). ພາກເອກະຊົນ, ແລະ 3). ພາກສ່ວນເຄິ່ງລະບົບ ແລະ ນອກລະບົບ. ປັດຈຸບັນນີ້ເຄື່ອງມື, ຜະລິດຕະພັນ ແລະ ບໍລິການທາງການເງິນສໍາລັບທຸລະກິດຢູ່ ສປປ ລາວ ສາມາດສະຫຼຸບໄດ້ດັ່ງນີ້:

- **<u>ສິນເຊື່ອ/ເງິນກູ້:</u>** ປະກອບມີເງິນກູ້ທີ່ມີໄລຍະເວລາກໍານົດ 1-10 ປີ, ສິນເຊື່ອເພື່ອການຄ້າ, ສິນເຊື່ອລົດ, ທຶນໝູນວຽນໄລຍະສູງສຸດ 1 ປີ, ເງິນກູ້ສໍາລັບທີ່ຢູ່ອາໄສ, ເຊົ່າສິນເຊື່ອລົດ, ເຊົ່າສິນເຊື່ອເຄື່ອງອຸປະໂພກ.
- **<u>ແບບປະສົມ:</u>** ສິນເຊື່ອຈາກຜູ້ສະໜອງ, ໜັງສືຄໍ້າປະກັນ (LC), ການຄ້າປະກັນຂອງທະນາຄານ (Bank Guarantee), ປະກັນໄພທີ່ສະໜອງໂດຍທະນາຄານ ແລະ ບໍລິສັດປະກັນໄພ.
- **<u>ເງິນໃນຫຸ້ນ/Equity:</u>** ແມ່ນຫຸ້ນສາມັນ ແລະ ຫຸ້ນບູລິມະສິດ ທີ່ສະໜອງໂດຍຕະຫຼາດຫຼັກຊັບ, ຄອບຄົວ ແລະ ໝູ່ເພື່ອນຂອງທຸລະກິດ.

ຜົນກະທົບຕໍ່ການສະໜອງທຶນໃຫ້ພາກທຸລະກິດ ແມ່ນຍ້ອນບັນດາສະຖາບັນການເງິນທາງພາກລັດ ແລະ ພາກເອກະຊົນທີ່ກ່າວມາຂ້າງເທິງນີ້ມີຄວາມຈໍາກັດໃນການຍືດຢຸ່ນການບໍລິການທາງດ້ານການເງິນໃຫ້ແກ່ພາກທຸລະກິດອຸປະສັກຕົ້ນຕໍປະກອບດ້ວຍ:

- ອຸປະສັກພື້ນຖານຂອງຂະແໜງການເງິນ ແມ່ນມີຄວາມສ່ຽງສູງໃນຕະຫຼາດທຶນໂດຍລວມທີ່ເນື່ອງມາຈາກສະພາບເສດຖະກິດມະຫາພາກຂອງ ສປປ ລາວ ບໍ່ເຂັ້ມແຂງ ແລະ ຖືກຮັດກຸມ. ການຈັດຕັ້ງປະຕິບັດລະບຽບກົດໝາຍທີ່ກ່ຽວຂ້ອງດ້ານການເງິນ ແລະ ການບັງຂັບສັນຍາຍັງອ່ອນ ຈຶ່ງເຮັດໃຫ້ສະຖາບັນການເງິນໃນທຸກໆລະດັບໄດ້ວາງອັດຕາດອກເບ້ຍສູງ ແລະ ມີເງື່ອນໄຂການກູ້ຢືມເຂັ້ມງວດ ເພື່ອຄວບຄຸມຄວາມສ່ຽງ, ການຫຼຸດດອກເບ້ຍທະນາຄານໂດຍສະ

ຖາບັນເງິນກູ້ ແມ່ນສາມາດປະຕິບັດໄດ້ຍາກ ຖ້າບໍ່ມີມາດຕະການຊ່ວຍເຫຼືອຈາກລັດຖະບານໂດຍກົງໃຫ້ແກ່ສະຖາບັນ ດັ່ງກ່າວ.

- ມີທະນາຄານ ແລະ ສະຖາບັນການເງິນຈໍານວນໜຶ່ງແມ່ນຂາດສະພາບຄ່ອງດ້ານທຶນຮອນເພື່ອສະໜອງໃຫ້ພາກທຸລະກິດ ເນື່ອງຈາກສະຖາບັນຂອງຕົນເອງມີໜີ້ທີ່ບໍ່ສາມາດໃຊ້ຄືນໄດ້ຫຼາຍ ບັນດາທະນາຄານ ແລະ ສະຖາບັນການເງິນທີ່ບໍ່ມີສະພາບຄ່ອງ ນັ້ນຈະບໍ່ສາມາດເຂົ້າຮ່ວມໂຄງການ (NPL) ປ່ອຍກູ້ໃຫ້ພາກທຸລະກິດເພື່ອການການຟື້ນຟູຈາກ COVID-19 ໄດ້.
- ລະບົບການສະໜອງເງິນກູ້ນອກລະບົບ ແລະ ເຄິ່ງລະບົບແມ່ນກວມເອົາປະມານ 50% ຂອງຈໍານວນທຶນທີ່ສະ ໜອງໃຫ້ພາກທຸລະກິດ ເຊິ່ງກວມເອົາປະມານ 80% ໄດ້ແກ່ທຸລະກິດຂະໜາດນ້ອຍ, ຂະໜາດກາງ ແລະ ຈຸນລະວິສາຫະກິດ (MSME). ດອກເບ້ຍເງິນກູ້ນອກລະບົບແມ່ນເງິນ 10% ຕໍ່ເດືອນໃນບາງກໍລະນີ ແລະ ໜີ້ນອກລະບົບຈະບໍ່ສາມາດຖືກຄຸ້ມຄອງໄດ້ ຈຶ່ງມີຜົນກະທົບທີ່ຮ້າຍແຮງຕໍ່ຄົວເຮືອນ ແລະ ຈຸນລະວິສາຫະກິດ.
- ລະບົບການຄຸ້ມຄອງ ແລະ ການແລກປ່ຽນເງິນຕາແມ່ນບໍ່ສາມາດຕອບສະໜອງຕາມຄວາມຕ້ອງການຂອງທຸລະກິດ. ອັດຕາແລກປ່ຽນນອກລະບົບ ແຕ່ມີຄວາມຫຼຸດລື່ນກັນ ເຊິ່ງໄດ້ຜິດດ່ຽງປະມານ 10% ເປັນຜົນກະທົບໃນການສະໜອງເງິນກູ້ໃຫ້ແກ່ບັນດາທຸລະກິດເພື່ອຟື້ນຟູກິດຈະການ.

### 2.4 ຜົນກະທົບຕໍ່ການລົງທຶນຈາກຕ່າງປະເທດ (FDI).

ການລະດົມທຶນຈາກພາກເອກະຊົນຕາມຮູບການລົງທຶນ ໂດຍສະເພາະການລົງທຶນຈາກຕ່າງປະເທດ (FDI) ເປັນພື້ນຖານທີ່ສໍາຄັນ ໃນການສະໜອງທຶນໃຫ້ພາກທຸລະກິດໂດຍຫຼາຍຮູບການ. FDI ຖືເປັນພາກສ່ວນທີ່ສໍາຄັນຂອງລະບົບເສດຖະກິດຂອງ ສປປ ລາວ ມູນຄ່າ FDI ກວມເອົາປະມານ 7.3% ຂອງ GDP ໃນປີ 2018. ແຕ່ໃນປີ 2019 FDI ແມ່ນມີທ່າຫຼຸດຫຼົງ ແລະ ອາດບໍ່ເຖິງ 5% ຂອງ GDP. ຕາມຂໍ້ສັງເກດການລົງທຶນຕ່າງປະເທດໃນ ສປປ ລາວ ກໍ່ບໍ່ມີຄວາມແນ່ນອນ ແລະ ສ່ວນໃຫຍ່ກໍ່ເຂົ້າສູ່ຂະແໜງຊັບພະຍາກອນທໍາມະຊາດ ຫຼື ການພັດທະນາ ອະສັງຫາລິມະຊັບເປັນຫຼັກ, ຍັງບໍ່ທັນມີລັກສະນະກະຈາຍຄວບຄຸມຫຼາຍຂະແໜງການເທົ່າທີ່ຄວນ.

ການລະບາດຂອງພະຍາດ COVID-19 ມີຜົນກະທົບຕໍ່ປະລິມານການລົງທຶນຈາກຕ່າງປະເທດຢ່າງແນ່ນອນ ແລະ ການກະທົບດັ່ງກ່າວຈະຢູ່ໃນລະດັບສູງ ແລະ ມີລັກສະນະແກ່ຍາວ. ອົງການ ການຄ້າໂລກ ຫຼື UNCTAD ໄດ້ຄາດຄະເນວ່າການລົງທຶນຂອງບັນດາບໍລິສັດຂ້າມຊາດ (MNC) ອາດຈະຫຼຸດລົງໃນລະດັບ 40% ໃນຊ່ວງໄລຍະປີ 2020-2021 ເຊິ່ງເປັນຕົວເລກທີ່ໜ້າຕົກໃຈ ແລະ ຈະສົ່ງຜົນກະທົບຕໍ່ການລົງທຶນໃນ ສປປ ລາວ. ບັນດາບໍລິສັດທີ່ຈະມາລົງທຶນຈະມີຈໍານວນໜ້ອຍລົງແລ້ວ, ນັກລົງທຶນຕ່າງປະເທດຈະມີຄວາມອາດລະແວງຕໍ່ບັນດາປັດໃຈແວດລ້ອມ ກ່ອນຈະຕັດສິນໃຈມາລົງທຶນ ປັດໃຈອັນສໍາຄັນປະກອບມີ: 1). ຄວາມສະດວກ ແລະ ຄວາມວ່ອງໄວໃນການອານຸຍາດການລົງທຶນ; 2). ຕົ້ນທຶນໃນການດໍາເນີນທຸລະກິດ ຕະຫຼອດເຖິງຄວາມໂປ່ງໃສໃນລະບົບການຄຸ້ມຄອງພາກລັດຖະບານ; ນອກຈາກສະພາບການດັ່ງກ່າວ ບັນດາລັດຖະບານໃນຫຼາຍປະເທດທີ່ເປັນຄູ່ແຂ່ງດ້ານເປົ້າໝາຍການລົງທຶນຈະມີຄວາມພະຍາຍາມຫຼາຍຂຶ້ນ ເພື່ອດຶງດູດເອົານັກລົງທຶນໃໝ່ພາຍຫຼັງວິກິດ COVID-19 ເຊິ່ງຈະເຮັດໃຫ້ສະໜາມແຂ່ງຂັນຍາດຊີງເອົາການລົງທຶນທີ່ມີຄຸນນະພາບມີຄວາມເຂັ້ມຂຸ້ນຫຼາຍຂຶ້ນ.

ນອກຈາກການລະດົມເອົານັກລົງທຶນໃໝ່ຈາກຕ່າງປະເທດຈະພົບຄວາມຫຍຸ້ງຍາກແລ້ວ ການລົງທຶນຈາກນັກລົງທຶນຕ່າງປະເທດທີ່ມີຢູ່ແລ້ວຈະຖືກກະທົບເຊັ່ນດຽວກັນ ໂດຍສະເພາະຖ້າຫາກວ່າມາດຕະການສະກັດກັ້ນການແຜ່ລະບາດຂອງ COVID-19 ໄດ້ເຂັ້ມງວດເກີນໄປ ແລະ ກະທົບເພີ່ມເຕີມເຖິງສະພາບຄ່ອງໃນການດໍາເນີນທຸລະກິດຂອງເຂົາເຈົ້າທີ່ໃນສະພາບກ່ອນ COVID-19 ແມ່ນມີຄວາມຫຍຸ້ງຍາກຢູ່ແລ້ວ, ເຊິ່ງບັນດານັກລົງທຶນຕ່າງປະເທດເກົ່າຈະໄດ້ຄົ້ນຄວ້າ ແລະ ທົບທວນແຜນທຸລະກິດຂອງເຂົາເຈົ້າຄືນໃໝ່ພາຍຫຼັງວິກິດການ COVID-19. ບັນດາຫົວຂໍ້ໃນການດໍາເນີນທຸລະກິດ

ປະກອບດ້ວຍ: 1). ການຫຼຸດກຳລັງການຜະລິດ; 2). ການປັບກິດຈະການທຸລະກິດ; ແລະ 3). ສິ່ງທີ່ຮ້າຍແຮງກວ່າໝູ່ແມ່ນການຍ້າຍຖານການລົງທຶນໄປປະເທດອື່ນ.

ສະນັ້ນການຮັກສາການລົງທຶນຕ່າງປະເທດໄວ້ໃນ ສປປ ລາວ ມີຄວາມສຳຄັນຫຼາຍທີ່ສຸດເພື່ອຮັກສາສະພາບຄ່ອງທາງດ້ານການສະໜອງທຶນ ແລະ ທາງດ້ານເສດຖະກິດ.

**2.5 ຜົນກະທົບດ້ານແຮງງານ.**

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ເປັນອົງການຈັດຕັ້ງຜູ້ໃຊ້ແຮງງານທີ່ເປັນທາງການ ແລະ ມີໜ້າທີ່ໃນການພັດທະນາແຮງງານໃນ ສປປ ລາວ ໃນທຸກໆດ້ານຮ່ວມກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການກຳມະບານລາວ.

ຜົນການສຳຫຼວດແຮງງານຢູ່ ສປປ ລາວ ໃນປີ 2017 ສະແດງໃຫ້ເຫັນວ່າປະຊາກອນທີ່ຢູ່ໃນການອອກແຮງງານມີຢູ່ 4.7 ລ້ານຄົນ ກວມເອົາ 68.9% ຂອງປະຊາກອນທັງໝົດໃນປະເທດ. ໃນຈຳນວນດັ່ງກ່າວມີກຳລັງແຮງງານ 1.9 ລ້ານຄົນ ກວມເອົາປະມານ 40.8% ຂອງພົນລະເມືອງມີອາຍຸອອກແຮງງານ. ໃນຈຳນວນດັ່ງກ່າວມີແຮງງານຕາມຂະແໜງການທີ່ສຳຄັນດັ່ງລຸ່ມນີ້:

- ການກະສິກຳ, ປ່າໄມ້ ແລະ ການປະມົງ ຈຳນວນ 551,000 ຄົນ.
- ການຄ້າຂາຍຍົກ-ຂາຍຍ່ອຍ ຈຳນວນ 329,000 ຄົນ.
- ອຸດສາຫະກຳປຸງແຕ່ງ, ກໍ່ສ້າງ ແລະ ຂົນສົ່ງ ຈຳນວນ 278,000 ຄົນ.
- ໂຮງແຮມ, ຮ້ານອາຫານ, ບັນເທີງ ແລະ ທ່ອງທ່ຽວ ຈຳນວນ 54,000 ຄົນ.
- ການສຶກສາພາກເອະຊົນ ຈຳນວນ 85,000 ຄົນ.
- ການເງິນ ແລະ ປະກັນໄພ ຈຳນວນ 11,000 ຄົນ.

ຕົວເລກແຮງງານແມ່ນບໍ່ຊັດເຈນ ເນື່ອງຈາກມີຫຼາຍຂະແໜງການເຊັ່ນ: ຂະແໜງອະສັງຫາລິມະສັບ, ຂະແໜງອຸດສາຫະກຳປຸງແຕ່ງ ແລະ ຂະແໜງການທ່ອງທ່ຽວ ທີ່ໄດ້ມີການຂະຫຍາຍຕົວໃນລະດັບສູງ ແຕ່ການກຳນົດໃນບົດສຳຫຼວດໃນປີ 2017 ວ່າແຮງງານຢູ່ໃນຂະແໜງການດັ່ງກ່າວມີອັນດັບຕ່ຳກວ່າຕົວຈິງຖ້າຫາກສົມທຽບໃສ່ຈຳນວນວິສາຫະກິດທີ່ໄດ້ຈົດລະບຽນ. ບົດລາຍງານດັ່ງກ່າວຍັງບໍ່ໄດ້ເອົາເຖິງແຮງງານລາວທີ່ໄປເຮັດວຽກຢູ່ປະເທດໃກ້ຄຽງປະມານ 200, 000 ກວ່າຄົນ.

ສປປ ລາວ ມີລະບົບສະຫວັດດີການສັງຄົມທີ່ປະກອບມີ 1,783 ຫົວໜ່ວຍວິສາຫະກິດ ແລະ ແຮງງານຈຳນວນ 124, 000 ຄົນ ທີ່ຢູ່ໃນລະບົບສະຫວັດດີການສັງຄົມແມ່ນກວມເອົາພຽງແຕ່ 0.66% ຂອງກຳລັງແຮງງານ.

ວິກິດການ COVID-19 ມີຜົນກະທົບຢ່າງສູງຕໍ່ແຮງງານໃນ ສປປ ລາວ ເນື່ອງຈາກວ່າລະບົບສະຫວັດດີການສັງຄົມກວມເອົາພຽງຈຳນວນໜ້ອຍທີ່ສຸດຂອງກຳລັງແຮງງານ ເວລາມີໄພພິບັດແຮງງານແມ່ນຈະບໍ່ໄດ້ຮັບສະຫວັດດີການຕາມທີ່ຄວນ ພົບກະທົບດ້ານແຮງງານຕໍ່ວິສາຫະກິດ ແລະ ຕໍ່ຜູ້ອອກແຮງງານເອງໄດ້ສັງລວມດັ່ງຕໍ່ໄປນີ້:

- ການຢຸດສະຫງັກພ້ອມກັນຂອງຄວາມຕ້ອງການ ແລະ ການສະໜອງຂອງລະບົບທຸລະກິດໄດ້ເຮັດໃຫ້ຜູ້ປະກອບການປັບປຸງລະບົບທຸລະກິດຂອງເຂົາເຈົ້າ ໂດຍການຢຸດຈ້າງງານຊົ່ວຄາວ, ເຮັດໃຫ້ຄົນງານຫວ່າງງານເປັນໄລຍະ 1-3 ເດືອນ. ສຳລັບອຸດສາຫະກຳທ່ອງທ່ຽວແລ້ວການຫວ່າງງານອາດຈະເຖິງ 12 ເດືອນ.
- ຍ້ອນຄວາມບໍ່ແນ່ນອນວ່າຜູ້ໃຊ້ແຮງງານຈະຮັບຈ້າງແຮງງານຄືນໃໝ່ ແລະ ຍ້ອນລະບົບສະຫວັດດີການສັງຄົມທີ່ມີຢູ່ບໍ່ທົ່ວເຖິງ, ຜູ້ຫວ່າງງານຈຳເປັນຕ້ອງໄດ້ດີ້ນລົ້ນ ຊອກຫາລາຍໄດ້ອື່ນເພື່ອລ້ຽງຊີບ, ອາດຈະປ່ຽນອາຊີບ ແລະ ກັບໄປເຮັດງານເດີມໃນເຂດຊົນນະບົດ. ສະພາບດັ່ງກ່າວຈະເຮັດໃຫ້ບັນດາອຸດສາຫະກຳຂາດແຮງງານເວລາມີການສືບຕໍ່ການຜະລິດ ຫຼັງວິກິດການ COVID-19.

- ແຮງງານທີ່ຢູ່ນອກລະບົບ ແລະ ເຄິ່ງລະບົບໂດຍສະເພາະໃນຂະແໜງການກະສິກຳ, ຂະແໜງການຄ້າຂາຍຍ່ອຍ ແລະ ຂະແໜງທ່ອງທ່ຽວແມ່ນບໍ່ມີວຽກເຮັດ ແລະ ມີລາຍຮັບປະຈຳວັນຍ້ອນການຢຸດສະຫງັກຮອບດ້ານຂອງລະບົບທຸລະກິດ. ຜົນກະທົບຕໍ່ແຮງງານ ຍ້ອນລະບົບດັ່ງກ່າວແມ່ນຮ້າຍແຮງ ເພາະມັນໄດ້ເຮັດໃຫ້ຄົວເຮືອນຈຳນວນຫຼາຍຂາດລາຍຮັບ ແລະ ຂາດເຂີນອາຫານການກິນ.
- ແຮງງານທີ່ໄດ້ຢຸດວຽກຊົ່ວຄາວແມ່ນບໍ່ສາມາດຊຳລະຄ່າດອກເບ້ຍ ແລະ ຕົ້ນທຶນການກູ້ຢືມຍານພະຫານະ, ເຄື່ອງໃຊ້ໃນຄົວເຮືອນ ພ້ອມທັງບໍ່ມີຄວາມສາມາດຈ່າຍຄ່າເຊົ່າທີ່ພັກ ແລະ ອື່ນໆ.

ຜົນກະທົບຕໍ່ແຮງງານທັງໃນ ແລະ ນອກລະບົບແມ່ນຈະຕ້ອງໄດ້ມີການແກ້ໄຂເພື່ອໃຫ້ອຸດສາຫະກຳ ແລະ ທຸລະກິດໄດ້ເຄື່ອນໄຫວຢ່າງເປັນປົກກະຕິໃນໄລຍະຟື້ນຟູຫຼັງວິກິດການຂອງ COVID-19.

## III. ຂໍ້ສະເໜີສະເພາະເພື່ອຮັບມືກັບວິກິດການ COVID-19 ໃນໄລຍະການລະບາດຂອງພະຍາດ.

### 3.1 ຂໍ້ສະເໜີຂອງບັນດາຂະແໜງການທຸລະກິດ.

ໄລຍະການລະບາດຂອງພະຍາດ COVID-19 ແມ່ນຄາດຄະເນໄລຍະເວລາ 6 ຫາ 12 ເດືອນ ນັບແຕ່ເດືອນ ມັງກອນ 2020. ໃນໄລຍະດັ່ງກ່າວຂະແໜງອຸດສາຫະກໍາປຸງແຕ່ງ, ກະສິກໍາ, ທ່ອງທ່ຽວ ແລະ ການເງິນໄດ້ສະເໜີມາດຕະການເພື່ອ 1). ແກ້ໄຂສະພາບຄ່ອງຂອງການເຄື່ອນໄຫວທຸລະກິດ; 2). ການສະໜອງເງິນທຶນໃຫ້ທຸລະກິດເພື່ອສືບຕໍ່ກິດຈະການ; ແລະ 3). ການຫຼຸດຜ່ອນການປົດແຮງງານ.

ໂດຍຄໍານຶງເຖິງຜົນກະທົບຂອງວິກິດການ COVID-19 ໃນແຕ່ລະຂະແໜງການທີ່ໄດ້ກ່າວມາໃນບົດຜ່ານມາ ການສະເໜີຂອງແຕ່ລະຂະແໜງການທຸລະກິດແມ່ນມີເນື້ອໃນດັ່ງລຸ່ມນີ້.

#### 3.1.1 ຂໍ້ສະເໜີຂອງຂະແໜງອຸດສາຫະກໍາປຸງແຕ່ງ.

ໂດຍສ່ວນໃຫຍ່ອຸດສາຫະກໍາປຸງແຕ່ງແມ່ນໄດ້ຖືກກະທົບຫຼາຍໃນໄລຍະການສັ່ງປິດໂຮງງານ ແລະ ກິດຈະການຕາມຄໍາສັ່ງເລກທີ 06/ນຍ, ການສະເໜີຂອງຂະແໜງການທຸລະກິດດັ່ງກ່າວແມ່ນຢູ່ໃນຕາຕາລາງ 3.1 ລຸ່ມນີ້:

**ຕາຕາລາງ 3.1: ຂໍ້ສະເໜີຂອງອຸດສາຫະກໍາປຸງແຕ່ງ ແລະ ກິດຈະການທຸລະກິດທີ່ປົ່ນອ້ອມ**

| ຜົນກະທົບຕໍ່ຂະແໜງອຸດສາຫະກໍາປຸງແຕ່ງ | ຂໍ້ສະເໜີຂອງຂະແໜງອຸດສາຫະກໍາປຸງແຕ່ງ |
|---|---|
| • ການນໍາສິ່ງປັດໃຈການຜະລິດ.<br>• ການຜະລິດໜ້ອຍລົງ ບໍ່ສາມາດປະຕິບັດສັນຍາໄດ້.<br>• ການຖືກສັ່ງປິດຕາມຄໍາສັ່ງເລກທີ 06/ນຍ.<br>• ການຂາດລາຍຮັບ ແລະ ເສຍລູກຄ້າ.<br>• ການຫຼຸດຈໍານວນແຮງງານລົງ, ມີການຫວ່າງງານ.<br>• ການບໍ່ສາມາດຈ່າຍເງິນເດືອນ, ເງິນແຮງງານ, ຄ່າດອກເບ້ຍ ແລະ ຕົ້ນທຶນ ຄ່າເຊົ່າສະຖານທີ່ ແລະ ສໍາລະອາກອນ.<br>• ສະພາບການເງິນ, ການສະໜອງ ແລະ ຄວາມຕ້ອງການແມ່ນກະທົບວົງໂຄຈອນ ຫຼື ຕ່ອງໂສ້ການຜະລິດຂອງໂຮງງານປຸງແຕ່ງທັງໝົດຈາກຜູ້ຜະລິດສະໜອງວັດຖຸດິບ, ວັດຖຸປັດໃຈການຜະລິດ, ຂົນສົ່ງ, ໂຮງງານປຸງແຕ່ງ ແລະ ໂຮງງານ/ທຸລະກິດທີ່ປົ່ນອ້ອມ. | **<u>ສະພາບຄ່ອງ:</u>**<br>• ໃຫ້ຫຼຸດຜ່ອນຄໍາສັ່ງເລກທີ 06/ນຍ ອານຸຍາດໃຫ້ໂຮງງານເປີດ, ຫຼຸດຜ່ອນເງື່ອນໄຂຄໍາສັ່ງແນະນໍາ ເລກທີ 031/ສພກ.<br>• ໃຫ້ກໍານົດເຂດຄວາມສ່ຽງການແຜ່ລະບາດຂອງພະຍາດ COVID-19 ຕາມມະຕິຕົກລົງເລກທີ 05/ລບ (ເປັນເຂດແດງ, ເຫຼືອງ, ຂຽວ) ແລະ ອານຸຍາດໃຫ້ໂຮງງານໃດເປີດໃນເຂດມີຄວາມສ່ຽງໜ້ອຍ.<br>• ໃຫ້ອໍານວຍຄວາມສະດວກ ແລະ ສິ່ງຂີດຂວາງການຂົນສົ່ງການຄ້າລະຫວ່າງແຂວງຕໍ່ແຂວງ ແລະ ລະຫວ່າງປະເທດ ເພື່ອອໍານວຍຄວາມສະດວກໃນການຂົນສົ່ງວັດຖຸດິບ ແລະ ວັດຖຸປັດໃຈການຜະລິດ.<br>• ໃຫ້ລັດຖະບານຂຽນຈົດໝາຍຢັ້ງຢືນໃຫ້ໂຮງງານທີ່ຜະລິດເພື່ອສົ່ງອອກເພື່ອບໍ່ໃຫ້ຖືກຄູ່ສັນຍາໄດ້ປັບໃໝຍ້ອນບໍ່ສາມາດສົ່ງສິນຄ້າໄດ້ໃນໄລຍະໂຄວິດ-19.<br>• ໃຫ້ລັດຖະບານເລື່ອນການສໍາລະອາກອນແລະ ພັນທະຕ່າງໆ.<br>**<u>ການເງິນ-ທຶນ:</u>**<br>• ໃຫ້ລະທະນາຄານ ແລະ ສະຖາບັນການເງິນເລື່ອນການສໍາລະດອກເບ້ຍ ແລະ ຕົ້ນທຶນ.<br>• ໃຫ້ທະນາຄານ ແລະ ສະຖາບັນການເງິນປ່ອຍເງິນກູ້ເພື່ອເປັນທຶນໝູນວຽນໃຫ້ແກ່ໂຮງງານ ແລະ ທຸລະກິດປົ່ນອ້ອມເພື່ອລິເລີ່ມການຜະລິດຄືນໃໝ່.<br>**<u>ແຮງງານ:</u>**<br>• ໃຫ້ລັດຖະບານກໍານົດເງິນອຸດໜູນຫວ່າງງານໃຫ້ແຮງງານທີ່ເປັນສະມາຊິກກອງທຶນປະກັນສັງຄົມທີ່ຖືກປົດອອກຈາກວຽກໃນວົງເງິນເດືອນຕໍ່າສຸດ 1,100,000 ກີບ. |

### 3.1.2 ຂໍ້ສະເໜີຂອງຂະແໜງທຸລະກິດກະສິກຳ.

ຂະແໜງກະສິກຳມີສະພາບເຊັ່ນດຽວກັບຂະແໜງອຸດສາຫະກຳປຸງແຕ່ງ ແລະ ຂໍ້ສະເໜີຂອງຂະແໜງດັ່ງກ່າວມີໃນຕາຕາລາງ 3.2 ລຸ່ມນີ້:

**ຕາຕາລາງ 3.2: ຂໍ້ສະເໜີຂອງຂະແໜງທຸລະກິດກະສິກຳ.**

| **ຜົນກະທົບຕໍ່ຂະແໜງທຸລະກິດກະສິກຳ** | **ຂໍ້ສະເໜີຂອງຂະແໜງທຸລະກິດກະສິກຳ** |
|---|---|
| • ການປິດກິດຈະການເຮືອນພັກ, ຮ້ານອາຫານ, ໂຮງແຮມ ແລະ ການທ່ອງທ່ຽວ ເຮັດໃຫ້ຕະຫຼາດການບໍລິໂພກພືດຜັກ, ຊີ້ນ ແລະ ອາຫານຫຼຸດລົງ.<br>• ການລັກລອບນຳເຂົ້າພືດຜັກ, ຊີ້ນ ແລະ ອາຫານຈາກປະເທດເພື່ອນບ້ານ ໄດ້ແຊກແຊງລາຄາໃນທ້ອງຕະຫຼາດ ແລະ ເຮັດໃຫ້ຕະຫຼາດຂອງຜູ້ຜະລິດລາວແຄບລົງ.<br>• ການສະກັດກັ້ນການຂົນສົ່ງສິນຄ້າລະຫວ່າງແຂວງຕໍ່ແຂວງເຮັດໃຫ້ບໍ່ສາມາດລຳລຽງສິນຄ້າກະສິກຳໄດ້.<br>• ການສະກັດກັ້ນການຂົນສົ່ງຂ້າມແດນ ສ້າງຄວາມເສຍຫາຍໃຫ້ສິນຄ້າກະສິກຳເວລາຂົນສົ່ງ.<br>• ຊາວກະສິກອນຂາດລາຍໄດ້ເພາະບໍ່ສາມາດຂາຍຜົນລະປູກໄດ້ ແລະ ບໍ່ມີເງິນເພື່ອລົງທຶນໃສ່ລະດູການໃໝ່.<br>• ຊາວກະສິກອນບາງຄົນບໍ່ສາມາດຈ່າຍຄ່າແຮງງານ, ຄ່າເຊົ່າດິນ ແລະ ຄ່າດອກເບ້ຍ ແລະ ຕົ້ນທຶນຈາກການກູ້ຢືມທະນາຄານ ແລະ ນອກລະບົບທີ່ມີອັດຕາດອກເບ້ຍເກີນ 10% ຕໍ່ເດືອນ.<br>• ສະພາບການເງິນ, ການສະໜອງ ແລະ ຄວາມຕ້ອງການແມ່ນກະທົບວົງໂຄຈອນການຜະລິດກະສິກຳທັງໝົດຈາກຊາວກະສິກອນ, ຂົນສົ່ງ, ໂຮງງານປຸງແຕ່ງ, ບໍລິສັດຂາຍສົ່ງ ແລະ ອື່ນໆ. | <u>**ສະພາບຄ່ອງ:**</u><br>• ໃຫ້ລັດຖະບານເພີ່ມທະວີການອຳນວຍຄວາມສະດວກຢູ່ດ່ານສາຍແດນເພື່ອການຂົນສົ່ງສິນຄ້າກະສິກຳຕາມລະບົບ ແບບກະເສດ-ສັນຍາ ໄດ້ຖືກສົ່ງອອກໄປຈຸດໝາຍປາຍທາງ ເຮັດໃຫ້ການນຳເຂົ້າຂອງວັດຖຸປັດໃຈການຜະລິດ.<br>• ສະເພາະສິນຄ້າກະສິກຳທີ່ສົ່ງອອກໄປ ສປ ຈີນ ໃຫ້ລັດຖະບານອານຸຍາດໃຫ້ລົດບັນທຸກຈາກ ສປ ຈີນ ເຂົ້າມາເກັບເອົາຜົນລະປູກຈາກຊາວກະສິກອນລາວ ໂດຍຜະຕິບັດຕາມມາດຕະການປ້ອງກັນທີ່ວາງໄວ້.<br>• ໃຫ້ແຕ່ລະແຂວງປົດລັອກການສະກັດກັ້ນໃຫ້ລົດຂົນສົ່ງສິນຄ້າກະສິກຳເຖິງຕະຫຼາດໃນທົ່ວປະເທດ.<br>• ໃຫ້ລັດຖະບານອອກນະໂຍບາຍພາສີເພື່ອຍົກເວັ້ນພາສີໃຫ້ແກ່ການນຳເຂົ້າແນວພັນ ແລະ ອຸປະກອນວັດຖຸປັດໃຈການຜະລິດກະສິກຳເພື່ອສົ່ງເສີມໃຫ້ຜູ້ປະກອບການຫັນມາລົງທຶນດ້ານກະສິກຳຫຼາຍຂຶ້ນ.<br><br><u>**ການເງິນ-ທຶນ:**</u><br>• ໃຫ້ທະນາຄານ ແລະ ສະຖາບັນການເງິນຈຸລະພາກມີການຜ່ອນຜັນເງິນກູ້ໃຫ້ຊາວກະສິກຳໃຫ້ທົ່ວເຖິງ ແລະ ມີການເຂົ້າເຖິງແຫຼ່ງເງິນກູ້ດັ່ງກ່າວໄດ້ງ່າຍເພື່ອໃຫ້ຫຼຸດຜ່ອນການກູ້ຢືມນອກລະບົບທີ່ມີດອກເບ້ຍສູງ.<br>• ໃຫ້ທະນາຄານມີໂຄງການປ່ອຍສິນເຊື່ອ SME ໃຫ້ຜູ້ປະກອບການທີ່ຜະລິດ ແລະ ບໍລິການທີ່ຜະລິດ ແລະ ບໍລິການໃນຕ່ອງໂສ້ການຜະລິດກະສິກຳ, ເງິນທຶນ 200 ຕື້ທີ່ກຳນົດປ່ອຍກູ້ໃຫ້ SME ແມ່ນໃຫ້ຈັດຕັ້ງປະຕິບັດໂດຍດ່ວນ.<br><br><u>**ແຮງງານ:**</u><br>• ໃຫ້ລັດຖະບານມີນະໂຍບາຍຊ່ວຍຄອບຄົວຊາວກະສິກອນທີ່ໄດ້ຫວ່າງງານ. |

### 3.1.3 ຂໍ້ສະເໜີຂອງຂະແໜງທຸລະກິດທ່ອງທ່ຽວ.

ຂະແໜງທ່ອງທ່ຽວມີຜົນກະທົບຮ້າຍແຮງກວ່າຂະແໜງການອື່ນ ແລະ ມີຄວາມບໍ່ແນ່ນອນກ່ຽວກັບເວລາທີ່ຂະແໜງການຈະຕ້ອງດຳເນີນທຸລະກິດຕໍ່ໄດ້. ຂໍ້ສະເໜີຂອງຂະແໜງທ່ອງທ່ຽວມີໃນຕາຕາລາງ 3.3 ລຸ່ມນີ້:

**ຕາຕາລາງ 3.3: ຂໍ້ສະເໜີຂອງຂະແໜງທຸລະກິດການທ່ອງທ່ຽວ.**

| ຜົນກະທົບຕໍ່ຂະແໜງທຸລະກິດການທ່ອງທ່ຽວ | ຂໍ້ສະເໜີຂອງຂະແໜງທຸລະກິດການທ່ອງທ່ຽວ |
|---|---|
| • ນັກທ່ອງທ່ຽວຫຼຸດລົງ ການບໍລິການໂຮງແຮມ ແລະ ເຮືອນພັກ, ຮ້ານອາຫານໄດ້ຫຼຸດຜ່ອນກິດຈະການລົງ.<br>• 60% ຂອງທຸລະກິດທ່ອງທ່ຽວໄດ້ປິດກິດຈະການຂອງຕົນໃນໄລຍະໄຕມາດທີ 01 ໃນປີ 2020.<br>• 90% ຂອງທຸລະກິດທ່ອງທ່ຽວໄດ້ປິດກິດຈະກຳຂອງຕົນ ໃນໄລຍະການປະຕິບັດຄຳສັ່ງເລກທີ 06/ນຍ.<br>• ການປິດກິດຈະກຳໄດ້ຫຼຸດຈຳນວນແຮງງານ ແລະ ມີຄົນຫວ່າງງານ.<br>• ການຫວ່າງງານໃນຂະແໜງທ່ອງທ່ຽວອາດຈະເຖິງ 12 ເດືອນ.<br>• ການປິດກິດຈະການເຮັດໃຫ້ຜູ້ປະກອບການຂາດສະພາບຄ່ອງດ້ານການເງິນເຮັດໃຫ້ບໍ່ສາມາດຈ່າຍເງິນເດືອນ, ເງິນແຮງງານ, ດອກເບ້ຍ ແລະ ຕົ້ນທຶນເງິນກູ້, ຄ່າເຊົ່າສະຖານທີ່ ແລະ ຊໍາລະອາກອນ. | **<u>ສະພາບຄ່ອງ:</u>**<br>• ໃຫ້ລັດຖະບານເລື່ອນເວລາຊໍາລະອາກອນຕໍ່ທຸລະກິດທີ່ຢູ່ໃນລະບົບຕ່ອງໂສ້ການຜະລິດຂອງອຸດສາຫະກຳທ່ອງທ່ຽວເຊັ່ນ: ອາກອນມູນຄ່າເພີ່ມ, ອາກອນກຳໄລ ແລະ ອາກອນເງິນເດືອນ.<br>• ໃຫ້ທະນາຄານ ແລະ ສະຖາບັນການເງິນເລື່ອນການຈ່າຍດອກເບ້ຍ ແລະ ຕົ້ນທຶນ ແລະ ປັບໂຄງສ້າງໜີ້ໃໝ່ຈົນເຖິງເດືອນທັນວາປີ2020 ເນື່ອງຈາກຂະແໜງທ່ອງທ່ຽວໄດ້ອີງໃສ່ຕະຫຼາດພາຍນອກເປັນສ່ວນໃຫຍ່.<br>• ໃຫ້ພາກສ່ວນທີ່ກ່ຽວຂ້ອງຫຼຸດຄ່ານໍ້າ, ຄ່າໄຟຟ້າ, ຄ່າອິນເຕີເນັດ, ຄ່າເຊົ່າສະຖານທີ່ທ່ອງທ່ຽວໃຫ້ຜູ້ປະກອບການທ່ອງທ່ຽວຫຼຸດລົງເຖິງ50% ແລະ ເລື່ອນການຊໍາລະແຕ່ເດືອນ 02 ຫາເດືອນ 12 ປີ 2020.<br><br>**<u>ການເງິນ:</u>**<br>• ໃຫ້ທະນາຄານມີໂຄງການປ່ອຍສິນເຊື່ອ SME ໃຫ້ຜູ້ປະກອບການທີ່ຜະລິດ ແລະ ບໍລິການໃນຕ່ອງໂສ້ການຜະລິດບໍລິການອຸດສາຫະກຳທ່ອງທ່ຽວເພື່ອເປັນທຶນໝູນວຽນ ເວລາເລີ່ມຜະລິດຄືນໃໝ່. ເງິນທຶນປ່ອຍກູ້ໃຫ້ SME ຄວນຈະແບ່ງໃຫ້ຂະແໜງອຸດສາຫະກຳທ່ອງທ່ຽວ.<br><br>**<u>ແຮງງານ:</u>**<br>• ໃຫ້ລັດຖະບານມີເງິນອຸດໜູນໃຫ້ແກ່ພະນັກງານທີ່ໄດ້ຢຸດວຽກຊົ່ວຄາວແຕ່ເດືອນ 02 ເປັນຕົ້ນມາເຖິງເດືອນ 12 ປີ 2020. ສະເພາະພະນັກງານທີ່ໄດ້ເຂົ້າກອງທຶນປະກັນສັງຄົມ. |

### 3.1.4 ຂໍ້ສະເໜີດ້ານການເງິນ.

ມາດຕະການທາງດ້ານການເງິນມີຄວາມສໍາຄັນຕໍ່ທຸລະກິດ, ສຄອ ແຫ່ງຊາດລາວ ຈຶ່ງໄດ້ສະເໜີບັນດາມາດຕະການດັ່ງເນື້ອໃນຕາຕາລາງ 3.4 ລຸ່ມນີ້:

**ຕາຕາລາງ 3.4: ຂໍ້ສະເໜີດ້ານການເງິນ ແລະ ທຶນ.**

| **ຜົນກະທົບຕໍ່ຂະແໜງການເງິນ** | **ຂໍ້ສະເໜີຂອງຂະແໜງການເງິນ** |
|---|---|
| ຜົນກະທົບສະເພາະຂະແໜງການເງິນ, ສະພາບຄວາມເປັນຈິງໃນປັດຈຸບັນເປັນຜົນກະທົບຕໍ່ການປະຕິບັດນະໂຍບາຍການມອບເງິນໃນວິກິດການ COVID-19.<br>• ທະນາຄານທຸລະກິດ ແລະ ສະຖາບັນການເງິນມີຄວາມຫຍຸ້ງຍາກໃນການຫຼຸດດອກເບ້ຍ ແລະ ຫຼຸດເງື່ອນໄຂໃຫ້ເງິນກູ້ ຍ້ອນວ່າຕະຫຼາດທຶນມີຄວາມສ່ຽງສູງໃນ ສປປ ລາວ.<br>• ມີທະນາຄານ ແລະ ສະຖາບັນການເງິນຈໍານວນໜຶ່ງຂາດສະພາບຄ່ອງດ້ານທຶນຮອນ ແລະ ບໍ່ສາມາດປະຕິບັດນະໂຍບາຍສະໜອງເງິນກູ້ໃຫ້ຜູ້ປະກອບການໄດ້.<br>• ລະບົບການສະໜອງເງິນກູ້ໃຫ້ພາກທຸລະກິດແມ່ນຢູ່ໃນກໍາມືຂອງຕະຫຼາດທຶນນອກລະບົບເກືອບ 50%. ລັດຖະບານມີຄວາມຫຍຸ້ງຍາກໃນການແຊກແຊງການກໍານົດອັດຕາດອກເບ້ຍ ແລະ ເງື່ອນໄຂຂອງຜູ້ປ່ອຍກູ້ນອກລະບົບດັ່ງກ່າວ.<br>• ລະບົບການຄຸ້ມຄອງ ແລະ ແລກປ່ຽນເງິນຕາແມ່ນຢູ່ໃນຕະຫຼາດທຶນນອກລະບົບເຊັ່ນດຽວກັນ. ໃນວິກິດການ COVID-19 ການຫຼູດໂຕນກັນລະຫວ່າງອັດຕາແລກປ່ຽນທາງການ ແລະ ນອກລະບົບແມ່ນຜິດດ່ຽງເຖິງ 10%. ເປັນຜົນກະທົບໃນການສະໜອງເງິນກູ້ເປັນເງິນກີບຈາກທະນາຄານໃຫ້ຜູ້ປະກອບການໄປຊື້ອັດຖຸປັດໃຈການຜະລິດຢູ່ຕ່າງປະເທດ. | **<u>ສະພາບຄ່ອງ:</u>**<br>• ໃຫ້ລັດຖະບານອອກຂໍ້ຕົກລົງໃຫ້ທະນາຄານຊ່ວຍລູກຄ້າໂດຍມີການເລື່ອນການຊໍາລະໜີ້ອາດຈະລວມທັງຕົ້ນທຶນ ແລະ ດອກເບ້ຍເປັນເວລາ 06 ເດືອນ. ຈັດສັນແຜນກູ້ຢືມໂດຍເພີ່ມວົງເງິນ ແລະ ຂະຫຍາຍເວລາຂອງສັນຍາກູ້ຢືມອີກຕື່ມ 1.5 ເຖິງ 02 ປີ ສໍາລັບເງິນກູ້ເພື່ອທຶນໝູນວຽນໃນຂະແໜງທີເປັນຍຸດທະສາດ.<br>• ໃຫ້ລັດຖະບານລະດົມເງິນກູ້ດອກເບ້ຍຕໍ່າປອດຕົ້ນທຶນໄລຍະຍາວຈາກຄູ່ຮ່ວມພັດທະນາ ແລະ ປະເທດເພື່ອນມິດ ໂດຍສະເພາະແອັບພິເຄເຊິນ (Budget Support Operation) ເຊິ່ງເປັນການຕື່ມເງິນໃສ່ງົບປະມານໂດຍກົງ.<br>• ໃຫ້ລັດຖະບານຜ່ອນຜັນບາງຂໍ້ກໍານົດເພື່ອປ່ອຍທຶນບາງສ່ວນພາຍໃນສະຖາບັນການເງິນເຊັ່ນ:ອັດຕາສ່ວນຄັງແຮ,ອັດຕາສ່ວນທຶນ,ການເພີ່ມທຶນອາດຈະຜ່ອນຜັນອັດຕາສ່ວນທຶນສໍາລັບຜູ້ທີ່ຖອກລ່ວງໜ້າ,ໂຈະຂໍ້ກໍານົດວ່າດ້ວຍຄັງແຮຝາກບັງຄັບ 6-12 ເດືອນ, ຜ່ອນຜັນການປ່ອຍເງິນເປັນເງິນຕາ ແລະ ການກູ້ຢືມຈາກຕ່າງປະເທດ ເພາະທຶນຈາກຕ່າງປະເທດມີຕົ້ນທຶນຕໍ່າ.<br>• ສ້າງກົນໄກສັບປ່ຽນສະກຸນເງິນຕາ (Currency Swap-Facility) ຢູ່ທະນາຄານແຫ່ງລັດເພື່ອອໍານວຍຄວາມສະດວກໃຫ້ສະຖາບັນການເງິນໃນກໍລະນີທີ່ເຂົາເຈົ້າໃຫ້ກູ້ຢືມເງິນມາຈາກຕ່າງປະເທດ.<br>• ລະດົມໃຫ້ສະຖາບັນການເງິນຈຸລະພາກ (ສກຈ) ປະຕິບັດຂໍ້ຕົກລົງຂອງທະນາຄານແຫ່ງລັດສະບັບເລກທີ່ 238/ທຫລ ຕາມຄວາມເໝາະສົມກັບສະພາບຂອງສະຖາບັນ.<br>• ໃຫ້ລັດຖະບານປ່ອຍເງິນກູ້ສຸກເສີນໃຫ້ແກ່ ສກຈ ໃນອັດຕາດອກເບ້ຍແບບພິເສດໂດຍປອດຕົ້ນທຶນ ແລະ ດອກເບ້ຍໄລຍະ 03 ເດືອນໃນວົງເງິນຈໍາກັດ ແລະ ໄລຍະເວລກູ້ 06 ຫາ 12 ເດືອນ.<br>• ໃຫ້ລັດຖະບານເລື່ອນຊໍາລະອາກອນກໍາໄລລ່ວງໜ້າສໍາລັບໄຕມາດ 01 ແລະ 02 ຂອງປີ 2020 ສໍາລັບອົງກອນທີ່ມີຜົນກໍາໄລເພື່ອໃຫ້ ສກຈ ສາມາດເອົາເງິນດັ່ງກ່າວເພື່ອໄປປ່ອຍກູ້ໃຫ້ແກ່ລູກຄ້າເປັນປົກກະຕິ ສກຈ ຈະຈ່າຍອາກອນກໍາໄລລ່ວງໜ້າໃນທຸກໆໄຕມາດ.<br>• ສະເໜີໃຫ້ກະຊວງການເງິນ ເລື່ອນການສໍາລະອາກອນກໍາໄລລ່ວງໜ້າຂອງ ສກຈ ໄປທ້າຍປີ 2020. |

### 3.1.5 ຂໍ້ສະເໜີດ້ານແຮງງານ.

ມາດຕະການດ້ານແຮງງານມີຄວາມສຳຄັນໃນການດຳເນີນທຸລະກິດ, ສຄອ ແຫ່ງຊາດລາວ ຈຶ່ງໄດ້ສະເໜີບັນດາມາດຕະການໃນຕາຕາລາງ 3.5 ລຸ່ມນີ້:

**ຕາຕາລາງ 3.5 ຂໍ້ສະເໜີດ້ານແຮງງານ**

| ຜົນກະທົບຕໍ່ແຮງງານ | ຂໍ້ສະເໜີຂອງແຮງງານ |
|---|---|
| • ຜູ້ປະກອບການໄດ້ປັບປຸງລະບົບການຜະລິດໂດຍການຫຼຸດຈຳນວນແຮງງານລົງ ແລະ ຢຸດຈ້າງງານຊົ່ວຄາວເປັນເວລາ 01 ຫາ 03 ເດືອນ ໃນຂະແໜງການອຸດສາຫະກຳປຸງແຕ່ງ ແລະ ເປັນເວລາ 03 ເຖິງ 12 ເດືອນໃນຂະແໜງອຸດສາຫະກຳທ່ອງທ່ຽວ.<br>• ຍ້ອນຄວາມບໍ່ແນ່ນອນວ່າຜູ້ໃຊ້ແຮງງານຈະຮັບເອົາແຮງງານຄືນ ຫຼື ບໍ່ ແລະ ຍ້ອນລະບົບສະຫວັດດີການສັງຄົມທີ່ມີຢູ່ບໍ່ທົ່ວເຖິງ, ຜູ້ຫວ່າງງານຈຳເປັນຕ້ອງໄດ້ດີ້ນລົນຊອກຫາລາຍໄດ້ອື່ນເພື່ອລ້ຽງຊີບ ແລະ ອາດຈະປ່ຽນອາຊີບ ແລະ ກັບໄປເຮັດວຽກງານເດີມໃນເຂດຊົນນະບົດ. ເຮັດໃຫ້ບັນຫາຜູ້ປະກອບການຈະຂາດແຮງງານໃນເວລາມີການສືບຕໍ່ການຜະລິດ ແລະ ບໍລິການຄືນໃໝ່ຫຼັງວິກິດການ Covid-19.<br>• ແຮງງານທີ່ຢູ່ນອກລະບົບ ແລະ ເຄິ່ງລະບົບໂດຍສະເພາະໃນຂະແໜງກະສິກຳ, ການຄ້າຂາຍຍ່ອຍ ແລະ ຂະແໜງທ່ອງທ່ຽວ ແມ່ນບໍ່ມີວຽກເຮັດ ແລະ ບໍ່ມີສະຫວັດດີການໃດໆ. ຜົນກະທົບຕໍ່ແຮງງານນອກລະບົບ, ເຮັດໃຫ້ຄົວເຮືອນຈຳນວນຫຼາຍຂາດລາຍຮັບ,ຂາດເຂີນອາຫານການກິນ ແລະ ອາດຈະເກີດມີບັນຫາໃນສັງຄົມ.<br>• ແຮງງານທີ່ໄດ້ຢຸດວຽກຊົ່ວຄາວແມ່ນບໍ່ສາມາດຊຳລະຄ່າດອກເບ້ຍ ແລະ ຕົ້ນທຶນການກູ້ຢືມຍານພະຫານະ, ເຄື່ອງໃຊ້ໃນຄົວເຮືອນ, ພ້ອມທັງຄ່າທີ່ພັກອາໄສ ແລະ ອື່ນໆ. | **<u>ດ້ານສະຫວັດດີການສັງຄົມ:</u>**<br>• ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການຄຸ້ມຄອງວຽກງານປະກັນສັງຄົມໄດ້ກຳນົດອັດຕາເງິນຫວ່າງງານໃຫ້ແກ່ແຮງງານທີ່ເປັນສະມາຊິກກອງທຶນປະກັນສັງຄົມ.<br>• ໃຫ້ມີການໂຄສະນາເຜີຍແຜ່ນະໂຍບາຍອຸດໜູນຫວ່າງງານໃຫ້ຜູ້ປະກອບການ ແລະ ຜູ້ອອກແຮງງານຢ່າງເລິກເຊິ່ງ ແລະ ກວ້າງຂວາງໂດຍຮີບດ່ວນ. ພ້ອມທັງພິຈາລະນາການຮ້ອງຂໍອຸດໜູນຫວ່າງງານຕາມທີ່ໄດ້ກຳນົດໄວ້ໃນກົດໝາຍປະກັນສັງຄົມ.<br>• ໃຫ້ມີຄວາມຊັດເຈນໃນການຊ່ວຍເຫຼືອການຈ່າຍເງິນເດືອນໃຫ້ແກ່ພະນັກງານທີ່ວິສາຫະກິດໄດ້ມີການຢຸດຕິການຜະລິດ ຫຼື ເຄື່ອນໄຫວທຸລະກິດຕາມມະຕິຄຳສັ່ງເລກທີ 06/ນຍ.<br>• ໃຫ້ລັດຖະບານໄດ້ຫຼຸດຜ່ອນຄຳສັ່ງເລກທີ 06/ນຍ ແລະ ເງື່ອນໄຂທີ່ກຳນົດໄວ້ໃນຄຳສັ່ງຂອງຄະນະສະເພາະກິດເລກທີ່ 031/ສພກ ເພື່ອໃຫ້ໂຮງງານອຸດສາຫະກຳ ແລະ ກິດຈະການທຸລະກິດໄດ້ເປີດກິດຈະການຄືນໃໝ່ ແລະ ດຳເນີນທຸລະກິດຮັບເອົາພະນັກງານເຂົ້າຄືນ ແລະ ຫຼຸດຜ່ອນຄົນຫວ່າງງານ ແລະ ພາລະຂອງລັດຖະບານໃນການຊ່ວຍເຫຼືອຜູ້ຫວ່າງງານໃນສັງຄົມ. |

## 3.2 ສັງລວມຂໍ້ສະເໜີມາດຕະການໃນໄລຍະພະຍາດລະບາດຂອງ ສຄອ ແຫ່ງຊາດລາວ.

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ໄດ້ມີການວິເຄາະ ໂດຍສະພາບການຕົວຈິງ ແລະ ຜົນກະທົບຕໍ່ທຸລະກິດຈາກການສຳຫຼວດ ແລະ ການເຮັດວຽກໃນກຸ່ມຄົ້ນຄວ້າຂອງບັນດາຂະແໜງການທຸລະກິດ. ສຄອ ແຫ່ງຊາດລາວໄດ້ສົ່ງໜັງສືສະເໜີຫຼາຍສະບັບໃຫ້ແກ່ລັດຖະບານ ກ່ອນ ແລະ ຫຼັງ ຄຳສັ່ງເລກທີ 06/ນຍ. ໃນໄລຍະຈັດຕັ້ງປະຕິບັດມະຕິດັ່ງກ່າວປະທານ ສຄອ ແຫ່ງຊາດລາວ ພ້ອມດ້ວຍນັກທຸລະກິດ ແລະ ວິຊາການຈຳນວນໜຶ່ງ ໄດ້ຖືກແຕ່ງຕັ້ງເຂົ້າໃນຄະນະສະເພາະກິດຮັບຜິດຊອບຕິດຕາມຜົນກະທົບ ແລະ ຜັນຂະຫຍາຍນະໂຍບາຍ ແລະ ມາດຕະການ ເພື່ອຫຼຸດຜ່ອນຜົນກະທົບຈາກການລະບາດຂອງ COVID-19 (ຄຳສັ່ງເລກທີ 032/ນຍ).

ບັນດາຂໍ້ສະເໜີຂອງ ສຄອ ແຫ່ງຊາດລາວ ແລະ ຄວາມຄືບໜ້າໃນການແກ້ໄຂບັນຫາ ແລະ ຂໍ້ສະເໜີຂອງພາກສ່ວນທີ່ກ່ຽວຂ້ອງຂອງລັດຖະບານໄດ້ສັງລວມຢູ່ ຕາຕາລາງ 3.6 ແລະ 3.7 ດັ່ງຕໍ່ໄປນີ້:

**ຮູບທີ 3.6: ຕາຕາລາງສັງລວມບັນຫາ ແລະ ຄວາມຄືບໜ້າ ຂໍ້ສະເໜີ ຂອງ ສຄອ ແຫ່ງຊາດລາວ ກ່ຽວກັບ ຜົນກະທົບຂອງ COVID-19.**

| **ບົດສະເໜີ ເລກທີ 0259/ສຄອຊ, ລົງວັນທີ 12 ມີນາ 2020** | **ຄວາມຄືບໜ້າ ຫຼັງ ຄຳສັ່ງ 06/ນຍ** |
|---|---|
| **ສະເໜີກະຊວງການເງິນ:** ໃຫ້ເລື່ອນເວລາຊຳລະອາກອນຂອງ ປີ 2019 ໄປອີກ ສອງງວດ. | • **ລົງວັນທີ 10 ເມສາ 2020**, ກະຊວງການເງິນ ອອກແຈ້ງການ ເລກທີ 1027/ກງ ເລື່ອງ ການຈັດຕັ້ງປະຕິບັດພັນທະອາກອນ ຕາມຂໍ້ຕົກລົງວ່າດ້ວຍການກຳນົດນະໂຍບາຍ ແລະ ມາດຕະການ ເພື່ອ ຫຼຸດຜ່ອນຜົນກະທົບຂອງການລະບາດຂອງພະຍາດ COVID-19.<br>• **ລົງວັນທີ 21 ເມສາ 2020**, ກະຊວງການເງິນ ອອກແຈ້ງການ ເລກທີ 0764/ຫກງ ເພື່ອປ່ຽນແທນ ແຈ້ງການ ເລກທີ 0636/ຫກງ ລົງວັນທີ 26 ມີນາ 2020 ເລື່ອງການເລື່ອນເວລາ ສົ່ງເອກະສານການເງິນ ແລະ ລາຍງານຜົນການເຄື່ອນໄຫວປະຈຳປີ 2019: ຄືໃຫ້ເລື່ອນເວລາ ສົ່ງເອກະສານການເງິນ ແລະ ລາຍງານຜົນການເຄື່ອນໄຫວປະຈຳປີ 2019 ອອກໄປຈົນເຖິງ ວັນທີ 29 ພຶດສະພາ 2020.<br>• **ລົງວັນທີ 22 ເມສາ 2020**, ກະຊວງການເງິນ ອອກ ແຈ້ງການ ເລກທີ 1061/ກງ, ເລື່ອງການຈັດຕັ້ງປະຕິບັດພັນທະອາກອນຕາມຂໍ້ຕົກລົງວ່າດ້ວຍການກຳນົດນະໂຍບາຍ ແລະ ມາດຕະການເພື່ອຫຼຸດຜ່ອນຜົນກະທົບຈາກການລະບາດຂອງພະຍາດ ໂຄວິດ-19.<br>• **ລົງວັນທີ 24 ເມສາ 2020**, ການເງິນອອກ ແຈ້ງການເລກທີ 1128/ກສອ ເລື່ອງການຈັດຕັ້ງປະຕິບັດພັນທະອາກອນຕາມຂໍ້ຕົກລົງວ່າດ້ວຍການກຳນົດນະໂຍບາຍ ແລະ ມາດຕະການເພື່ອຫຼຸດຜ່ອນຜົນກະທົບຈາກການລະບາດຂອງ COVID-19.<br>• **ວັນທີ 26 ມີນາ 2020**, ກະຊວງການເງິນ ເລກທີ 0636/ຫກງ ເລື່ອງການເລື່ອນເວລາ ສົ່ງເອກະສານການເງິນ ແລະ ລາຍງານຜົນການເຄື່ອນໄຫວປະຈຳປີ 2019 ໂດຍ ອະນຸຍາດ ໃຫ້ເລື່ອນເວລາສົ່ງເອກະສານລາຍງານການເງິນ ແລະ ລາຍງານຜົນການເຄື່ອນໄຫວປະຈຳປີ 2019 ອອກໄປຈົນເຖິງວັນທີ 30 ເມສາ. |
| **ສະເໜີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃຫ້**:<br>1. ໂຄສະນາ ເຜີຍແຜ່ ນະໂຍບາຍການອຸດໜູນວ່າງງານໃຫ້ແກ່ຜູ້ປະກອບການ ແລະ ຜູ້ອອກແຮງງານ ຢ່າງເລິກເຊິ່ງ ແລະ ກວ້າງຂວາງ, ພ້ອມທັງ ພິຈາລະນາການຮ້ອງຂໍການອຸດໜູນວ່າງວຽກ ພາຍໃນ 30 ວັນ ຕາມທີ່ໄດ້ລະບຸໃນມາດຕາ 95 ຂອງກົດໝາຍປະກັນສັງຄົມ ເພື່ອຊ່ວຍເຫຼືອຜູ້ວ່າງງານ ໃນຊ່ວງວິກິດຂອງການລະບາດຂອງເຊື້ອໄວຣັສ ໂຄວິດ-19;<br>2. ພິຈາລະນາ ການໃຫ້ເງິນອຸດໜຸນ ແກ່ພະນັກງານ ກໍລະນີທີ່ຖືກພັກງານຊົ່ວຄາວ ໃນໄລຍະ ການແຜ່ລະບາດຂອງເຊື້ອໄວຣັສ COVID-19;<br>3. ພິຈາລະນາເລື່ອນເວລາຊຳລະການປະກອບເງິນສົມທົບເຂົ້າກອງທຶນປະກັນສັງຄົມແບບບັງຄັບ ຂອງປີ 2020 ດ້ວຍ, ເພື່ອຫຼຸດຜ່ອນພາລະຂອງຜູ້ປະກອບການ ໃນຊ່ວງການລະບາດຂອງ ເຊື້ອໄວຣັສ ໂຄວິດ-19 | • **ລົງວັນທີ 02 ເມສາ 2020** ນາຍົກລັດຖະມົນຕີ ອອກ ຂໍ້ຕົກລົງ ເລກທີ 31/ນຍ ລົງວັນທີ ລະບຸໃຫ້:ກະຊວງແຮງງານເລື່ອນການເກັບ ຊຳລະພັນທະການປະກອບສ່ວນປະກັນສັງຄົມແບບບັງຄັບ ຂອງຫົວໜ່ວຍທຸລະກິດ ທີ່ໄດ້ຮັບຜົນກະທົບ ເປັນໄລຍະເວລາ 3 ເດືອນ (ເດືອນເມສາ, ພຶດສະພາ ແລະ ມິຖຸນາ 2020).<br>• **ລົງວັນທີ 07 ເມສາ 2020**, ລັດຖະມົນຕີກະຊວງແຮງງານ ໄດ້ຍື່ນໜັງສະເໜີ ເລກທີ 1056/ຮສສ ຫາ ທ່ານນາຍົກລັດຖະມົນຕີເພື່ອຂໍການອະນຸມັດເງິນອຸດໜູນ.<br>• **ລົງວັນທີ 24 ເມສາ 2020**, ມະຕິຕົກລົງ ກອງປະຊຸມລັດຖະບານສະໄໝສາມັນປະຈຳເດືອນເມສາ 2020, ເລກທີ 05/ລບ, ລະບຸ ເຫັນດີໃຫ້ປະຕິບັດເງິນອຸດໜູນຕໍ່ແຮງງານ ສຳລັບແຮງງານທີ່ເປັນສະມາຊິກກອງທຶນປະກັນສັງຄົມ ຕາມກົດໝາຍປະກັນສັງຄົມກຳນົດ. ສຳລັບແຮງງານທີ່ຢູ່ນອກລະບົບ, ໃຫ້ຄົ້ນຄວ້າການປະຕິບັດນະໂຍບາຍໃນຮູບແບບຊ່ວຍເຫຼືອດ້ານສັງຄົມສົງເຄາະ ຕາມດຳລັດວ່າດ້ວຍສັງຄົມສົງເຄາະ ສະບັບເລກທີ 169/ລບ, ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສົມທົບກັບໃຫ້ອຳນາດການປົກຄອງແຕ່ລະຂັ້ນ ສັງລວມຈຳນວນຜູ້ທີ່ຈະໄດ້ຮັບການຊ່ວຍເຫຼືອຕາມເງື່ອນໄຂຕົວຈິງ ໃຫ້ຊັດເຈນກ່ອນ ພ້ອມທັງຄິດໄລ່ອັດຕານະໂຍບາຍທີ່ເໝາະສົມ ແລະຄວາມຕ້ອງການທາງດ້ານງົບປະມານທັງໝົດຢ່າງຊັດເຈນ, ຈາກນັ້ນຈຶ່ງສະເໜີລັດຖະບານພິຈາລະນາຕົກລົງ. |

| **ບົດສະເໜີ ເລກທີ 0259/ສຄອຊ,**<br>**ລົງວັນທີ12 ມີນາ 2020** | \\<br>**ຄວາມຄືບໜ້າ ຫຼັງ ຄຳສັ່ງ 06/ນຍ** |
|---|---|
| **ສະເໜີທະນາຄານແຫ່ງ ສປປ ລາວໃຫ້:**<br>1. ຮ່ວມປຶກສາຫາລື ກັບ ບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸນລະພາກ ເພື່ອ ພິຈາລະນາ ຄວາມເປັນໄປໄດ້ ໃນການກຳນົດບາງມາດຕະການ ໃນການໃຫ້ຄວາມຊ່ວຍເຫຼືອລູກໜີ້ ໃນໄລຍະການແຜ່ລະບາດຂອງເຊື້ອໄວຣັສ COVID-19 ເຊັ່ນ: ການເລື່ອນ ຫຼື ຜ່ອນຊຳລະດອກເບ້ຍທະນາຄານ, ແລະ ອື່ນໆ.<br>2. ສະເໜີໃຫ້ ທະນາຄານ ແຫ່ງ ສປປ ລາວ ພິຈາລະນາ ຫຼຸດຜ່ອນ ຂໍ້ກຳນົດໃນການຈັດຊັ້ນໜີ້ ແລະ ຂໍ້ກຳນົດການຊຳລະໜີ້ຂອງລູກຄ້າສິນເຊື່ອຂອງສະຖາບັນການເງິນຈຸນລະພາກ ຊົ່ວຄາວ, ເພື່ອ ຫຼຸດຜ່ອນຜົນກະທົບຕໍ່ລູກຄ້າສິນເຊື່ອ.<br>3.ພິຈາລະນາ ເພີ່ມສະພາບຄ່ອງໃນລະບົບທະນາຄານ ເພື່ອໃຫ້ພາກທຸລະກິດສາມາດເຂົ້າຫາເງິນກູ້ໄດ້ຫຼາຍຂຶ້ນ ເຊັ່ນ ຄົ້ນຄວ້າຄວາມເປັນໄປໄດ້ໃນການຫຼຸດອັດຕາເງິນຄ້ຳປະກັນເງິນຝາກຂອງ ທະນາຄານທຸລະກິດ, ທີ່ກຳນົດໂດຍ ທະນາຄານແຫ່ງ ສປປ ລາວ, ເພື່ອເຮັດໃຫ້ມີເງິນໝູນວຽນໃນລະບົບ ຫຼາຍຂຶ້ນ. | • **ລົງວັນທີ 02 ເມສາ 2020**, ຂໍ້ຕົກລົງ ນາຍົກລັດຖະມົນຕີ ເລກທີ 31/ນຍ ລະບຸໃຫ້: ຍົກເວັ້ນພາສີ ອາກອນ ແລະ ຄ່າທຳນຽມຕ່າງໆ ໃນການນຳເຂົ້າທຸກປະເພດສິນຄ້າທີ່ນຳໃຊ້ເຂົ້າໃນວຽກງານສະກັດກັ້ນ, ກັນການລະບາດ ແລະກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ ໂຄວິດ 19 ເຊັ່ນ ຜ້າປິດປາກ, ນ້ຳຢາລ້າງມື ເຄື່ອງອຸປະກອນການແພດ ແລະ ອື່ນໆ. ໃຫ້ກະຊວງການຄ້າ ສົມທົບກັບກະຊວງ ສາທາລະນະສຸກ ເຮັດບັນຊີລາຍການສິນຄ້າ ທີ່ຕ້ອງການນຳເຂົ້າໃຫ້ລະອຽດ ແລ້ວສົ່ງໃຫ້ກະຊວງການເງິນເພື່ອຈັດຕັ້ງປະຕິບັດ.<br>• **ລົງວັນທີ 08 ເມສາ 2020**, ກະຊວງການຄ້າ ອອກ ແຈ້ງການ ຫາ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງວຽງຈັນ ເລື່ອງການກຳນົດ ລາຄາຂາຍ ຜ້າອັດປາກ-ດັງ ເລກທີ 0374/ອຄ.ກຄພນ, ໂດຍແຈ້ງໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງວຽງຈັນ ປະສານກັບບໍລິສັດນຳເຂົ້າອຸປະກອນການແພດ, ບໍລິສັດການຢາຂອງແຂວງ ຫຼື ຫົວໜ່ວຍທຸລະກິດຕ່າງໆ ທີ່ມີເງື່ອນໄຂ, ມີທຶນ ແລະ ສາມາດນຳເຂົ້າຜ້າອັດປາກມາໄດ້ ແລະ ບໍລິສັດທີ່ມີຈຸດປະສົງໃນການຈຳໜ່າຍ ຜ້າອັດປາກດັງ ເຊິ່ງບໍລິສັດ ເຫຼົ່ານີ້ຕ້ອງໄດ້ມາລົງທະບຽນກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.<br>• **ລົງວັນທີ 26 ມີນາ 2020**, ກະຊວງການຄ້າ ໄດ້ອອກແຈ້ງການ ເລກທີ 0328/ອຄ.ກຄພນ ເລື່ອງ ການກຳນົດລາຄາຜ້າອັດປາກ, ດັງ ແຕ່ລະຊະນິດ ເພື່ອປ່ຽນແທນແຈ້ງການ ສະບັບເລກທີ 0142/ອຄ.ກຄພນ ລົງວັນທີ 7 ກຸມພາ 2020 . ຂໍ້ 2. ກຳນົດ ລາຄາລາຄາຜ້າອັດປາກ, ດັງ ທຸກ ຊະນິດ ໃຫ້ຄິດໄລ່ ດ້ວຍການ ເອົາຕົ້ນທຶນການນຳເຂົ້າ ບວກກຳໄລຂາຍຍົກ 20% ແລະ ກຳໄລຂາຍຍ່ອຍ 10% |
| **ສະເໜີໃຫ້ ກົມນ້ຳປະປາ, ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ລັດວິສາຫະກິດ ນ້ຳປະປາ**:<br>ພິຈາລະນາ ຫຼຸດອັດຕາຄ່າ ນ້ຳປະປາ ໃຫ້ແກ່ທຸລະກິດທຸກໆຂະແໜງການ ໃນຊ່ວງໄລຍະການແຜ່ລະບາດຂອງໄວຣັສ | • **ລົງວັນທີ 02 ເມສາ 2020**, ຂໍ້ຕົກລົງ ນາຍົກລັດຖະມົນຕີ ເລກທີ 31/ນຍ ລະບຸໃຫ້ ຄົ້ນຄວ້າ ຜ່ອນຜັນລາຄາ ແລະ ຕໍ່ເວລາ ໃນການຊຳລະຄ່າໄຟຟ້າ ແລະ ນ້ຳປະປາຂອງຜູ້ຊົມໃຊ້ຄົວເຮືອນ ແລະ ພາກທຸລະກິດ.<br>• **ວັນທີ 10 ເມສາ 2020**, ລັດວິສາຫະກິດນ້ຳປະປານະຄອນຫຼວງ ລາຍງານ (ເລກທີ 0555/ນປນຄ,) ຫາ ຮອງ ລມຕ ກະຊວງ ໂຍທາທິການ ແລະ ຂົນສົ່ງ, ຫົວໜ້າໜ່ວຍງານນະໂຍບາຍທີ່ຕິດພັນກັບພາກປະຊາຊົນ ແລະ ສັງຄົມ ເພື່ອຂໍອະນຸມັດໃຫ້: ຫຼຸດຄ່າ ຫຼຸດລາຄາ ຄ່ານ້ຳປະປາ ໃຫ້ຜູ້ຊົມໃຊ້, ຍົກເລີກການເກັບອາກອນຊົມໃຊ້ 10% ໃນຊ່ວງເດືອນ 5, 6, 7 ປີ 2020, ເລື່ອນການຊຳລະຄ່ານ້ຳປະປາ.<br>• **ລົງວັນທີ 24 ເມສາ 2020**, ມະຕິຕົກລົງ ກອງປະຊຸມລັດຖະບານສະໄໝສາມັນປະຈຳເດືອນເມສາ 2020, ເລກທີ 05/ລບ ລະບຸ: ຂໍ້ II.7. ສຳລັບຂໍ້ສະເໜີຂໍຫຼຸດອັດຕາອາກອນມູນຄ່າເພີ່ມໄຟຟ້າ ແລະ ນ້ຳປະປານັ້ນ, ໃຫ້ກະຊວງການເງິນ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າລະອຽດຕື່ມເພື່ອບໍ່ໃຫ້ມີຜົນກະທົບຕາມມາ. |
| **ສະເໜີກະຊວງໄປສະນີ, ໂທລະຄົມ ແລະ ການສື່ສານ**:<br>ພິຈາລະນາ ຫຼຸດອັດຕາຄ່າ ອິນເຕີເນັດ ໃຫ້ແກ່ທຸລະກິດທຸກໆຂະແໜງການ ໃນຊ່ວງໄລຍະການແຜ່ລະບາດຂອງໄວຣັສ | |
| **ສຳນັກງານນາຍົກລັດຖະມົນຕີ:**<br>1. ພິຈາລະນາ ຕັ້ງກອງທຶນສະເພາະເພື່ອບັນເທົາຜົນກະທົບຈາກການລະບາດຂອງ ເຊື້ອໄວຣັສ COVID-19 ຫຼື ນຳໃຊ້ກອງທຶນທີ່ມີຢູ່ ເຊັ່ນ ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອຊ່ວຍຜູ້ປະກອບການ ຊຳລະດອກເບ້ຍທະນາຄານ ໃນໄລຍະນີ້ , ດ້ວຍການກຳນົດ ກຸ່ມທຸລະກິດເປົ້າໝາຍ ທີ່ມີຜົນກະທົບຕໍ່ເສດຖະກິດ ແລະ ການຈ້າງງານຫຼາຍທີ່ສຸດ ເຊັ່ນ ທຸລະກິດ ປະເພດ ໂຮງແຮມ, ແລະ ໂຮງຈັກໂຮງງານ ເປັນຕົ້ນ ໃນການໃຫ້ການຊ່ວຍເຫຼືອດັ່ງກ່າວ.<br>2. ພິຈາລະນາ ເພີ່ມການໃຊ້ຈ່າຍຂອງພາກລັດ ໃນການກໍ່ສ້າງໂຄງລ່າງພື້ນຖານ, ການຄວບຄຸມການລະບາດຂອງພະຍາດ ແລະ ໄວຣັສ ແລະ ການຈັດຕັ້ງປະຕິບັດໂຄງການຕ່າງໆ, ນຳໃຊ້ ກອງທຶນບັນເທົາໄພພິບັດ, ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ກອງທຶນອື່ນໆ ທີ່ມີຢູ່ ຫຼື ລະດົມທຶນຈາກອົງກອນພັດທະນາສາກົນ ເພື່ອຮັບໃຊ້ມາດຕະການກະຕຸ້ນເສດຖະກິດ | |

ເນື່ອງຈາກຄຳສັ່ງເລກທີ 06/ນຍ ແມ່ນໄດ້ກະທົບໂດຍກົງຕໍ່ຈຸດປະສົງການຮັກສາສະພາບຄ່ອງຂອງທຸລະກິດທັງ 03 ຈຸດປະສົງທີ່ກ່າວມາຂ້າງເທິງນີ້. ສຄອ ແຫ່ງຊາດລາວ ກໍ່ໄດ້ສະເໜີໃຫ້ລັດຖະບານໄດ້ຫຼຸດຜ່ອນບັນດາມາດຕະການໃນຄຳສັ່ງເລກທີ 06/ນຍ ແລະ ໄດ້ສະເໜີມາດຕະການເພີ່ມເຕີມ ຕາມເນື້ອໃນຕາຕາລາງ 3.2 ລຸ່ມນີ້:

**ຕາຕາລາງ 3.7: ສັງລວມຄວາມຄືບໜ້າຂໍ້ສະເໜີຂອງ ສຄອ ແຫ່ງຊາດ ກ່ຽວກັບຜົນກະທົບຂອງພະຍາດ COVID-19 ໃນໄລຍະຈັດຕັ້ງປະຕິບັດຄໍາສັ່ງ 06/ນຍ.**

| **ບົດສະເໜີ ຂອງ ສຄອຊ ເລກທີ 0340/ສຄອຊ,<br>ວັນທີ 17 ເມສາ 2020** | **ຄວາມຄືບໜ້າ ຫຼັງ ຄໍາສັ່ງ 06/ນຍ** |
|---|---|
| 1. ສະເໜີໃຫ້ ລັດຖະບານ ພິຈາລະນາທຸກໆຄໍາຮ້ອງຂອງ ບັນດາຫົວໜ່ວຍວິສາຫະກິດ,ໂດຍສະເພາະແມ່ນໂຮງງານອຸດສາຫະກໍາປຸງແຕ່ງ, ບັນດາໂຮງງານປີ່ນອ້ອມ ຂະແໜງການຜະລິດ,ໂຮງງານຕັດຫຍິບ, ຮ້ານອາຫານ ແລະ ຮ້ານຄ້າ ຕ່າງໆ ລວມເຖິງໂຄງການທີ່ຢູ່ ໃນ ເຂດ ຫຼື ນອກເຂດເສດຖະກິດພິເສດ ແລະເຂດເສດຖະກິດສະເພາະ ທີ່ມີເງື່ອນໄຂໄດ້ມາດຕະຖານ ໃນການ ປ້ອງກັນການແຜ່ລະບາດຂອງພະຍາດ COVID-19 ຕາມຄໍາແນະນໍາຂອງພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະແມ່ນເຂດທີ່ບໍ່ມີການແຜ່ລະບາດຂອງພະຍາດດັ່ງກ່າວໃຫ້ສາມາດດໍາເນີນການຜະລິດ ແລະ ການບໍລິການຂອງຕົນໄດ້ໂດຍໄວ. | • **ລົງວັນທີ 15 ເມສາ 2020**, ສໍານັກງານນາຍົກລັດຖະມົນຕີ ອອກແຈ້ງການ ສະບັບເລກທີ 481/ຫສນຍ ຂໍ້ທີ 7 ລະບຸເຫັນດີໃຫ້ມີການໂຍະຍານບາງມາດ ຕະການທີ່ຕິດພັນກັບການເຄື່ອນໄຫວຂອງພາກທຸລະກິດ, ບົນພື້ນຖານ ຮັບປະກັນວ່າບໍ່ມີຄວາມສ່ຽງຕິດເຊື້ອ-ໃຫ້ຄະນະສະເພາະກິດສ້າງເປັນນິຕິກໍາແນະນໍາລະອຽດ.<br>• **ລົງວັນທີ 21 ເມສາ 2020**, ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂບັນຫາຂອງການລະບາດຂອງ ໂຄວິດ19 ອອກຄໍາແນະນໍາ ເລກທີ 031/ສພກ ກ່ຽວກັບເງື່ອນໄຂ ແລະ ມາດຕະການ ສໍາລັບພາກທຸລະກິດ ທີ່ສາມາດດໍາເນີນກິດຈະການໃນໄລຍະທີ່ມີການລະບາດຂອງພະຍາດໂຄວິດ19, ເຊິ່ງໄດ້ກໍານົດລະອຽດ ມາດຕະການ ແລະ ເງື່ອນໄຂຂອງຫົວໜ່ວຍທຸລະກິດທີ່ຕ້ອງການເປີດດໍາເນີນກິດຈະການຄືນໃນໄລຍະນີ້.<br>• **ລົງວັນທີ 21 ເມສາ 2020** ກະຊວງອຸດສາຫະກໍາ ແລະ ການຄ້າ ອອກ ແຈ້ງການ ເລກທີ 0412/ອຄ.ກຄພນ ເລື່ອງ ສືບຕໍ່ຕິດຕາມກວດກາ ແລະ ຄຸ້ມຄອງລາຄາສິນຄ້າ ໃນ ແຂວງ ແລະ ນະຄອນຫຼວງ ໃນຂອບເຂດທົ່ວປະເທດ, ຂໍ້ 1.2 ລະບຸໃຫ້ ອະນຸຍາດສືບຕໍ່ດໍາເນີນກິດຈະການທີ່ມີຄວາມຈໍາເປັນ ເປັນຕົ້ນແມ່ນ ຮ້ານຂາຍຍົກ ແລະ ຮ້ານຂາຍຍ່ອຍ ທີ່ຂາຍສິນຄ້າປະເພດສະບຽງອາຫານ, ເຄື່ອງອຸປະໂພກ ບໍລິໂພກທີ່ຮັບໃຊ້ຊີວິດການເປັນຢູ່ປະຈໍາວັນ, ຮ້ານຂາຍອຸປະກອນການແພດ, ຮ້ານຂາຍຢາ.<br>• **ລົງວັນທີ 22 ເມສາ 2020** , ກະຊວງ ອຸດສາຫະກໍາ ແລະ ການຄ້າ ອອກແຈ້ງການ ເລກທີ 0422/ອຄ.ກອຫ ເຖິງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ເລື່ອງການດໍາເນີນກິດຈະການໂຮງງານໃນອຸດສາຫະກໍາປຸງແຕ່ງ ໃນໄລຍະຕໍ່ເວລາການປະຕິບັດຄໍາສັ່ງ, ສະບັບເລກທີ 06/ນຍ, ຄື: ໃຫ້ສືບຕໍ່ປິດການດໍາເນີນກິດຈະການຊົ່ວຄາວສໍາລັບໂຮງງານທີ່ມີຄວາມສ່ຽງຕໍ່ການລະບາດ ໄປຈົນເຖິງ ທີ 03 ພຶດສະພາ 2020, ຍົກເວັ້ນໂຮງງານທີ່ຢູ່ໃນບັນຊີເປີດ ຕາມເອກະສານຊ້ອນທ້າຍທີ1 ຂອງແຈ້ງການ ທີ່ອະນຸຍາດໃຫ້ດໍາເນີນກິດຈະການຕາມປົກກະຕິ ແຕ່ຕ້ອງປະຕິບັດຕາມຄໍາແນະນໍາກ່ຽວກັບເງື່ອນໄຂ ແລະ ມາດຕະການທີ່ຄະນະສະເພາະກິດຂັ້ນສູນກາງວາງອອກ. ໂຮງງານທີ່ບໍ່ຢູ່ໃນບັນຊີເປີດ ຖ້າຢາກຂໍດໍາເນີນກິດຈະການ ຖ້າຫາກສາມາດປະຕິບັດຕາມເງື່ອນໄຂ ແລະ ມາດຕະການທີ່ຄະນະສະເພາະກິດຂັ້ນສູນກາງວາງອອກຢ່າງຄົບຖ້ວນ ແມ່ນໃຫ້ສະເໜີຫາກະຊວງ ອຄ ເພື່ອສະເໜີຫາຄະນະກໍາມະການກວດກາ ພິຈາລະນາເປັນແຕ່ລະກໍລະນີ.<br>• **ລົງວັນທີ 23 ເມສາ 2020,** ລັດຖະມົນຕີກະຊວງ ອຸດສາຫະກໍາ ແລະ ການຄ້າ ສົ່ງຈົດໝາຍ (ເລກທີ 0424/MoIC.DIH) ຫາບັນດາ ບໍລິສັດແມ່, ຜູ້ສັ່ງຊື້ສິນຄ້າ ແລະ ຄູ່ຄ້າ ຢູ່ຕ່າງປະເທດ (ສິນຄ້າທີ່ຜະລິດໂດຍໂຮງງານຕັດຫຍິບໃນ ສປປ ລາວ) ເພື່ອຂໍຄວາມເຫັນໃຈຈາກບັນດາຜູ້ຊື້ ໃຫ້ມີນະໂຍບາຍບໍ່ຍົກເລີກການສັ່ງຊື້ ຫຼື ການປັບໄໝ ຖ້າຫາກມີການສົ່ງສິນຄ້າຊັກຊ້າ.<br>• **ລົງວັນທີ 24 ເມສາ 2020**, ມະຕິຕົກລົງ ກອງປະຊຸມລັດຖະບານສະໄໝສາມັນປະຈໍາເດືອນເມສາ 2020, ເລກທີ 05/ລບ ລະບຸ:<br>○ ຂໍ້ I.4. ໃຫ້ຄະນະສະເພາະກິດ ຄົ້ນຄວ້າ ແລະ ກໍານົດວ່າ ເຂດໃດເປັນເຂດທີ່ມີຄວາມສ່ຽງສູງ , ເຂດໃດເປັນເຂດທີ່ມີຄວາມສ່ຽງໜ້ອຍ ແລະ ເຂດໃດບໍ່ມີຄວາມສ່ຽງ (ເຂດແດງ, ເຂດເຫຼືອງ ແລະ ເຂດຂຽວ) ພ້ອມທັງກໍານົດແຈ້ງວ່າມາດຕະການປ້ອງກັນ, ຄວບຄຸມ ແລະ ຜ່ອນກັນໃນການປະຕິບັດມາດຕະການ ຕໍ່ເຂດທີ່ມີຄວາມສ່ຽງໜ້ອຍ ແລະ ບໍ່ມີຄວາມສ່ຽງ, ຫຼັງຈາກນັ້ນຈຶ່ງອອກຄໍາແນະນໍາ ໃຫ້ບັນດາທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດ.<br>○ ຂໍ້ II.2. ໃຫ້ຄະນະສະເພາະກິດ ຮີບຮ້ອນສົມທົບແຕ່ງຕັ້ງວິຊາການ ໄປກວດກາບັນດາກິດຈະການ, ໂຄງການ, ໂຮງຈັກໂຮງງານ ທີ່ໄດ້ສະ ເໜີວ່າ ມີຄວາມຈໍາເປັນໃນການສືບຕໍ່ເຄື່ອນໄຫວ. ຖ້າກິດຈະການໃດສາມາດປະຕິບັດຕາມເງື່ອນໄຂ ແລະ ມາດຕະການທີ່ຕິດພັນທີ່ຄະນະສະເພາະກິດວາງອອກ ກໍ່ສາມາດອະນຸຍາດໃຫ້ດໍາເນີນທຸລະກິດໄດ້. ສໍາລັບບັນດາໂຮງຈັກໂຮງງານທີ່ຂຶ້ນກັບຄວາມຮັບຜິດຊອບຂອງແຂວງ ກໍ່ມອບໃຫ້ຄະນະສະເພາະກິດແຂວງລົງກວດກາ ອີງຕາມຄໍາແນະນໍາຂອງຄະນະສະເພາະກິດຂັ້ນສູນກາງ. |

| **ບົດສະເໜີ ຂອງ ສຄອຊ ເລກທີ 0340/ສຄອຊ, ວັນທີ 17 ເມສາ 2020** | **ຄວາມຄືບໜ້າ ຫຼັງ ຄຳສັ່ງ 06/ນຍ** |
|---|---|
| | ○ **ລົງວັນທີ 01 ພຶດສະພາ 2020**, ຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ອອກແຈ້ງການ ເລກທີ 524/ຫສນຍ ເລື່ອງ ການສືບຕໍ່ປະຕິບັດບັນດາມາດຕະການໃນການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ ໂຄວິດ 19 ໃນໄລຍະແຕ່ວັນທີ 04-17 ພຶດສະພາ 2020, ໃນ ຂໍ້ 4. 4.ລະບຸ ເຫັນດີໃຫ້ປະຕິບັດມາດຕະການຜ່ອນຜັນຈຳນວນໜຶ່ງ (ຂໍ້ 6.5: ມາດຕະການຜ່ອນຜັນນີ້ ແມ່ນມາດຕະການຊົ່ວຄາວ ເຊິ່ງຈະເລີ່ມມີຜົນສັກສິດ ນັບແຕ່ວັນທີ 04 ຫາວັນທີ 17 ພຶດສະພາ 2020, ແລ້ວຈະມີການທົບທວນຄືນ, ກໍລະນີມີການປ່ຽນແປງ ລັດຖະບານຈະແຈ້ງໃຫ້ຊາບເປັນແຕ່ລະໄລຍະ), ໃນມາດຕະການຜ່ອນຜັນມີເນື້ອໃນທີ່ຕິດພັນກັບຂໍ້ສະເໜີຂອງ ສຄອຊ ຄື:<br>    ○ ຂໍ້ 4.1 ອະນຸຍາດໃຫ້ສຳນັກງານອົງການຂອງພັກ-ລັດ, ສຳນັກງານຂອງບໍລິສັດ ເປີດດຳເນີນການ ໂດຍ ໃຫ້ພະນັກງານລັດຖະກອນໝູນວຽນມາເຮັດວຽກເປັນປົກກະຕິ ແຕ່ຕ້ອງໃຫ້ຮັບປະກັນມາດຕະການປ້ອງກັນການຕິດເຊື້ອ,<br>    ○ ຂໍ້ 4.5. ອະນຸຍາດໃຫ້ບັນດາຫ້າງ ຮ້ານຕ່າງໆ ເຊັ່ນ: ຮ້ານອາຫານ, ຮ້ານຂາຍຂອງກິນສຸກ, ຮ້ານຂາຍເຄື່ອງຍ່ອຍ, ຮ້ານຕັດຜົມ, ຮ້ານເສີມສວຍ, ຕະຫຼາດສົດ, ສູນການຄ້າ, ຮ້ານຄ້າຂາຍົກ, ຂາຍຍ່ອຍ, ຮ້ານຊຸບເປີມາເກັດ, ຮ້ານກາເຟ, ຮ້ານສ້ອມແປງລົດ, ຮ້ານລ້າງ-ອັດສີດ, ໂຮງງານນໍ້າດື່ມ ແລະ ໂຮງງານນໍ້າກ້ອນ ດຳເນີນກິດຈະການໄດ້ ແຕ່ຕ້ອງປະຕິບັດໄລຍະຫ່າງ ແລະ ຮັບປະກັນມາດຕະການປ້ອງກັນການຕິດເຊື້ອ;<br>    ○ ຂໍ້ 4.6. ບັນດາໂຮງງານ, ໂຄງການລົງທຶນ ທີ່ເປັນກິດຈະການຂະໜາດໃຫຍ່ ຂອງພາກທຸລະກິດຕ່າງໆ ທີ່ສາມາດປະຕິບັດຖືກຕ້ອງຕາມເງື່ອນໄຂ ມາດຕະການຕາມຂໍ້ແນະນຳເລກທີ 031/ສພກ ແມ່ນສາມາດເປີດດຳເນີນກິດຈະການໄດ້. ມອບໃຫ້ທັງສອງຄະນະສະເພາະກິດຂັ້ນສູນກາງ ແຕ່ງຕັ້ງຄະນະວິຊາການ ລົງກວດກາ, ຢັ້ງຢືນ ແລະ ເຮັດບົດບັນທຶກສ□າລັບໂຄງການຂະໜາດໃຫຍ່ ທີ່ນຳໃຊ້ແຮງງານຈຳນວນຫຼວງຫຼາຍ ທີ່ສູນກາງເປັນຜູ້ຄຸ້ມຄອງ, ສຳລັບຫົວໜ່ວຍທຸລະກິດໃດ ທີ່ອົງການປົກຄອງທ້ອງຖິ່ນອະນຸຍາດ ແລະ ຄຸ້ມຄອງ ກໍ່ມອບໃຫ້ຄະນະສະເພາະກິດ ຂັ້ນແຂວງ ແລະ ນະຄອນຫຼວງ ເປັນຜູ້ຮັບຜິດຊອບກວດກາ, ຢັ້ງຢືນ ແລະ ອະນຸຍາດ;<br>○ ຂໍ້ 5.2 ສືບຕໍ່ປະຕິບັດຢ່າງເຂັ້ມງວດ ໃນການປິດບັນດາກິດຈະການຮ້ານບັນເທີງ, ຮ້ານເຫຼົ້າ-ເບຍ, ຮ້ານກິນດື່ມ, ໂຮງຮູບເງົາ, ຮ້ານຄາຣາໂອເກະ, ຮ້ານບໍລິການນວດ-ສະປາທຸກປະເພດ, ກາຊີໂນ, ຕະຫຼາດກາງຄືນ, ສະຖານທີ່ອອກກຳລັງກາຍ-ຫຼິ້ນກິລາໃນຮົ່ມ, ກິລາກາງແຈ້ງ ເປັນທີມທີ່ມີການໃກ້ຊິດກັນ ເຊັ່ນ: ກິລາບານເຕະ, ບານບ້ວງ, ບານສົ່ງ, ມາລາທອນ, ຕີມວຍ, ຕີໄກ່, ເປຕັງ ແລະ ການແຂ່ງຂັນກິລາທຸກປະເພດ ທີ່ມີຜູ້ຊົມ ແລະ ນັກກິລາ ເຂົ້າຮ່ວມເກີນ 10 ຄົນ ແລະ ບໍ່ສາມາດຮັກສາໄລຍະຫ່າງເກີນ 1 ແມັດໄດ້. |
| 2. ສະເໜີໃຫ້ລັດຖະບານພິຈາລະນາແກ້ໄຂສະພາບການ ກີດຂວາງລົດບັນທຸກສິນຄ້າທີ່ບໍ່ໃຫ້ຜ່ານດ່ານຂອງເມືອງ ແລະແຂວງຢ່າງຮີບດ່ວນ.<br>3. ສະເໜີໃຫ້ລັດຖະບານ ໂດຍສະເພາະກະຊວງໂຍທາທິການ ແລະ ຂົນສົ່ງແກ້ໄຂແຈ້ງການ ເລກທີ 266 ທີ່ຫ້າມ ຄົນຈີນຂັບລົດເຂົ້າມາເກັບສິນຄ້າກະສິກຳທີ່ຢູ່ໃນໄລຍະເວລາເກັບກ່ຽວຜົນລະປູກເພື່ອສົ່ງອອກ ສປ ຈີນ ເຊັ່ນ:ໝາກຖົ່ວ,ໝາກໂມ, ອ້ອຍ, ແລະອື່ນໆ, ໂດຍໃຫ້ແກ່ຍາວເວລາການປະຕິບັດແຈ້ງການດັ່ງກ່າວ ໄປອີກ 2 ເດືອນ ເພື່ອໃຫ້ຄົນຂັບລົດຈີນທີ່ມີເງື່ອນໄຂສາມາດຂັບລົດເຂົ້າມາກັບສິນຄ້າຈາກຝ່າຍລາວໄດ້, ເຊິ່ງຜູ້ປະກອບການຝ່າຍລາວມີຄວາມຫຍຸ້ງຍາກສົມຄວນແລະໃຊ້ເວລາຂ້ອນຂ້າງດົນໃນການຂໍເຊົ່າລົດຂົນສົ່ງນຳຝ່າຍຈີນແລະການ ປະກອບເອກະສານກ່ຽວຂ້ອງຕ່າງໆ. | ○ **ລົງວັນທີ 24 ເມສາ 2020**: ກະຊວງ ຍທຂ ອອກແຈ້ງການ ເລກທີ 00283/ຍທຂ ເລື່ອງ ການຂົນສົ່ງສິນຄ້າພາຍໃນ, ເຂົ້າອອກ ລະຫວ່າງປະເທດ ແລະ ຜ່ານແດນ ຢູ່ ສປປ ລາວ ໃນໄລຍະ ການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ ໂຄວິດ 19, ມີເນື້ອໃນທີ່ຕິດພັນກັບຂໍ້ສະເໜີຂອງ ສຄອຊ ຄື:<br>- ສຳລັບການຂົນສົ່ງສິນຄ້າພາຍໃນປະເທດ: ຄົນຂັບລົດ ແລະ ຜູ້ຕິດຕາມ ທີ່ເຄື່ອນຍ້າຍຢູ່ພາຍໃນປະເທດຜ່ານບັນດາເມືອງ, ແຂວງ, ນະຄອນຫຼວງ ແມ່ນສາມາດຂົນສົ່ງສິນຄ້າ ແລະ ອາຫານ ໄປເຖິງປາຍທາງ ຫຼື ລູກຄ້າໄດ້ຢ່າງປົກກະຕິ ໂດຍໃຫ້ໃສ່ຜ້າປິດປາກ ຕະຫຼອດເວລາການປະຕິບັດວຽກ, ແລະ ໄດ້ຮັບການວັດແທກອຸນຫະພູມຈາກເຈົ້າໜ້າທີ່ສາທາລະນະສຸກຕາມເສັ້ນທາງຢ່າງເຂັ້ມງວດ. ຖ້າບໍ່ມີອາການສົງໄສ ໃຫ້ເຈົ້າໜ້າທີ່ອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງສິນຄ້າ.<br>- ການຂົນສົ່ງສິນຄ້າຂາອອກ: ຂໍ້ 3.2. ລະບຸວ່າ ໃນໄລຍະການແຜ່ລະບາດຂອງ ໂຄວິດ19 ນີ້ ເຫັນດີອະນຸຍາດໃຫ້ລົດຂົນສົ່ງສິນຄ້າ ແລະ ຕູ້ຄອນເທນເນີ້ເປົ່າຂອງຕ່າງປະເທດສາມາດເຂົ້າມາຮັບເອົາສິນຄ້າຢູ່ ສປປ ລາວ ເພື່ອສົ່ງອອກໄດ້, ຈົນກວ່າຈະມີຄຳສັ່ງປ່ຽນແປງຈາກລັດຖະບານ.ຂໍ້ 5.2: ໃນໄລຍະການແຜ່ລະບາດຂອງໂຄວິດ 19 ທີ່ລົດຂົນສົ່ງພາຍໃນບໍ່ພຽງພໍ, ເຫັນດີອະນຸຍາດໃຫ້ບໍລິສັດຂົນສົ່ງຂອງລາວ ສາມາດນຳເຂົ້າ ຫຼື ເຊົ່າລົດບັນທຸກ, ຫາງລາກ ແລະ ຕູ້ຄອນເທນເນີ້ຂອງຕ່າງປະເທດເຂົ້າມານຳໃຊ້ກ່ອນ ໂດຍແມ່ນຜູ້ປະກອບການສະເໜີເຮັດໜັງສືຄໍ້າປະກັນກັບເຈົ້າໜ້າທີ່ດ່ານພາສີເປັນຜູ້ພິຈາລະນາ ແຕ່ຕ້ອງດຳເນີນເອກະສານຕາມຂັ້ນຕອນນຳເຂົ້າຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວຕາມພາຍຫຼັງ COVID-19. |

| **ບົດສະເໜີ ຂອງ ສຄອຊ ເລກທີ 0340/ສຄອຊ,<br>ວັນທີ 17 ເມສາ 2020** | **ຄວາມຄືບໜ້າ ຫຼັງ ຄຳສັ່ງ 06/ນຍ** |
|---|---|
| 4. ສະເໜີໃຫ້ ລັດຖະບານ ພິຈາລະນາວາງ ອອກນະໂຍບາຍ ຊ່ວຍເຫຼືອສະໜັບສະໜູນ ເງິນອຸດໜູນໃຫ້ແກ່ແຮງງານທີ່ບໍ່ຢູ່ໃນລະບົບປະກັນສັງຄົມ ກໍ່ສາມາດໄດ້ຮັບເງິນສະໜັບສະໜູນຈາກລັດຖະ ບານ ໃຫ້ໃກ້ຄຽງກັບແຮງງານທີ່ຢູ່ໃນລະບົບປະກັນສັງຄົມ ໂດຍອີງຕາມສັນຍາການວ່າຈ້າງງານ ລະຫວ່າງ ນາຍຈ້າງ ແລະ ຜູ່ອອກແຮງງານ ຫຼື ເອກະສານການຮັບເງິນເປັນການຢັ້ງຢືນ. ພ້ອມດຽວກັນນັ້ນ, ຂໍສະ ເໜີໃຫ້ອອກແຈ້ງການ ໂດຍໄວກ່ຽວກັບຈຳນວນເງິນອຸດໜູນທີ່ຈະໄດ້ຮັບ ຂອງແຮງງານທີ່ຢູ່ໃນລະບົບປະ ກັນສັງຄົມ ໃນໄລຍະການແຜ່ລະບາດເຊື້ອພະຍາດດັ່ງກ່າວ. | **ລົງວັນທີ 24 ເມສາ 2020**, ມະຕິຕົກລົງ ກອງປະຊຸມລັດຖະບານສະໄໝສາມັນປະຈຳເດືອນເມສາ 2020, ເລກທີ 05/ລບ ລະບຸ:<br>○ ຂໍ້ II.4 ເຫັນດີໃຫ້ປະຕິບັດເງິນອຸດໜູນຕໍ່ແຮງງານ ສຳລັບແຮງງານທີ່ເປັນສະມາຊິກກອງທຶນປະກັນສັງຄົມ ຕາມກົດໝາຍປະກັນສັງຄົມກຳນົດ. ພ້ອມທັງໃຫ້ຄົ້ນຄວ້າມາດຕະການຮອງຮັບໄວ້ແຕ່ຫົວທີ ກໍລະນີ ຜົນກະທົບຫາກແກ່ຍາວເວລາໄປ. ພ້ອມກັນນັ້ນ ກໍໃຫ້ຖືໂອກາດນີ້, ໂຄສະນາດຶງດູດ ແລະ ຂະຫຍາຍສະມາຊິກປະກັນສັງຄົມໃຫ້ເພີ່ມຂຶ້ນໃນຕໍ່ໜ້າ. ສຳລັບແຮງງານທີ່ຢູ່ນອກລະບົບ, ໃຫ້ຄົ້ນຄວ້າການປະຕິບັດນະໂຍບາຍໃນຮູບແບບຊ່ວຍເຫຼືອດ້ານສັງຄົມສົງເຄາະ ຕາມດຳລັດວ່າດ້ວຍສັງຄົມສົງເຄາະ ສະບັບເລກທີ 169/ລບ, ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສົມທົບກັບໃຫ້ອຳນາດການປົກຄອງແຕ່ລະຂັ້ນ ສັງລວມຈຳນວນຜູ້ທີ່ຈະໄດ້ຮັບການຊ່ວຍເຫຼືອຕາມເງື່ອນໄຂຕົວຈິງ ໃຫ້ຊັດເຈນກ່ອນ ພ້ອມທັງຄິດໄລ່ອັດຕານະໂຍບາຍທີ່ເໝາະສົມ ແລະຄວາມຕ້ອງການທາງດ້ານງົບປະມານທັງໝົດຢ່າງຊັດເຈນ, ຈາກນັ້ນຈຶ່ງສະເໜີລັດຖະບານ ພິຈາລະນາຕົກລົງ. |
| 5.ໃນໄລຍະການລະບາດຂອງເຊື້ອພະຍາດດັ່ງກ່າວ ສະເໜີໃຫ້ລັດຖະບານພິຈາລະນາອອກຄຳສັ່ງເຖິງທະນາຄານໃຫ້ເລື່ອນ ການຊຳລະໜີ້ທີ່ເປັນຕົ້ນ ແລະ ດອກເບ້ຍຂອງລູກຄ້າ ທີ່ເປັນຜູ້ປະກອບການ ຫຼື ເປັນຜູ້ອອກແຮງງານ ໃນໄລຍະ 3 ເດືອນຫຼື 6 ເດືອນ ຕາມຄວາມເໝາະສົມ ເປັນເອກະພາບທົ່ວລະບົບ, ພ້ອມດຽວກັນນັ້ນ ສະເໜີໃຫ້ພິຈາລະນາ ໃຫ້ບັນດາສະຖານບັນການເງິນຈຸລະພາກ (ສກຈ) ປະຕິບັດ ຂໍ້ຕົກລົງຂອງ ທຫລ ສະ ບັບເລກທີ 238/ທຫລ ຕາມຄວາມເໝາະສົມກັບສະພາບການຂອງ ສະຖານບັນ.<br>6. ສະເໜີລັດຖະບານພິຈາລະນາອອກແຈ້ງການ ຫຼື ຂໍ້ຕົກລົງໃຫ້ສະຖານບັນການເງິນຈຸລະພາກ (ສກຈ) ປ່ອຍເງິນກູ້ສຸກເສີນ ທີ່ມີດອກເບ້ຍພິເສດຕ່ຳສຸດ ໃນວົງເງິນທີ່ເໝາະສົມ ແລະ ມີໄລຍະເວລາການກູ້ເງິນ 6 ເດືອນ ຫາ 12 ເດືອນ, ພ້ອມດຽວກັນນັ້ນ ສະເໜີພິຈາລະນາໃຫ້ເລື່ອນການຊຳລະອາກອນກຳໄລລ່ວງໜ້າ ຂອງສະຖານບັນການເງິນຈຸລະພາກ ສຳລັບໄຕມາດທີ 1 ແລະ ໄຕມາດທີ 2 (ສຳລັບອີງກອນທີ່ມີກຳໄລ) ໄປທ້າຍປີເພື່ອສ້າງເງື່ອນໄຂໃຫ້ສະຖານບັນການເງິນຈຸລະພາກ ສາມາດປ່ອຍກູ້ເງິນດັ່ງກ່າວໃຫ້ແກ່ຜູ້ປະ ກອບການໄດ້ໂດຍໄວ. | |
| 7. ເພື່ອເປັນການສະໜັບສະໜູນຊ່ວຍເຫຼືອໃນການຫຼຸດຜ່ອນຄ່າໃຊ້ຈ່າຍໃຫ້ແກ່ຜູ້ປະ ກອບການ ແລະ ແຮງງານ ສະເໜີໃຫ້ລັດຖະບານ ພິຈາລະນາອອກແຈ້ງການຍົກເວັ້ນອາກອນຄ່າເຊົ່າທີ່ດິນ,ຕຶກອາຄານ, ທີ່ພັກພາອາໄສ ແລະອື່ນໆ ແລະ ແຈ້ງເຖິງເຈົ້າຂອງກິດຈະການດັ່ງກ່າວໃຫ້ຍົກເວັ້ນຫຼືຫຼຸດຜ່ອນຄ່າເຊົ່າຕາມ ຄວາມເໝາະສົມ. | |
| 8. ສະເໜີ ລຖບ ພິຈາລະນາ ອອກນະໂຍບາຍຜ່ອນຜັນ ເພື່ອກຳນົດ ອັດຕາ ພາສີ~ອາກອນ ລວມທັງ ຄ່າເຊົ່າທີ່ດິນ ແລະ ສະຖານທີ່ປະກອບການ ເຮັດໃຫ້ຕົ້ນທຶນທຸລະກິດຕ່ຳລົງ ໃນຊ່ວງໄລຍະ 6ເດືອນ ທັງນີ້ເພື່ອເຮັດໃຫ້ຜູ້ປະກອບການໂດຍສະເພາະ SME ແລະແຮງງານທີ່ມີລາຍຮັບຕ່ຳເຂົ້າເຖິງໄດ້ງ່າຍຂຶ້ນ. | |
| 9. ສະເໜີ ລຖບ ອອກແຈ້ງການ ແລະ ເອກະສານແນະນຳຕ່າງໆທີ່ກ່ຽວພັນເຖິງການເຄື່ອນໄຫວທຸລະກິດ ໃຫ້ມີຄວາມຊັດເຈນ ແລະ ເອກະພາບ ລະຫ່ວາງ ສູນກາງແລະທ້ອງຖິ່ນ ລວມເຖິງຂະແໜງການຕ່າງໆ ທີ່ຕິດພັນກັບພາກທຸລະກິດ ເພື່ອປ້ອງກັນ ແລະ ຫຼີກລ້ຽງ ບໍ່ໃຫ້ເປັນຊ່ອງວ່າງ ຂອງກົນໄກຈັດຕັ້ງປະຕິບັດ. | |

| **ບົດສະເໜີ ຂອງ ສຄອຊ ເລກທີ 0340/ສຄອຊ,<br>ວັນທີ 17 ເມສາ 2020** | **ຄວາມຄືບໜ້າ ຫຼັງ ຄຳສັ່ງ 06/ນຍ** |
|---|---|
| **ບົດສະເໜີ ຂອງ ສຄອຊ ເລກທີ 0355/ສຄອຊ, ວັນທີ 29 ເມສາ 2020** | |
| 1. ສະເໜີໃຫ້ ພິຈາລະນາຄືນ ການຫຼຸດຜ່ອນ ເງື່ອນໄຂໃນຄຳແນະນຳສະບັບເລກທີ 031/ສພກ ໃນຂໍ້ I.3 ສຳລັບພາກທຸລະກິດທີ່ຈະເປີດດຳເນີນກິດຈະການຕ້ອງມີຫໍພັກຂອງພະນັກງານ ກຳມະກອນທີ່ບໍ່ແອອັດ ແລະ ຮັບປະກັນໄລຍະຫ່າງ 1 ແມັດ. ໃນສະພາບຕົວຈິງ ຫຼາຍຫົວໜ່ວຍທຸລະກິດບໍ່ມີຫໍພັກສະເພາະສຳລັບພະນັກງານ ແລະ ກຳມະກອນ. ພະນັກງານດັ່ງກ່າວ ແມ່ນມີທີ່ພັກອາໄສ ແລະ ສາມາດຄຸ້ມຄອງໂດຍອຳນາດການປົກຄອງທ້ອງຖິ່ນຂັ້ນບ້ານ ແລະ ຂັ້ນເມືອງໄດ້ຢ່າງເຂັ້ມງວດ ຈຶ່ງສະເໜີໃຫ້ພິຈາລະນາຜ່ອນຜັນໃຫ້ສາມາດດຳເນີນທຸລະກິດຂອງໂຮງງານ ແລະ ທຸລະກິດດັ່ງກ່າວ.<br>2. ສະເໜີພິຈາລະນາຜ່ອນຜັນ ໂດຍອະນຸມັດໃຫ້ ໂຮງງານ ແລະ ທຸລະກິດສາມາດດຳເນີນກິດຈະການໄດ້ ໂດຍໃຫ້ຢັ້ງຢືນຕົນເອງວ່າຈະປະຕິບັດລະບຽບກົດ ໝາຍຢ່າງເຂັ້ມງວດ ເພື່ອປ້ອງກັນການລະບາດຂອງພະຍາດໂຄວິດ ຕາມບົດຮຽນຂອງປະເທດອື່ນ. ຖ້າໂຮງງານ ແລະ ທຸລະກິດໃດ ທີ່ມີຄວາມສ່ຽງ, ພາກລັດທີ່ກ່ຽວຂ້ອງຈຶ່ງລົງກວດກາ, ຕັກເຕືອນ, ປັບໄໝ ແລະ ໃຫ້ຢຸດຕິການດຳເນີນການ | ○ **ລົງວັນທີ 01.05.2020,** ແຈ້ງການຈາກຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ເລກທີ 524/ຫສນຍ: ໃນ ຂໍ້ 4.4.ລະບຸ ເຫັນດີໃຫ້ປະຕິບັດມາດຕະການຜ່ອນຜັນຈຳນວນໜຶ່ງ (ຂໍ້ 6.5: ມາດຕະການຜ່ອນຜັນນີ້ ແມ່ນມາດຕະການຊົ່ວຄາວ ເຊິ່ງຈະເລີ່ມມີຜົນສັກສິດ ນັບແຕ່ວັນທີ 04 ຫາວັນທີ 17 ພຶດສະພາ 2020, ແລ້ວຈະມີການທົບທວນຄືນ, ກໍລະນີມີການປ່ຽນແປງ ລັດຖະບານຈະແຈ້ງໃຫ້ຊາບເປັນແຕ່ລະໄລຍະ), ໃນມາດຕະການຜ່ອນຜັນມີເນື້ອໃນທີ່ຕິດພັນກັບຂໍ້ສະເໜີຂອງ ສຄອຊ ຄື:<br>○ ຂໍ້ 4.1 ອະນຸຍາດໃຫ້ສຳນັກງານອົງການຂອງພັກ-ລັດ, ສຳນັກງານຂອງບໍລິສັດເປີດດຳເນີນການ ໂດຍ ໃຫ້ພະນັກງານລັດຖະກອນໝູນວຽນມາເຮັດວຽກເປັນປົກກະຕິ ແຕ່ຕ້ອງໃຫ້ຮັບປະກັນມາດຕະການປ້ອງກັນການຕິດເຊື້ອ,<br>○ ຂໍ້ 4.5. ອະນຸຍາດໃຫ້ບັນດາຫ້າງ ຮ້ານຕ່າງໆ ເຊັ່ນ: ຮ້ານອາຫານ, ຮ້ານຂາຍຂອງກິນສຸກ, ຮ້ານຂາຍເຄື່ອງຍ່ອຍ, ຮ້ານຕັດຜົມ, ຮ້ານເສີມສວຍ, ຕະຫຼາດສົດ, ສູນການຄ້າ, ຮ້ານຄ້າຂາຍົກ, ຂາຍຍ່ອຍ, ຮ້ານຊຸບເປີມາເກັດ, ຮ້ານກາເຟ, ຮ້ານສ້ອມແປງລົດ, ຮ້ານລ້າງ-ອັດສີດ, ໂຮງງານນ້ຳດື່ມ ແລະ ໂຮງງານນ້ຳກ້ອນ ດຳເນີນກິດຈະການໄດ້ ແຕ່ຕ້ອງປະຕິບັດໄລຍະຫ່າງ ແລະ ຮັບປະກັນມາດຕະການປ້ອງກັນການຕິດເຊື້ອ;<br>○ ຂໍ້ 4.6. ບັນດາໂຮງງານ, ໂຄງການລົງທຶນ ທີ່ເປັນກິດຈະການຂະ ໜາດໃຫຍ່ ຂອງພາກທຸລະກິດຕ່າງໆ ທີ່ສາມາດປະຕິບັດຖືກຕ້ອງຕາມເງື່ອນໄຂ ມາດຕະການຕາມຂໍ້ແນະນ□າ ເລກທີ 031/ສພກ ແມ່ນສາມາດເປີດດຳເນີນກິດຈະການໄດ້. ມອບໃຫ້ທັງສອງຄະນະສະເພາະກິດ ຂັ້ນສູນກາງ ແຕ່ງຕັ້ງຄະນະວິຊາການ ລົງກວດກາ, ຢັ້ງຢືນ ແລະ ເຮັດບົດບັນທຶກສຳລັບໂຄງການຂະໜາດໃຫຍ່ ທີ່ນຳໃຊ້ແຮງງານຈຳນວນຫຼວງຫຼາຍ ທີ່ສູນກາງເປັນຜູ້ຄຸ້ມຄອງ, ສຳລັບຫົວໜ່ວຍທຸລະກິດໃດ ທີ່ອົງການປົກຄອງທ້ອງຖິ່ນອະນຸຍາດ ແລະ ຄຸ້ມຄອງ ກໍ່ມອບໃຫ້ຄະນະສະເພາະກິດ ຂັ້ນແຂວງ ແລະ ນະຄອນຫຼວງ ເປັນຜູ້ຮັບຜິດຊອບກວດກາ, ຢັ້ງຢືນ ແລະ ອະນຸຍາດ;<br>○ ຂໍ້ 5.2 ສືບຕໍ່ປະຕິບັດຢ່າງເຂັ້ມງວດ ໃນການປິດບັນດາກິດຈະການຮ້ານບັນເທີງ, ຮ້ານເຫຼົ້າ-ເບຍ, ຮ້ານກິນດື່ມ, ໂຮງຮູບເງົາ, ຮ້ານຄາຣາໂອເກະ, ຮ້ານບໍລິການນວດ-ສະປາທຸກປະເພດ, ກາຊິໂນ, ຕະຫຼາດກາງຄືນ, ສະຖານທີ່ອອກກຳລັງກາຍ-ຫຼິ້ນກິລາໃນຮົ່ມ, ກິລາກາງແຈ້ງ ເປັນທີມທີ່ມີການໃກ້ຊິດກັນ ເຊັ່ນ: ກິລາບານເຕະ, ບານບ້ວງ, ບານສົ່ງ, ມາລາທອນ, ຕີມວຍ, ຕີໄກ່, ເປຕັງ ແລະ ການແຂ່ງຂັນກິລາທຸກປະເພດ ທີ່ມີຜູ້ຊົມ ແລະ ນັກກິລາ ເຂົ້າຮ່ວມເກີນ 10 ຄົນ ແລະ ບໍ່ສາມາດຮັກສາໄລຍະຫ່າງເກີນ 1 ແມັດໄດ້ |
| 3. ສະເໜີໃຫ້ພິຈາລະນາກຳນົດເຂດຄວາມສ່ຽງການແຜ່ລະບາດຂອງເຊື້ອພະຍາດໂຄວິດ 19 ຕາມມະຕິຕົກລົງສະບັບເລກທີ 05/ລບ ຢ່າງຮີບດ່ວນ ແລະ ມີມາດຕະການຈັດຕັ້ງປະຕິບັດຢ່າງສົມເຫດສົມຜົນ ເພື່ອໃຫ້ບັນດາຫົວໜ່ວຍທຸລະກິດທີ່ມີເງື່ອນໄຂໃນການປ້ອງກັນການແຜ່ລະບາດຂອງເຊື້ອພະຍາດດັ່ງກ່າວໃຫ້ສາມາດດຳເນີນທຸລະກິດໄດ້ໃນເຂດດັ່ງກ່າວ. | |
| 4. ສະເໜີພິຈາລະນາຜ່ອນຜັນການອະນຸມັດໃຫ້ເຈົ້າຂອງທຸລະກິດ ແລະ ຊ່ຽວຊານທີ່ເປັນຊາວຕ່າງປະເທດທີ່ມີຄວາມຈຳເປັນ ເຂົ້າມາເຮັດວຽກໃນ ສປປ ລາວ. | ○ **ລົງວັນທີ 01.05.2020**, ແຈ້ງການຈາກຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ເລກທີ 524/ຫສນຍ: ຂໍ້ 5.5: ໂຈະການອອກວີຊາທຸກປະເພດ ໃຫ້ບຸກຄົນທົ່ວໄປທີ່ເດີນທາງມາຈາກປະເທດທີ່ຍັງມີການລະບາດຂອງພະຍາດ COVID-19, ຍົກເວັ້ນວີຊາສຳລັບຊ່ຽວຊານ, ວິຊາການ ແລະ ແຮງງານຕ່າງປະເທດ ທີ່ມີຄວາມຈຳເປັນເຂົ້າມາປະຕິບັດວຽກງານ ຢູ່ບັນດາໂຄງການທີ່ສຳຄັນ ແລະ ຈຳເປັນ, ແຕ່ຕ້ອງປະຕິບັດການກວດຫາເຊື້ອ COVID-19 ແລະ ຈຳກັດບໍລິເວນຕົວເອງ 14 ວັນ ຢູ່ຕາມສູນທີ່ທາງການກຳນົດ ຕາມທີ່ລະບຸໄວ້ໃນແຈ້ງການ ສະບັບເລກທີ 507/ຫສນຍ, ລົງວັນທີ 24 ເມສາ 2020. ມອບໃຫ້ຄະນະສະເພາະກິດ ອອກຄຳແນະນຳໃນການຈັດຕັ້ງປະຕິບັດຕົວຈິງ ໃຫ້ລະອຽດ ແລະ ຮັດກຸມ. |

## IV. ຂໍ້ສະເໜີສະເພາະເພື່ອຟື້ນຟູເສດຖະກິດຈາກວິກິດການ COVID-19.

ເສດຖະກິດຂອງ ສປປ ລາວ ມີທ່າທີ່ຫຼຸດລົງກ່ອນວິກິດການ COVID-19 ໃນປີ 2020 ອັດຕາຂະຫຍາຍຕົວຂອງເສດຖະກິດແມ່ນຫຼຸດລົງ ແລະ GDP ແມ່ນຢູ່ໃນອັນດັບ 5%.

ວິກິດການ COVID-19 ໄດ້ເຮັດໃຫ້ຕະຫຼາດໂລກໄດ້ຢຸດສະຫງັກທັງຂາເຂົ້າ ແລະ ຂາອອກ ຊຶ່ງໄດ້ກະທົບເຖິງອຸດສາຫະກຳປຸງແຕ່ງເພື່ອສົ່ງອອກ ແລະ ທຸລະກິດທ່ອງທ່ຽວຢ່າງຮ້າຍແຮງໃນ ສປປ ລາວ ຂະແໜງການດັ່ງກ່າວ ພ້ອມດ້ວຍຂະແໜງການກະສິກຳ ແລະ ຂະແໜງການບໍລິການອື່ນໆກໍ່ໄດ້ຮັບຜົນກະທົບບໍ່ຫຼາຍກໍ່ໜ້ອຍ ດັ່ງທີ່ໄດ້ລາຍງານໃນບົດຜ່ານມາ. ການແກ່ຍາວວິກິດການ COVID-19 ແມ່ນຈະກະທົບຕໍ່ການຜະລິດທຸລະກິດຫຼາຍຂຶ້ນເປັນໄລຍະຍາວ ແລະ ມີຜົນກະທົບເຖິງລາຍຮັບງົບປະມານຂອງລັດຖະບານ ພ້ອມທັງການສ້າງວຽກເຮັດງານທຳ ແລະ ລາຍໄດ້ຂອງຄົວເຮືອນໃນສັງຄົມ. ວິກິດການນີ້ຈະເຮັດໃຫ້ເສດຖະກິດຂອງ ສປປ ລາວໄດ້ຫຼຸດລົງ ແລະ ເຮັດໃຫ້ GDP ຂອງ ສປປ ລາວຈະຫຼຸດລົງຕື່ມເຖິງ 01 ຫາ 02 % ໃນປີ 2020.

ການຟື້ນຟູເສດຖະກິດຈາກວິກິດການ COVID-19 ມີຄວາມຮຽກຮ້ອງໃຫ້ລັດຖະບານວາງນະໂຍບາຍ ແລະ ມາດຕະການເພື່ອສ້າງໄມ້ງັດເສດຖະກິດໃຫ້ການຜະລິດໃນທຸກໆຂະແໜງການໄດ້ຜະລິດຄືນໃໝ່ໂດຍມີປະສິດທິພາບສູງກວ່າເກົ່າ. ຖືເອົາການຟື້ນຟູນີ້ເປັນໂອກາດໃນການປັບປຸງສິ່ງທີ່ປົກພ່ອງ ໃນການຈັດຕັ້ງສົ່ງເສີມການຜະລິດ ໃນລະບົບການຄຸ້ມຄອງຂອງລັດ ແລະ ອື່ນໆ, ໂດຍສະເພາະແມ່ນການເພີ່ມທະວີພັນທະພາບໃນໜ່ວຍພາຍຫຼັງວິກິດການ COVID-19. ການຟື້ນຟູເສດຖະກິດອາດຈະໃຊ້ເວລາເຖິງ 28 ເດືອນ ຫຼື 02 ປີເຄິ່ງ ຕາມສະພາບຄວາມເປັນຈິງຂອງແຕ່ລະຂະ ແໜງການ. ສ່ວນຂະແໜງການໃດທີ່ອາໄສຕະຫຼາດຕ່າງປະເທດໃນການຜະລິດເຊັ່ນ: ຂະແໜງການທ່ອງທ່ຽວ ແລະ ຂະແໜງອຸດສາຫະກຳປຸງແຕ່ງເພື່ອການສົ່ງອອກຈະໃຊ້ເວລາໃນການຟື້ນຟູຫຼາຍກວ່າຂະແໜງການອື່ນໆ.

ເມື່ອສາມາດຟື້ນຟູການຜະລິດກໍ່ຄືເສດຖະກິດໂດຍໄວ, ສຄອ ແຫ່ງຊາດລາວ ຈຶ່ງໄດ້ມີຂໍ້ສະເໜີໃຫ້ລັດຖະບານໄດ້ເອົາໃຈໃສ່ປັບປຸງ ຫຼື ກຳນົດນະໂຍບາຍ ແລະ ມາດຕະການສະເພາະທີ່ປະກອບດ້ວຍ: 1). ນະໂຍບາຍ ແລະ ມາດຕະການດ້ານການເງິນ ແລະ ການສະໜອງທຶນ; 2). ນະໂຍບາຍ ແລະ ມາດຕະການຫຼຸດຜ່ອນດ້ານພາສີອາກອນ ແລະ ຄ່າທຳນຽມ; ແລະ 3). ນະໂຍບາຍ ແລະ ມາດຕະການປັບປຸງແວດລ້ອມການດຳເນີນທຸລະກິດ ແລະ ກົນໄກການຄຸ້ມຄອງຂອງລັດ. ພ້ອມດຽວກັນນັ້ນຍັງມີຄຳເຫັນຕໍ່ມາດຕະການເພື່ອລະດົມທຶນຈາກພາຍນອກ ລວມທັງຈາກອົງການຈັດຕັ້ງສາກົນ, ປະເທດເພື່ອນມິດ ແລະ ນັກລົງທຶນເອກະຊົນຈາກຕ່າງປະເທດເພື່ອມາຊ່ວຍເຫຼືອປະຄອງເສດຖະກິດໃນໄລຍະການຟື້ນຟູດັ່ງຮູບພາບ 4.1.

**ຮູບທີ 4.1: ບັນດານະໂຍບາຍ ແລະ ມາດຕະການເພື່ອຟື້ນຟູເສດຖະກິດ.**




## 4.1 ຂໍ້ສະເໜີຕໍ່ນະໂຍບາຍ ແລະ ມາດຕະການດ້ານການເງິນ ແລະ ການລົງທຶນ.

### 4.1.1 ນະໂຍບາຍ ແລະ ມາດຕະການໃຫ້ທະນາຄານ ແລະ ສະຖາບັນການເງິນ.

ນະໂຍບາຍ ແລະ ມາດຕະການດ້ານການເງິນ ແລະ ການລົງທຶນເປັນໄມ້ງັດທີ່ສຳຄັນກວ່າໝູ່ໃຫ້ແກ່ພາກທຸລະກິດສາມາດປະຄອງຕົນໄດ້ ແລະ ຈັດຕັ້ງການຜະລິດຄືນໃໝ່. ໃນເບື້ອງຕົ້ນທຸລະກິດແມ່ນຕ້ອງການທຶນໝູນວຽນເພື່ອລິເລີ່ມກິດຈະການຄືນໃໝ່.

ອົງກອນທີ່ສະໜອງເງິນກູ້ເພື່ອທຶນໝູນວຽນປະກອບມີ ທະນາຄານທຸລະກິດທົ່ວໄປ, ທະນາຄານທຸລະກິດທີ່ເຂົ້າໂຄງການກອງທຶນ SME ແລະ ສະຖາບັນການເງິນ (ສກຈ). ດັ່ງທີ່ໄດ້ລາຍງານໃນບົດຜ່ານມາ ສະຖາບັນການເງິນດັ່ງກ່າວມີຄວາມຫຍຸ້ງຍາກໃນການຫຼຸດດອກເບ້ຍ, ຫຼຸດເງື່ອນໄຂການກູ້ຢືມ ຍ້ອນວ່າຕະຫຼາດທຶນໃນ ສປປ ລາວ ມີຄວາມສ່ຽງສູງ ດັ່ງນັ້ນ ສະຖາບັນດັ່ງກ່າວຕ້ອງການໃຫ້ລັດຖະບານໄດ້ເຂົ້າມາຊ່ວຍວາງມາດຕະການສະເພາະເພື່ອໃຫ້ສາມາດສະໜອງສິນເຊື່ອໄລຍະສັ້ນ ຫຼື ໄລຍະຍາວໃນອັດຕາດອກເບ້ຍທີ່ເໝາະສົມໃຫ້ແກ່ທຸລະກິດ ສິ່ງສຳຄັນແມ່ນໃຫ້ສະຖາບັນການເງິນໄດ້ປະຕິບັດຄຳສັ່ງເລກທີ 238/ທຫກ ເປັນເອກະພາບ, ນະໂຍບາຍ ແລະ ມາດຕະການສະເພາະ ແລະ ສຸກເສີນ ເພື່ອໃຫ້ສະຖາບັນການເງິນປ່ອຍກູ້ປະກອບດ້ວຍ:

- ການຜ່ອນຜັນຂໍ້ກຳນົດເພື່ອປ່ອຍທຶນ ໃນນັ້ນມີການກຳນົດອັດຕາສ່ວນຄັງແຮ ແລະ ອັດຕາສ່ວນທຶນ
- ການໂຈະຂໍ້ກຳນົດວ່າດ້ວຍຄັງແຮພາກບັງຄັບ 06-12 ເດືອນ
- ການຜ່ອນຜັນການປ່ອຍເງິນກູ້ເປັນເງິນຕາຕ່າງປະເທດ
- ການປ່ອຍເງິນກູ້ສຸກເສີນໃຫ້ສະຖາບັນເງິນ (ສກຈ)ໃນອັດຕາດອກເບ້ຍພິເສດໂດຍມີການປອດຕົ້ນທຶນ ແລະ ດອກເບ້ຍ
- ການເລື່ອນການສຳລະດອກເບ້ຍກຳໄລລ່ວງໜ້າຂອງສະຖາບັນການເງິນ ສກຈ ໄປທ້າຍປີ 2020

- ການສ້າງກົນໄກສັບປ່ຽນສະກຸນເງິນຕາ (Currency Swap-Facility) ຢູ່ທະນາຄານແຫ່ງລັດເພື່ອອຳນວຍຄວາມສະດວກໃຫ້ສະຖາບັນການເງິນໃນກໍລະນີກູ້ຢືມຈາກຕ່າງປະເທດ.
- ການສ້າງກອງທຶນຄ້ຳປະກັນເງິນກູ້ (Credit Quarantee Scheme) ສຳລັບການກູ້ຢືມ SME , ແລະ
- ການຈັດຕັ້ງປະຕິບັດລະບົບການສະໜອງສິນເຊື່ອຈາກກອງທຶນ SME ພ້ອມທັງການລະດົມທຶນເພີ່ມເຕີມເຂົ້າກອງທຶນດັ່ງກ່າວຈາກສະຖາບັນການເງິນສາກົນ ແລະ ຄູ່ຮ່ວມພັດທະນາ.

ຂໍ້ສະເໜີ ນະໂຍບາຍ ແລະ ມາດຕະການດ້ານການເງິນ ແລະ ສະໜອງທຶນເພື່ອຟື້ນຟູເສດຖະກິດ ເຊິ່ງໄດ້ສະແດງໃນຮູບພາບ 4.2 ລຸ່ມນີ້.

**ຮູບທີ 4.2: ນະໂຍບາຍ, ມາດຕະການດ້ານການເງິນ ແລະ ການສະໜອງທຶນ**




### 4.1.2 ນະໂຍບາຍ ແລະ ມາດຕະການ ເພື່ອລະດົມທຶນຈາກຕ່າງປະເທດ.

#### ກ. ນະໂຍບາຍ ແລະ ມາດຕະການ ຕໍ່ການລະດົມທຶນຈາກສະຖາບັນການເງິນສາກົນ.

ມາເຖິງປັດຈຸບັນນີ້ ຍັງບໍ່ຮູ້ໄດ້ວ່າວິກິດການ COVID-19 ແລະ ຜົນກະທົບຂອງມັນຈະແກ່ຍາວອີກດົນປານໃດ ແລະ ຍັງບໍ່ສາມາດຄາດຄະເນມູນຄ່າຄວາມເສຍຫາຍເປັນຈຳນວນເທົ່າໃດ, ແນ່ນອນວ່າການເສຍຫາຍມະຫາສານ ແລະ ທຶນຮອນທີ່ຈຳເປັນເພື່ອໃຊ້ບັນເທົາຄວາມເດືອດຮ້ອນຂອງປະຊາຊົນລວມທັງເພື່ອກະຕຸ້ນການຟື້ນຕົວ ແລະ ການຂະຫຍາຍຕົວຂອງເສດຖະກິດ ແມ່ນມີຈຳນວນຫຼາຍກວ່ານັ້ນ. ດັ່ງນັ້ນແມ່ນຫຼີກລ້ຽງບໍ່ໄດ້ທີ່ລັດຖະບານຈະຕ້ອງລະດົມທຶນຈາກທຸກໆແຫຼ່ງທີ່ເປັນໄປໄດ້ ໂດຍສະເພາະແມ່ນຈາກອົງການຈັດຕັ້ງສາກົນ.

ອີງຕາມການລາຍງານຂອງກະຊວງການເງິນໃນຄະນະສະເພາະກິດ ແລະ ຂໍ້ມູນຈາກສື່ສາທາລະນະຂອງສາກົນ, ສຄອ ແຫ່ງຊາດລາວ ເຂົ້າໃຈວ່າບັນດາປະເທດທີ່ພັດທະນາແລ້ວວ່າຈະມີການຜ່ອນຜັນການຊຳລະໜີ້ສິນທີ່ເປັນລັກສະນະ

ເພີ່ມທະວີພາຄີໃຫ້ປະເທດລູກໜີ້ຂອງຕົນໂດຍສະເພາະໃຫ້ແກ່ປະເທດທີ່ມີສະຖານະດ້ອຍພັດທະນາຄື ສປປ ລາວ. ໃນນັ້ນ ເງື່ອນໄຂທໍາອິດເພື່ອຮັບເອົາການຊ່ວຍເຫຼືອດັ່ງກ່າວແມ່ນປະເທດລູກໜີ້ຕ້ອງເຂົ້າຮ່ວມຈັດຕັ້ງປະຕິບັດ ໂຄງການກອງທຶນການເງິນສາກົນ (IMF) ທີ່ໄດ້ມີນະໂຍບາຍສະໜອງແຫຼ່ງທຶນໃຫ້ປະເທດດ້ອຍພັດທະນາທີ່ໄດ້ຮັບຜົນກະທົບຈາກພະຍາດ COVID-19 ຈໍານວນ 142 ລ້ານໂດລາສາຫາລັດຕໍ່ປີ. ເຊິ່ງຂັ້ນຕອນ ແລະ ເວລາທີ່ໃຊ້ພິຈາລະນາ ແລະ ກຽມໂຄງການຈະມີການເລັ່ງລັດ ແລະ ງ່າຍດາຍກວ່າໂຄງການປົກກະຕິຂອງ IMF ຫຼາຍເທົ່າ. ນອກນັ້ນຍັງມີໂຄງການຈາກທະນາຄານໂລກ, ທະນາຄານພັດທະນາອາຊີ (ADB), ສະຫະພາບເອີຣົບ (EU) ທີ່ມີໂຄງການຊ່ວຍເຫຼືອປະເທດດ້ອຍພັດທະນາ ເພື່ອອອກຈາກວິກິດການ COVID-19. ທະນາຄານໂລກ ແລະ ທະນາຄານ ADB ແມ່ນໄດ້ແຈ້ງເຈດຈໍານົງໃນການໃຫ້ທຶນແລ້ວ ແລະ ເລັ່ງເຫັນຄວາມຕ້ອງການທຶນນີ້. ສຄອ ແຫ່ງຊາດລາວ ຂໍສະໜັບສະໜູນໃຫ້ລັດຖະບານ ພິຈາລະນາເຂົ້າຮ່ວມໂຄງການຂອງກອງທຶນການເງິນສາກົນ (IMF) ຍ້ອນເຫັນວ່າຈະເປັນການຊ່ວຍແກ້ໄຂບັນຫາລະດັບມະຫາພາກກ່ຽວກັບໜີ້ສິນສາທາລະນະທີ່ເປັນບັນຫາຊໍາເຮື້ອ ແລະ ຍັງເປັນການລະດົມທຶນເປັນເງິນຕາຕ່າງປະເທດ, ເຊິ່ງປະເທດພວກເຮົາພວມມີຄວາມຕ້ອງການເປັນຢ່າງຍິ່ງ ເພື່ອການຟື້ນຟູ ແລະ ຂະຫຍາຍເສດຖະກິດຂອງ ສປປ ລາວ.

ນອກຈາກການລະດົມແຫຼ່ງທຶນຈາກ IMF ແລະ ອົງການຈັດຕັ້ງສາກົນ, ປະເທດເພື່ອນມິດແລ້ວລັດຖະບານຈະຕ້ອງໄດ້ລະດົມແຫຼ່ງທຶນຈາກພາກເອກະຊົນ ແລະ ນັກລົງທຶນຕ່າງປະເທດໄປພ້ອມໆກັນ. ມາດຕະການທີ່ສໍາຄັນທີ່ສຸດໃນໄລຍະນີ້ແມ່ນຂະຫຍາຍຖານຂອງຕະຫຼາດທຶນຂອງ ສປປ ລາວ ຂຶ້ນໂດຍການພັດທະນາເຄື່ອງມືການລົງທຶນຂອງພາກທຸລະກິດ.

### ຂ. ນະໂຍບາຍ ແລະ ມາດຕະການຕໍ່ການລະດົມທຶນຈາກພາກທຸລະກິດ.

ສາເຫດຂອງບັນຫາການເຂົ້າເຖິງແຫລ່ງທຶນຂອງທຸລະກິດ ແມ່ນຄວາມຈໍາກັດຂອງເບື້ອງສະໜອງ ໝາຍວ່າ ຜະລິດຕະພັນ ແລະ ບໍລິການດ້ານເງິນ ໃນປະເທດ ບໍ່ມີຄວາມຫລາກຫລາຍ, ສ່ວນໃຫຍ່ ແມ່ນອາໄສແຕ່ສະຖາບັນການເງິນໃນຮູບທະນາຄານ ເຊິ່ງຜ່ານມາກໍ່ສະໜອງພຽງຜະລິດຕະພັນ ແລະ ການບໍລິການເງິນກູ້ໃນຮູບແບບເດີມໆ ຄືທີ່ເຄີຍເຮັດຜ່ານມາຫລາຍສິບປີແລ້ວ, ເຊັ່ນ: ເງິນກູ້ຄໍ້າດ້ວຍອະສັງຫາລິມະຊັບ ແລະ overdraft ເປັນຕົ້ນ. ເຖິງແມ່ນວ່າໃນໄລຍະໝໍ່ໆມານີ້ໄດ້ມີການນໍາເຕັກໂນໂລຊີທີ່ທັນສະໄໝເຂົ້າມາໃຊ້, ແຕ່ຍັງຈໍາກັດຢູ່ໃນການບໍລິການທົ່ວໄປເຊັ່ນ: ການຊໍາລະ ແລະ ການໂອນເງິນ ເປັນຫລັກ. ສະນັ້ນ ມີຄວາມຈໍາເປັນຢ່າງຍິ່ງ ທີ່ຕ້ອງຊຸກຍູ້ໃຫ້ທະນາຄານພັດທະນາຜະລິດຕະພັນຂອງຕົນໃຫ້ມີຄວາມຫລາກຫລາຍ ເພື່ອໃຫ້ແທດເໝາະກັບຄວາມຕ້ອງການທີ່ແທ້ຈິງຂອງທຸລະກິດ.

ນອກຈາກນັ້ນແລ້ວ, ຜະລິດຕະພັນການເງິນປະເພດໜຶ່ງ ທີ່ຄວນຕ້ອງໄດ້ຊຸກຍູ້ໃຫ້ສາມາດເກີດ ແລະ ຂະຫຍາຍຕົວໄປຄຽງຄູ່ກັນ ຢູ່ ສປປ ລາວ ນັ້ນຄືຜະລິດຕະພັນການສະໜອງທຶນເຂົ້າໃນຮຸ້ນຂອງທຸລະກິດ. ວິສາຫະກິດທີ່ຢູ່ໃນຂັ້ນເລີ່ມຕົ້ນກິດຈະການ, ຫລືໂຄງການພັດທະນາຜະລິດຕະພັນທີ່ເປັນນະວັດຕະກໍາໃໝ່, ທຶນທີ່ເໝາະສົມທີ່ສຸດສໍາລັບເຂົາເຈົ້າ ແມ່ນທຶນໃນຮູບເປັນຮຸ້ນ, ໝາຍວ່າເຂົາເຈົ້າຕ້ອງການນັກລົງທຶນໃສ່ຖານຮຸ້ນຂອງຕົນ ການບໍລິການແບບນີ້ ຍັງບໍ່ທັນເຖິງຂັ້ນເຂົ້າຕະຫລາດຮຸ້ນ, ເພາະຕະຫລາດຮຸ້ນນັ້ນຈະເໝາະກັບອີກລະດັບໜຶ່ງຢູ່ຂັ້ນຕໍ່ໆໄປໃນວົງຈອນການພັດທະນາຂອງວິສາຫະກິດ. ສໍາລັບຢູ່ ສປປ ລາວ, ການສະໜອງທຶນໃນຮູບເປັນຮຸ້ນໂດຍຜູ້ໃຫ້ບໍລິການເປັນທາງການ ແລະ ເປັນລະບົບສໍາລັບວິສາຫະກິດ ນັ້ນເວົ້າໄດ້ວ່າ ເກືອບບໍ່ມີເລີຍ. ໃນຂະນະທີ່ຜູ້ໃຫ້ບໍລິການປະເພດນີ້ ມີຢ່າງຫລາກຫລາຍໃນຕະຫລາດອື່ນໆ ເຊັ່ນ: ໂດຍກອງທຶນຮຸ້ນເອກະຊົນ (Private Equity-PE), ຜູ້ລົງທຶນໃນຮຸ້ນ (Venture Capital-VC), ແລະ ອື່ນໆ.

ນອກຈາກການບໍລິການດ້ານການເງິນປະເພດນີ້ ຈະແທດເໝາະກັບວິສາຫະກິດທີ່ຢູ່ໃນຂັ້ນກໍ່ຮ່າງສ້າງຕົວທີ່ສຸດແລ້ວ, ກອງທຶນເຫລົ່ານີ້ ຍັງຊ່ວຍສົ່ງເສີມ ແນວຄວາມຄິດໃໝ່ ແລະ ນະວັດຕະກໍາທາງທຸລະກິດ ເປັນຢ່າງດີ, ເພາະທະນາຄານຈະບໍ່ມັກ ຫລື ບໍ່ສາມາດສະໜອງທຶນໃຫ້ວິສາຫະກິດທີ່ບໍ່ມີປະຫວັດຄວາມສໍາເລັດທີ່ຊັດເຈນ. ທຸລະກິດທີ່ປະສົບຜົນສໍາເລັດສູງໃນປະຈຸບັນເຊັ່ນ: Microsoft, Apple, Tesla, Alibaba ຕ່າງກໍໄດ້ໃຊ້ບໍລິການທຶນໃນຮູບແບບຮຸ້ນ ໃນຊ່ວງໄລຍະທີ່ເຂົາເຈົ້າເລີ່ມຕົ້ນທຸລະກິດມາແລ້ວທັງນັ້ນ.

**ຄ. ການຂາຍຊັບສິນຂອງລັດ ລວມທັງຮຸ້ນໃນວິສາຫະກິດລັດ.**

ວິທີຫນຶ່ງທີ່ຈະຊ່ວຍໃຫ້ລັດຖະບານ ສາມາດລະດົມທຶນໃນຮູບແບບເງິນສົດເຂົ້າສູ່ລະບົບເສດຖະກິດ ແມ່ນການຂາຍຊັບສິນບາງສ່ວນຂອງລັດ ໃຫ້ແກ່ນັກລົງທຶນທີ່ເຫມາະສົມ. ຊັບສິນດັ່ງກ່າວ ອາດເປັນຊັບສິນໃນຮູບທີ່ຈັບຕ້ອງໄດ້ ເຊັ່ນ: ທີ່ດິນ, ອາຄານ, ພາຫະນະ, ເຄື່ອງຈັກ ແລະ ອື່ນໆ ແລ້ວ, ຍັງມີຊັບສິນປະເພດຊັບສິນການເງິນ ເປັນຕົ້ນແມ່ນຮຸ້ນໃນລັດວິສາຫະກິດ. ຊັບສິນເຫລົ່ານີ້ ອາດແມ່ນຊັບສິນທີ່ມີຄຸນນະພາບດີ ແລະ ບໍ່ຄ່ອຍດີປານໃດ, ລັດຖະບານຄວນຕິຖອຍບາງຄວາມຄິດທີ່ວ່າ ຂອງດີຕ້ອງເກັບໄວ້ເອງ ແລະ ຂາຍສິ່ງທີ່ດ້ອຍຄຸນນະພາບ ເພາະໂດຍຫລັກການຂອງຕະຫລາດແລ້ວ ຂອງດີຈະໄດ້ລາຄາດີ ແລະ ຂາຍໄດ້ໄວ. ຖ້າຜູ້ຊື້ຮຸ້ນຂອງລັດວິສາຫະກິດ ຫາກແມ່ນນັກລົງທຶນທີ່ມີຄຸນນະພາບແລ້ວ, ການຂາຍຮຸ້ນຈະນໍາມາເຊິ່ງຜົນປະໂຫຍດຂອງວິສາຫະກິດນັ້ນໆ ເພາະຜູ້ເປັນເຈົ້າຂອງກໍ່ຕ້ອງຢາກພັດທະນາໃຫ້ດີ ກວ່າເກົ່າ ແລະ ສ້າງປະໂຫຍດໃຫ້ເສດຖະກິດລວມອີກດ້ວຍ.

ສໍາຄັນທີ່ສຸດ ແມ່ນຂະບວນການຂາຍນັ້ນ ຕ້ອງໄດ້ມາດຕະຖານສາກົນ ດ້ານຄວາມໂປ່ງໃສ ແລະ ຍຸດຕິທໍາ. ອາດຂໍການຊ່ວຍເຫລືອທາງດ້ານວິຊາການຈາກອົງການສາກົນທີ່ມີຄວາມສາມາດໃນຖານະຕົວກາງ (ບຸກຄົນທີສາມ) ມາຊ່ວຍວາງແຜນ ແລະ ດໍາເນີນການຂາຍ, ອີກດ້ານຫນຶ່ງ ກໍ່ຮັບປະກັນໃຫ້ໄດ້ຄວາມເຊື່ອຫມັ້ນຈາກຜູ້ທີ່ຈະຊື້ ແລະ ຮັບປະກັນວ່າລັດຖະບານຈະໄດ້ຜົນຕອບແທນທີ່ສົມຄວນໄດ້. ບໍ່ຄວນຄິດວ່າການຂາຍຊັບສິນ ເປັນຂະບວນການທີ່ໃຊ້ເວລາດົນກວ່າຈະໄດ້ເງິນ ພຽງແຕ່ລັດຖະບານມີແຜນຄັກແນ່ວ່າຈະມີການຂາຍຫຸ້ນລັດວິສາຫະກິດ, ເຊິ່ງຖືເປັນການປະຕິຮູບສໍາຄັນອັນຫນຶ່ງ, ໃນຈໍານວນ ແລະ ຕາມໄລຍະເວລາທີ່ແນ່ນອນ ຜ່ານລະບົບທີ່ເປັນສາກົນ ນັ້ນຈະເປັນການສົ່ງສັນຍານທາງບວກໃຫ້ແກ່ນັກລົງທຶນທັງພາຍໃນແລະຕ່າງປະເທດ ເຮັດໃຫ້ເຂົາເຈົ້າສົນໃຈຕະຫລາດ ສປປ ລາວ ແລະ ຈະເລີ່ມເບິ່ງວ່າຈະມີຊ່ອງທາງແນວໃດທີ່ເຂົ້າມາລົງທຶນໃນຕະຫລາດລາວ ເຖິງແມ່ນວ່າເຂົາເຈົ້າຈະບໍ່ສົນໃຈຊື້ຫຸ້ນລັດວິສາຫະກິດໃດຫນຶ່ງໂດຍກົງກໍ່ຕາມ.

### 4.1.3 ຄາດຄະເນຄວາມຕ້ອງການທຶນເພື່ອຈັດຕັ້ງປະຕິບັດມາດຕະການ.

ໃນໄລຍະການຟື້ນຟູຈາກວິກິດການ COVID-19 ທຸລະກິດເກືອບທຸກຂະແໜງການແມ່ນຕ້ອງການໃຫ້ລັດຖະບານໄດ້ຍົກເວັ້ນ ແລະ ຫຼຸດຜ່ອນພາສີ, ອາກອນ ແລະ ຄ່າທໍານຽມຈໍານວນໜຶ່ງ. ຢູ່ໃນກອງປະຊຸມທຸລະກິດລາວ (LBF) ພາກທຸລະກິດກໍ່ໄດ້ສະເໜີການຫຼຸດຜ່ອນຄ່າທໍານຽມຈໍານວນໜຶ່ງແລ້ວ. ຂໍ້ສະເໜີຕໍ່ໄປນີ້ແມ່ນໄດ້ສະເໜີໃຫ້ຈັດຕັ້ງປະຕິບັດໃນໄລຍະຟື້ນຟູຈາກວິກິດການ COVID-19 ຫຼັງຈາກນັ້ນໃນໄລຍະຟື້ນຟູຈາກວິກິດການ COVID-19 ຂໍໃຫ້ລັດຖະບານໄດ້ມີການປະເມີນຜົນ ແລະ ວາງນະໂຍບາຍ ແລະ ມາດຕະການໃໝ່ຕາມທາງຄວນ.

ດັ່ງທີ່ໄດ້ກ່າວມາຂ້າງເທິງແລ້ວວ່າ, ຍັງບໍ່ທັນມີໃຜ ແລະ ມີວິທີໃດທີ່ສາມາດຄາດຄະເນຢ່າງຫມັ້ນໃຈໄດ້ ກ່ຽວກັບຜົນກະທົບ ແລະ ໄລຍະການລະບາດຂອງ COVID-19, ດັ່ງນັ້ນ ການຄາດຄະເນຄວາມຕ້ອງການດ້ານງົບປະມານຂອງລັດສໍາລັບ ສປປ ລາວ ເພື່ອຮັບມືກັບ COVID-19 ນີ້ ເຮົາອາດພິຈາລະນາເບິ່ງບົດຮຽນ ແລະ ຕົວເລກຈາກບັນດາປະເທດອື່ນໆໂດຍສະເພາະ ແມ່ນຈາກບັນດາປະເທດ ASEAN ມາປຽບທຽບ. ຮູບທີ 4.5 ໄດ້ສະແດງໃຫ້ເຫັນງົບປະມານທີ່ລັດຖະບານບາງປະເທດໃຊ້ໃນການຮັບມືກັບການລະບາດຂອງ SARS ທຽບກັບຕົວເລກ GDP ເຊິ່ງການລະບາດຕອນນັ້ນສົ່ງຜົນກະທົບທີ່ຫນ້ອຍກວ່າຄັ້ງນີ້ຫລາຍເທົ່າ, ໃນຂະນະທີ່ຕົວເລກງົບປະມານທີ່ບັນດາປະເທດໃນ ASEAN ຈັດສັນໄວ້ສໍາລັບຮັບມືກັບ COVID-19 ນີ້ ໂດຍສະເລ່ຍ ຈະຢູ່ປະມານແຕ່ 2% ຫາ 15% ຂອງ GDP ປີ 2019 (ຂໍ້ມູນໃນເດືອນເມສາ 2020).

ສະນັ້ນ, ສໍາລັບ ສປປ ລາວ, ຖ້າເຮົາພິຈາລະນາເອົາລະດັບຕໍ່າສຸດ ຄື 2% ຂອງ GDP ປີ 2019 (ປະມານ 19ຕື້ ໂດລາສະຫະລັດ), ຫມາຍຄວາມວ່າ ລັດຖະບານຄວນຈັດສັນງົບປະມານຂອງລັດໄວ້ປະມານ 380 ລ້ານໂດລາສະຫະລັດ ສໍາລັບພາລະກິດລວມໃນການຮັບມື COVID-19 ລວມທັງການບັນເທົາທຸກຂອງປະຊາຊົນ. ໃນຈໍານວນງົບປະມານນີ້, ຫລາຍປະເທດຈັດແບ່ງໄວ້ເປັນການຊ່ວຍພາກທຸລະກິດ ຢູ່ປະມານ 40%, ນັ້ນຫມາຍວ່າ ສໍາລັບ ສປປ ລາວ ອາດຈະແມ່ນປະມານ 152 ລ້ານໂດລາສາຫາລັດ ອີງຕາມສົມມຸດຖານຂ້າງເຖິງ. ການທີ່ລັດຖະບານ ອອກປະກາດກ່ຽວກັບການຈັດສັນ

ງົບປະມານດ້ວຍຕົວເລກ ພ້ອມທັງເງື່ອນໄຂ ແລະ ໄລຍະເວລາທີ່ຈະແຈ້ງ ເຊິ່ງຈະມີຄວາມສໍາຄັນຢ່າງຫຍິ່ງ ເພາະມັນຈະເປັນການສື່ສັນຍານທີ່ຊັດເຈນຂຶ້ນໃຫ້ພາກທຸລະກິດ ສາມາດຄາດຄະເນວ່າພາກລັດມີການຊ່ວຍເຫລືອລະດັບໃດ ແລະ ພາໃຫ້ເກີດມີຄວາມເຊື່ອໝັ້ນຫລາຍຂຶ້ນ ສະນັ້ນຈຶ່ງມີຄວາມຈໍາເປັນຫລາຍ ໃນສະຖານະການຄືດັ່ງນີ້. ການຄາດຄະເນທີ່ກ່າວມານັ້ນ ເປັນພຽງການຄາດຄະເນໃນເບື້ອງຕົ້ນ ອີງຈາມຂໍ້ມູນທີ່ມີໃນຂະນະນັ້ນ. ແນ່ນອນວ່າ, ລັດຖະບານອາດມີການທົບທວນຄືນຕົວເລກ ແລະ ວິທີການຄາດຄະເນແມ່ນອີງຕາມສະພາບ ແລະ ປັດໃຈທີ່ອາດປ່ຽນແປງໄປແຕ່ລະໄລຍະ.

**ຮູບທີ 4.5: ຄາດຄະເນຄວາມຕ້ອງການງົບປະມານເພື່ອຈັດຕັ້ງປະຕິບັດມາດຕະການ.**

**ຕົ້ນທຶນທີ່ບາງປະເທດເຄີຍໃຊ້ກະຕຸ້ນເສດຖະກິດ ຕອນ SARS ລະບາດ**

**Table 1. Government Stimulus Packages in Response to SARS**

| Country | Type of Package | Cost (% of GDP) |
|---|---|---|
| China | • Temporary tax relief and subsidies for affected industries<br>• Free medical treatment for the poor and some price controls on SARS-related drugs and goods | 0.2% |
| Taiwan | • Temporary tax relief, job creation, and loan guarantee schemes | 0.4% |
| Hong Kong | • Loan programs, support for tourism-related industries, and job training | 0.9% |
| Singapore | • Temporary reduction in tourism and transport administrative fees, and relief measures for airlines | 0.1% |
| Thailand | • Partial reimbursement of business-related losses for affected industries<br>• Partial reimbursement for medical costs | 0.3% |
| Malaysia | • General funding allocated as emergency budget | 1.7% |

Source: GAO, ADB, World Bank calculations

- ຕາຕະລາງຂ້າງເທິງເພື່ອການປຽບທຽບ, ໃນຂະນະທີ່ SARS ກໍ່ແມ່ນເຊື້ອຈຸລະຊີບທີ່ມີຜົນຕໍ່ລະບົບຫັນໃຈ, ແຕ່ການລະບາດບໍ່ວ່ອງໄວ, ບໍ່ມີການຂະຫຍາຍວົງກວ້າງທົ່ວໂລກ ແລະ ໄລຍະລະບາດບໍ່ແກ່ຍາວ ຄື COVID-19.

**ງົບປະມານຮັບມື COVID-19 ໃນບາງປະເທດ (ແຜນ ແລະ ອຸນຸມັດແລ້ວ)**

| | Amount / For business | % of 2019 GDP |
|---|---|---|
| Malaysia | $59b / ~ $25b for businesses | 15.5% |
| Thailand | $58b / $ 15b soft loan to SME | 10% |
| Singapore | $41b | 12% |
| Cambodia | ~ $0.8b to $2b (planned) / | 3% to 7.5% |
| Vietnam | $1.16 b + $2.6 b / | 1.5% |
| Myanmar | $0.07b /<br>Soft loans to business (garment, tourism, SME) | 0.1% |

Source: Center for Global Development; www.csis.org

- ບົດລາຍງານຂອງສາກົນໃນເດືອນເມສາ 2020 ອ້າງວ່າ ຜ່ານມາ ສປປ ລາວ ໄດ້ຈັດສັນງົບປະມານລັດ ຈໍານວນປະມານ 11 ລ້ານໂດລາ, ຄໍາຖາມຄື: ສປປ ລາວ ຈະຕ້ອງການເມັດເງິນງົບປະມາດລັດເທົ່າໃດແທ້ ເພື່ອຮັບມື ແລະ ຟື້ນຟູ ຜົນກະທົບຂອງ COVID-19? ຕາຕະລາງຂ້າງລຸ່ມ ລອງຄໍານວນໃນລະດັບຕ່າງໆ ອີງຕາມປະສົບການບາງປະເທດ:

| ກໍລະນີ | % 2019 GDP | ເປັນເງິນ ຫົວໜ່ວຍລ້ານໂດລາ | ຈັດສັນໃຫ້ທຸລະກິດ 20% | ຈັດສັນໃຫ້ທຸລະກິດ 30% | ຈັດສັນໃຫ້ທຸລະກິດ 40% |
|---|---|---|---|---|---|
| 1 | 0.5% | 95 | 19 | 29 | 38 |
| 2 | 1% | ເທົ່າໃດ? 190 | 38 | 57 | 76 |
| 3 | 2% | 380 | 76 | 114 | 152 |
| 4 | 3% | 570 | 114 | 171 | 228 |

ສໍາລັບເບື້ອງແຫລ່ງທຶນທີ່ຈະມາຈັດສັນງົບປະມານດັ່ງກ່າວ ສຄອ ແຫ່ງຊາດລາວ ກໍ່ເຂົ້າໃຈເຖິງສິ່ງທ້າທາຍ ແລະ ຂໍ້ຈໍາກັດທາງດ້ານງົບປະມານ ທີ່ທາງລັດຖະບານປະເຊີນຢູ່ກ່ອນໜ້ານີ້, ດັ່ງນັ້ນ ຈຶ່ງມີຄໍາສະເໜີລະສະນະລວມດັ່ງນີ້:

### ກ. ການດັດແກ້ການຈັດສັນບາງຕົວເລກງົບປະມານທີ່ໄດ້ອານຸມັດໄປແລ້ວ

ອາດເລີ່ມຈາກຕົວເລກງົບປະມານທີ່ໄດ້ຜ່ານສະພາແລ້ວສໍາລັບປີ 2020, ໂດຍເບິ່ງຄືນງົບທີ່ຕັ້ງໄວ້ເປັນລາຍຈ່າຍ, ເປັນການລົງທຶນ ລວມທັງຄາດຄະເນຕົວເລກເງິນຊ່ວຍເຫລືອຈາກສາກົນ ວ່າຈະສາມາດຫັນປ່ຽນ, ຍົກເລີກ ຫລື ເລື່ອນອອກໄປ ເພື່ອໃຫ້ກາຍເປັນງົບປະມານເຂົ້າໃນບ້ວງຮັບມື COVID-19 ດັ່ງທີ່ໄດ້ກ່າວຂ້າງເທິງນັ້ນ. ນອກຈາກນັ້ນ, ອາດຫັນປ່ຽນຈຸດປະສົງຂອງບ້ວງທີ່ເຄີຍວ່າຈະໃຊ້ແບບທົ່ວໄປໃຫ້ມາຮັບໃຊ້ການຮັບມື COVID-19 ໂດຍສະເພາະເຊັ່ນ: ທຶນ 300 ລ້ານໂດລ້າຈາກ ສປ ຈີນ ແລະ ເງິນ 200ຕື້ກີບຂອງລັດຖະບານສໍາລັບ SME.

### ຂ. ຊ່ອງທາງການລະດົມງົບປະມານເພີ່ມ

ນອກຈາກການດັດແກ້/ດັດປັບງົບປະມານທີ່ອະນຸມັດໄປແລ້ວນັ້ນ, ລັດຖະບານ ຍັງອາດສາມາດລະດົມທຶນເພື່ອຮັບມື COVID-19 ເປັນການສະເພາະເພີ່ມຕື່ມຈາກບາງຊ່ອງທາງເຊັ່ນ:

- **ພາກລັດ:**
  - ເຈລະຈາເລື່ອນຊໍາລະ ຫລື ຜ່ອນຜັນນໍາເຈົ້າໜີ້ ເລີ່ມຈາກອົງການສາກົນ ແລະ ປະເທດເພື່ອນມິດ.
  - ເລັ່ງທວງໜີ້ສິນນໍາບໍລິສັດເອກະຊົນ ທີ່ລັດປ່ອຍກູ້ ຫລື ຄໍ້າ ໃຫ້ໄດ້ມາຫລາຍທີ່ສຸດເທົ່າທີ່ເປັນໄປໄດ້.

- ອອກພັນທະບັດພາຍໃນ ແລະ ຕ່າງປະເທດ (Lao COVID-19 Bonds) ໂດຍນຳໃຊ້ກົນໄກເອົາລາຍຮັບຈາກໂຄງການສະເພາະໃດໜຶ່ງມາຄ້ຳ (asset-backed securities) ແທນທີ່ຈະແມ່ນລັດຄ້ຳໂດຍກົງ.
- ພິຈາລະນາຂາຍຊັບສິນບາງສ່ວນ ລວມທັງຮຸ້ນໃນລັດວິສາຫະກິດ (ທັງທີ່ເປັນຊັບສິນຍັງດີ ແລະ ຊັບສິນທີ່ດ້ອຍຄຸນນະພາບ) ໃຫ້ທຶນຕ່າງປະເທດ.

- **ພາກເອກະຊົນ:**
  - ເຈລະຈາຂໍຄ່າສິດທິປະໂຫຍດລ່ວງໜ້າ (advance) ໃນໄລຍະ 3-5 ປີໂດຍສະເໜີອັດຕາສ່ວນຫລຸດ (discount) ຫລື ຂະຫຍາຍໄລຍະສຳປະທານ ໃຫ້ໂຄງການເອກະຊົນທີ່ມີປະສິດທິພາບ
- **ພາກສ່ວນອື່ນໆ:**
  - ຊອກທຶນເພີ່ມຈາກຜູ້ໃຫ້ທຶນ ທັງລະດັບພະຫຸພາຄີ ແລະ ທະວິພາຄີ
  - ລະດົມນ້ຳໃຈຮັກຊາດ ແລະ ການປະກອບສ່ວນຈາກປວງຊົນລາວ.

### 4.2 ຂໍ້ສະເໜີຕໍ່ນະໂຍບາຍ ແລະ ມາດຕະການດ້ານພາສີອາກອນ ແລະ ຄ່າທຳນຽມ

ໃນໄລຍະການຟື້ນຟູຈາກວິກິດການ COVID-19ທຸລະກິດເກືອບທຸກຂະແໜງການແມ່ນຕ້ອງການໃຫ້ລັດຖະບານໄດ້ຍົກເວັ້ນ ແລະ ຫຼຸດຜ່ອນພາສີ, ອາກອນ ແລະ ຄ່າທຳນຽມຈຳນວນໜຶ່ງ. ຢູ່ໃນກອງປະຊຸມ ທຸລະກິດລາວ (LBF) ພາກທຸລະກິດກໍ່ໄດ້ສະເໜີການຫຼຸດອາກອນ ແລະ ຄ່າທຳນຽມຈຳນວນໜຶ່ງແລ້ວ. ຂໍ້ສະເໜີຕໍ່ໄປນີ້ແມ່ນຈະໄດ້ສະ ເໜີໃຫ້ຈັດຕັ້ງປະຕິບັດໃນໄລຍະຟື້ນຟູຈາກວິກິດການ COVID-19 ຫຼັງຈາກນັ້ນຂໍໃຫ້ລັດຖະບານປະເມີນຜົນ ແລະ ວາງນະໂຍບາຍ ແລະ ມາດຕະການໃໝ່ຕາມທາງຄວນ.

#### ກ. ຫຼຸດອາກອນມູນຄ່າເພີ່ມ VAT ແລະ ຍົກເວັ້ນອາກອນກຳໄລ.

ອີງຕາມຜົນການສຳຫຼວດຜົນກະທົບຈາກ COVID-19 ຂອງ ສຄອ ແຫ່ງຊາດລາວ ຂະແໜງທຸລະກິດທີ່ເປັນບູລິມາສິດ ແລະ ທີ່ຖືກຜົນກະທົບຈາກວິກິດການ COVID-19 ປະກອບດ້ວຍ:

- ອຸດສາຫະກຳປຸງແຕ່ງລວມທັງຕັດຫຍິບ ແລະ ອຸດສາຫະກຳທີ່ປັ້ນອ້ອມ.
- ຂະແໜງທຸລະກິດທ່ອງທ່ຽວປະກອບມີ: ໂຮງແຮມ, ຮ້ານອາຫານ, ຮ້ານຄ້າກະສິກຳ ຜູ້ບໍລິການທ່ອງທ່ຽວ ແລະ ສະຖານທີ່ທ່ອງທ່ຽວຕ່າງໆ.
- ຂະແໜງທຸລະກິດກະສິກຳ, ລວມມີໂຮງງານປຸງແຕ່ງ, ຟາມລ້ຽງສັດ, ໂຮງສີ, ກຸ່ມຊາວກະສິກອນ ແລະ ອື່ນໆ.
- ຂະແໜງທຸລະກິດຂົນສົ່ງສິນຄ້າ ແລະ ຂົນສົ່ງໂດຍສານໃນທຸກໆລະດັບ.
- ຂະແໜງການຄ້າ ຂາຍຍົກຂາຍຍ່ອຍ.

ສະເພາະຂະແໜງທຸລະກິດທີ່ກ່າວມາຂ້າງເທິງນີ້ ສຄອ ແຫ່ງຊາດລລາວ ຂໍໃຫ້ລັດຖະບານພິຈາລະນາຫຼຸດອາກອນມູນຄ່າເພີ່ມເປັນ 5% (ຫຼື 50% ຈາກມູນຄ່າເດີມ) ແລະ ຍົກເວັ້ນອາກອນກຳໄລເປັນໄລຍະ 28 ເດືອນ ນັບແຕ່ເດືອນ 7 ປີ 2020 ເປັນຕົ້ນໄປ.

#### ຂ. ຍົກເວັ້ນພາສີນຳເຂົ້າເຄື່ອງຈັກອຸປະກອນ.

ມີຫຼາຍໂຮງງານຈະຕ້ອງໄດ້ປ່ຽນແຜນການຜະລິດຕາມຕະລາດໃໝ່ ແລະ ມີຄວາມຕ້ອງການປ່ຽນຖອຍກົນຈັກ ແລະ ລະບົບໂຮງງານໃຫ້ທັນສະໄໝ ຫຼື ໃຫ້ໄປຕາມຄວາມຕ້ອງການຂອງຕະຫຼາດໃໝ່ (ສັ່ງເຄື່ອງໃໝ່). ສຄອ ແຫ່ງຊາດລາວຈຶ່ງຂໍສະເໜີໃຫ້ລັດຖະບານໄດ້ຍົກເວັ້ນພາສີນຳເຂົ້າເຄື່ອງຈັກ ແລະ ອຸປະກອນລະບົບໂຮງງານທີ່ໄດ້ທຳການປັບປຸງເປັນແຕ່ລະກໍລະນີ. ພ້ອມທັງຍົກເວັ້ນພາສີນຳເຂົ້າວັດຖຸປັດໃຈໃນການຜະລິດກະສິກຳດັ່ງທີ່ໄດ້ສະເໜີໃນປົດຜ່ານມາ.

### ຄ. ຫຼຸດຜ່ອນພາສີ ແລະ ຄ່າທຳນຽມນຳເຂົ້ານ້ຳມັນເຊື້ອໄຟ.

ໃນປັດຈຸບັນ ເຖິງແມ່ນວ່າລາຄານ້ຳມັນເຊື້ອໄຟ ແລະ ນ້ຳມັນລໍ່ລື່ນໃນຕະຫຼາດໂລກຫຼຸດລົງ ແຕ່ລາຄານ້ຳມັນເຊື້ອໄຟຢູ່ ສປປ ລາວ ຍັງສູງກວ່າລາຄາຢູ່ປະເທດເພື່ອນບ້ານ. ລາຄາທີ່ສູງຂຶ້ນແມ່ນໄດ້ກະທົບເຖິງຕົ້ນທຶນການຜະລິດ ແລະ ຂົນສົ່ງສິນຄ້າພາຍໃນ ແລະ ໃສ່ລາຄາສິນຄ້າອຸປະໂພກ-ບໍລິໂພກ ຕາມທ້ອງຕະຫຼາດ ຕໍ່ກັບບັນຫານີ້ ສຄອ ແຫ່ງຊາດລາວ ຈຶ່ງຂໍສະເໜີໃຫ້ລັດຖະບານໄດ້ທົບທວນຄືນການຄິດໄລ່ໂຄງສ້າງລາຄານ້ຳມັນຄືນໃໝ່ ໂດຍການຫຼຸດຜ່ອນຄ່າທຳນຽມຕ່າງໆ ທີ່ເຮັດໃຫ້ລາຄານ້ຳມັນເຊື້ອໄຟສູງທີ່ເປັນອັນສະກັດກັ້ນຕໍ່ການຂະຫຍາຍຂອງການຜະລິດພາຍໃນ ແລະ ເສດຖະກິດ, ເຊິ່ງໄດ້ສະແດງໃນຮູບພາບ 4.3 ລຸ່ມນີ້.

**ຮູບທີ 4.3: ນະໂຍບາຍ ແລະ ມາດຕະການຫຼຸດຜ່ອນດ້ານພາສີອາກອນ ແລະ ຄ່າທຳນຽມ**




## 4.3 ຂໍ້ສະເໜີຕໍ່ນະໂຍບາຍ ແລະ ມາດຕະການປັບປຸງແວດລ້ອມການດຳເນີນທຸລະກິດ ແລະ ກົນໄກການຄຸ້ມຄອງ.

ມາດຕະການ ແລະ ນະໂຍບາຍທີ່ຕ້ອງການເພື່ອໃຫ້ການຟື້ນຟູເສດຖະກິດໄດ້ຖືກຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ແລະ ໄດ້ຮັບໝາກຜົນທີ່ດີ ແມ່ນກ່ຽວກັບການປັບປຸງແວດລ້ອມການດຳເນີນທຸລະກິດ ແລະ ການປັບປຸງກົນໄກການຄຸ້ມຄອງຂອງລັດໃຫ້ດີຂຶ້ນ.

ດັ່ງທີ່ໄດ້ລາຍງານໃນບົດເບື້ອງຕົ້ນວ່າ ສະພາບແວດລ້ອມໃນການດຳເນີນທຸລະກິດຂອງ ສປປ ລາວ ແມ່ນຢູ່ໃນລະດັບຕ່ຳສຸດ ຢູ່ທີ່ 154 ສອງປີຊ້ອນໃນການຈັດອັນດັບຈາກທະນາຄານໂລກ. ເພື່ອໃຫ້ແວດລ້ອມນີ້ດີຂຶ້ນ ແລະ ເພື່ອໃຫ້ຕົວເລກດັດຊະນີໝາຍຂອງທະນາຄານໂລກໃຫ້ຫຼຸດລົງ ລັດຖະບານກໍ່ໄດ້ເອົາໃຈໃສ່ປັບປຸງກົນໄກການຄຸ້ມຄອງຂອງລັດ

ເພື່ອອຳນວຍຄວາມສະດວກໃຫ້ພາກທຸລະກິດ ແລະ ໃຫ້ການແກ້ໄຂວິກິດການ COVID-19 ໄດ້ທັນການ. ສຄອ ແຫ່ງຊາດລາວ ຈຶ່ງສະເໜີໃຫ້ລັດຖະບານໄດ້ເອົາໃຈໃສ່ບັນດາມາດຕະການລຸ່ມນີ້.

**ກ. ເພີ່ມທະວີບົດບາດຂອງເວທີທຸລະກິດລາວ (LBF).**

ເວທີທຸລະກິດລາວ (LBF) ໄດ້ເປັນເວທີສົນທະນາລະຫວ່າງພາກລັດ-ພາກທຸລະກິດ ເປັນເວລາເກືອບ 12 ປີ ແລະ ໄດ້ມີການແກ້ໄຂບັນຫາທີ່ຂີດຂວາງໃຫ້ແກ່ການດຳເນີນທຸລະກິດໃນແຕ່ລະປີ. ສຄອ ແຫ່ງຊາດລາວ ຈຶ່ງຂໍສະເໜີໃຫ້ລັດຖະບານ ໂດຍສະເພາະແມ່ນໃຫ້ ພະນະທ່ານ ນາຍົກລັດຖະມົນຕີ ໄດ້ເປັນປະທານຊີ້ນຳເວທີທຸລະກິດລາວດັ່ງກ່າວ ເພື່ອເຮັດໃຫ້ຂໍ້ຈຳກັດ ແລະ ສິ່ງຂີດຂວາງໃນການດຳເນີນທຸລະກິດໄດ້ຖືກແກ້ໄຂຢ່າງທັນການ ໂດຍສະເພາະໃນໄລຍະຟື້ນຟູຈາກວິກິດການ COVID-19.

**ຂ. ເພີ່ມທະວີການປະຕິບັດຄຳສັ່ງ 02/ນຍ ແລະ ການຈັດຕັ້ງຄະນະປະສານງານພາກລັດ-ພາກທຸລະກິດ ເພື່ອ ຕິດຕາມປະເມີນຜົນ.**

ລັດຖະບານໄດ້ອອກຄຳສັ່ງເລກທີ 02/ນຍ ເພື່ອໃຫ້ບັນດາກະຊວງ ແລະ ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງຈັດຕັ້ງປະຕິບັດການແກ້ໄຂບັນຫາ ແລະ ສິ່ງກີດຂວາງການດຳເນີນທຸລະກິດໃນ ສປປ ລາວ. ໃນກອງປະຊຸມທຸລະກິດລາວ ຄັ້ງທີ 12 (LBF12) ລັດຖະບານໄດ້ເຫັນດີຕໍ່ການສະເໜີຂອງ ສຄອ ແຫ່ງຊາດລາວ ໃຫ້ແຕ່ງຕັ້ງຄະນະປະສານງານຈາກພາກລັດ-ພາກທຸລະກິດ ເພື່ອຕິດຕາມ ແລະ ປະເມີນຜົນ 10 ຕົວຊີ້ວັດທີ່ຕິດພັນກັບວຽກງານການປັບປຸງລະບຽບການ, ກົນໄກຄຸ້ມຄອງ ແລະ ການປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ. ສຄອ ແຫ່ງຊາດລາວ ສະເໜີໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງໄດ້ຮ່ວມມືກັບພາກທຸລະກິດ ເພື່ອສຶກສາຄົ້ນຄວ້າ ແລະ ສະເໜີຊ່ອງທາງການແກ້ໄຂໃຫ້ລັດຖະບານ ເພື່ອເຮັດໃຫ້ລະດັບຂອງຕົວຊີ້ວັດແຕ່ລະຕົວຫຼຸດລົງ.

**ຄ. ປັບປຸງພັນທະພາບລັດ-ທຸລະກິດ ໃນການສົ່ງເສີມການຜະລິດ.**

ເພື່ອຊຸກຍູ້ສົ່ງເສີມການຜະລິດສິນຄ້າ ຢູ່ ສປປ ລາວ ລັດຖະບານໄດ້ຈັດຕັ້ງຄະນະສົ່ງເສີມການຜະລິດ ແລະ ຊົມໃຊ້ຜະລິດຕະພັນທີ່ຜະລິດໄດ້ຢູ່ພາຍໃນ ແລະ ການຄຸ້ມຄອງການນຳເຂົ້າສິນຄ້າອຸປະໂພກ-ບໍລິໂພກ (ຂໍ້ຕົກລົງ 51/ນຍ). ໂດຍອີງຕາມຂໍ້ຕົກລົງດັ່ງກ່າວ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ມີໂຄງການສົ່ງເສີມການຜະລິດເປັນສິນຄ້າ ແລະ ໂຄງການຄໍ້າປະກັນຄວາມໝັ້ນຄົງດ້ານສະບຽງອາຫານ. ພາກທຸລະກິດທີ່ໄດ້ເຂົ້າຮ່ວມຄະນະກຳມະການ ແລະ ໂຄງການດັ່ງກ່າວໃຫ້ຂໍ້ສັງເກດວ່າຊັບພະຍາກອນ (ທຶນຮອນ, ບຸກຄະລາກອນ ແລະ ອື່ນໆ), ເພື່ອການສົ່ງເສີມໃນລະດັບປະເທດ ແມ່ນຍັງຂາດເຂີນຫຼາຍ ແລະ ລະບົບການສົ່ງເສີມຕ່ອງໂສ້ການຜະລິດ ນັບແຕ່ຮາກຖານຫານຜະລິດຈົນເຖິງຕະຫຼາດແມ່ນມີຊ່ອງວ່າງຫຼາຍ. ເມື່ອຂ້ອຍແກ້ໄຂສະພາບດັ່ງກ່າວ ສຄອ ແຫ່ງຊາດລາວ ໄດ້ສະເໜີໃຫ້ມີໂຄງການຕົວແບບໃນການຊຸກຍູ້ຊ່ວຍເຫຼືອຜູ້ປະກອບການທີ່ດຳເນີນທຸລະກິດ ໃນຕ່ອງໂສການຜະລິດກະສິກຳ ແລະ ຈະຖືເອົາການຟື້ນຟູຈາກວິກິດການ COVID-19 ສ້າງໂຄງການນຳລ່ອງຂອງພາກທຸລະກິດຂຶ້ນ. ດັ່ງນັ້ນຈຶ່ງຂໍສະເໜີໃຫ້ລັດຖະບານມີການຊ່ວຍເຫຼືອແກ້ໄຂມາດຕະການ ດ້ານການເງິນ ທີ່ໄດ້ກ່າວມານັ້ນ ແລະ ຖືໂຄງການຂອງພາກທຸລະກິດເອກະຊົນດັ່ງກ່າວເປັນໂຄງການຂອງພາກທຸລະກິດ (ເອກະຊົນ) ດັ່ງກ່າວເປັນໂຄງການຂອງຄະນະກຳມະການຕາມຂໍ້ຕົກລົງສະບັບເລກທີ 51/ນຍ.

**ງ. ປັບປຸງພັນທະພາບລັດ-ທຸລະກິດໃນການປັບປຸງລະບົບການສຶກສາເຕັກນິກວິຊາຊີບ.**

ຂະແໜງການທຸລະກິດແມ່ນຂາດວິຊາການເຕັກນິກ ແລະ ແຮງງານທີ່ມີທັກສະ ແລະ ຝີມືດີ, ສາເຫດໜຶ່ງກໍ່ຍ້ອນລະບົບການສຶກສາເຕັກນິກວິຊາຊີບ (TVET) ແມ່ນບໍ່ສອດຄ່ອງກັບຄວາມຕ້ອງການຂອງຂະແໜງທຸລະກິດ, ສຄອ ແຫ່ງຊາດລາວ ໄດ້ຮ່ວມກັບກະຊວງສຶກສາ ແລະ ກິລາ ໃນໂຄງການພັດທະນາອາຊີວະສຶກສາ ຈຶ່ງຮຽກຮ້ອງໃຫ້ລັດຖະບານໄດ້ເອົາໃຈໃສ່ຕໍ່ໂຄງການປັບປຸງດັ່ງກ່າວໂດຍສະເພາະໃນໄລຍະຟື້ນຟູຈາກວິກິດການ COVID-19.

**ຈ. ປັບປຸງພັນທະພາບລັດ-ທຸລະກິດໃນການໂຄສະນາການທ່ອງທ່ຽວ ແລະ ຜະລິດຕະພັນ ຂອງ ສປປ ລາວ.**

ເຖິງແມ່ນວ່າການທ່ອງທ່ຽວໃນ ສປປ ລາວ ໄດ້ມີການຂະຫຍາຍຕົວໂດຍໄວ ແຕ່ຕະຫຼາດທ່ອງທ່ຽວຕົວຈິງ ນັກທ່ອງທ່ຽວທີ່ມີຄຸນນະພາບແມ່ນມີຈໍານວນໜ້ອຍ. ວິກິດການ COVID-19 ໄດ້ກະທົບຂະແໜງທຸລະກິດທ່ອງທ່ຽວຢ່າງຮ້າຍແຮງ ແລະ ບໍ່ມີກໍານົດທີ່ແນ່ນອນ ສະນັ້ນຈຶ່ງມີຄວາມຕ້ອງການໃຫ້ພາກລັດ ແລະ ພາກທຸລະກິດເອກະຊົນ ໄດ້ຮ່ວມມືກັນຢ່າງສະໜິດແໜ້ນຂຶ້ນຕື່ມ ເພື່ອວາງແຜນການທ່ອງທ່ຽວຄືນໃໝ່ ແລະ ພັດທະນາໂຄງການໂຄສະນາການທ່ອງທ່ຽວຕາມເປົ້າໝາຍໃໝ່ທີ່ກໍານົດ. ໃນກອງປະຊຸມເວທີທຸລະກິດລາວຄັ້ງທີ 12 ລັດຖະບານໄດ້ເຫັນດີຕໍ່ການສະເໜີຂອງ ສຄອ ແຫ່ງຊາດລາວ ໃຫ້ແຕ່ງຕັ້ງຄະນະກໍາມະການສົ່ງເສີມຕະຫຼາດທ່ອງທ່ຽວ ທີ່ປະກອບດ້ວຍຜູ້ຕາງໜ້າຂອງພາກລັດ ແລະ ພາກທຸລະກິດ. ດັ່ງນັ້ນ ສຄອ ແຫ່ງຊາດລາວ ຈຶ່ງຂໍສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງໄດ້ຂຶ້ນຂວາຍຈັດຕັ້ງຄະນະກໍາມະການດັ່ງກ່າວຢ່າງເປັນທາງການ ເພື່ອຈະໄດ້ຮ່ວມກັນວາງແຜນຟື້ນຟູ ແລະ ພັດທະນາຂະແໜງການທ່ອງທ່ຽວຈາກວິກິດການ COVID-19. ນອກຈາກນັ້ນ ສຄອ ແຫ່ງຊາດລາວ ໄດ້ມີແຜນການຟື້ນຟູຂະແໜງທຸລະກິດທ່ອງທ່ຽວທີ່ສາມາດໃຫ້ຄະນະກໍາມະການເລີ່ມເຮັດວຽກໄດ້ທັນທີ. ບັນດານະໂຍບາຍ ແລະ ມາດຕະການປັບປຸງແວດລ້ອມການດໍາເນີນທຸລະກິດ ແລະ ກົນໄກຄຸ້ມຄອງຂອງລັດໄດ້ສະແດງໃນຮູບພາບ 4.4 ລຸ່ມນີ້.

**ຮູບທີ 4.4: ນະໂຍບາຍ ແລະ ມາດຕະການປັບປຸງແວດລ້ອມການດໍາເນີນທຸລະກິດ**



## V. ແຜນການໃນຕໍ່ໜ້າ.

ວິກິດການ COVID-19 ຍັງບໍ່ມີຜູ້ໃດຮູ້ໄດ້ວ່າ ມັນຈະແກ່ຍາວໄປເຖິງເມື່ອໃດ, ສຄອ ແຫ່ງຊາດລາວ ຍັງຈະໄດ້ສືບຕໍ່ວຽກງານໃນການຕິດຕາມສະພາບຜົນກະທົບ ຕໍ່ທຸລະກິດໃນທົ່ວປະເທດ ໂດຍຜ່ານບັນດາ ສຄອ ແຂວງ ເພື່ອລາຍງານຄະນະສະເພາະກິດເປັນປະຈຳ. ສຄອ ແຫ່ງຊາດລາວ ຈະຮັກສາໜ່ວຍງານຄົ້ນຄວ້າຜົນກະທົບ ແລະ ການຟື້ນຟູການຜະລິດຂອງແຕ່ລະຂະແໜງການ. ທີ່ປະກອບມີໜ່ວຍງານກະສິກຳປຸງແຕ່ງ ແລະ ອຸດສາຫະກຳ ທຸລະກິດປິ່ນອ້ອມ, ໜ່ວຍງານກະສິກຳ, ໜ່ວຍງານທ່ອງທ່ຽວ, ໜ່ວຍງານການເງິນ ແລະ ການສະໜອງທຶນ, ໜ່ວຍງານກ່ຽວກັບແຮງງານ ແລະ ສະຫວັດດີການ ແລະ ໜ່ວຍງານສົ່ງເສີມ SME ແລະ MSME.

ວຽກງານຂອງຄະນະສະເພາະກິດ COVID-19 ຂອງ ສຄອ ແຫ່ງຊາດລາວ ທີ່ປະກອບດ້ວຍວຽກງານຂອງຄະນະບໍລິຫານງານ, ຄະນະເລຂາທິການ, ຄະນະທີ່ປຶກສາ ແລະ ພະນັກງານຈຳນວນໜຶ່ງຈະໄດ້ຈັດຕັ້ງປະຕິບັດວຽກງານດັ່ງຕໍ່ໄປນີ້:

ກ. ສືບຕໍ່ຕິດຕາມ ແລະ ປະເມີນຜົນກະທົບຂອງວິກິດການ COVID-19 ໃນນັ້ນຈະມີການສືບຕໍ່ສຶກສາຜົນກະທົບໄປທົ່ວແຂວງ ແລະ ທົ່ວຂະແໜງການໃຫ້ກວ້າງຂວາງກວ່າເກົ່າ ພ້ອມທັງການສ້າງຖານຂໍ້ມູນ ແລະ ແຫຼ່ງຂ່າວເພື່ອລາຍງານ.

ຂ. ຕິດຕາມການພິຈາລະນາ ນະໂຍບາຍ ແລະ ມາດຕະການສະເພາະ ເພື່ອຟື້ນຟູການຜະລິດຄືນໃໝ່ຂອງພາກທຸລະກິດທີ່ໄດ້ສະເໜີລັດຖະບານໂດຍສະເພາະແມ່ນ:

- ຂໍ້ສະເໜີດ້ານທະນາຄານ ແລະ ສະຖາບັນການເງິນ
- ຂໍ້ສະເໜີດ້ານການຈັດຫາແຫຼ່ງທຶນ
- ຂໍ້ສະເໜີດ້ານພາສີອາກອນ ແລະ ຄ່າທຳນຽມ
- ຂໍ້ສະເໜີດ້ານການປັບປຸງແວດລ້ອມທຸລະກິດ ແລະ ກົນໄກການຄຸ້ມຄອງຂອງລັດ.

ຄ. ເຜີຍແຜ່ນະໂຍບາຍ ແລະ ມາດຕະການສະເພາະອັນໃໝ່ທີ່ໄດ້ຮັບມີພິຈາລະນາຈາກລັດຖະບານຕໍ່ຜູ້ປະກອບການທຸລະກິດທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງລະດົມ ແລະ ນຳພາພາກທຸລະກິດໃຫ້ປະຕິບັດບັນດານະໂຍບາຍ ແລະ ມາດຕະການດັ່ງກ່າວ.

ງ. ສ້າງໂຄງການນຳລ່ອງ ເພື່ອລິເລີ່ມການຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ມາດຕະການໃໝ່. ໂຄງການດັ່ງກ່າວຈະເປັນຕົວແບບເພື່ອສ້າງລະບົບການຄຸ້ມຄອງການຜະລິດໃນລະບົບຕ່ອງໂສ້ແບບໃໝ່ ແລະ ເປັນບ່ອນອີງເພື່ອການຂະຫຍາຍ ແລະ ເພື່ອຟື້ນຟູເສດຖະກິດໃນທົ່ວປະເທດ. ໂຄງການນຳລ່ອງທີ່ໄດ້ຄົ້ນຄວ້າເບື້ອງຕົ້ນປະກອບມີ:

- ໂຄງການປັບປຸງລະບົບກູ້ຢືມເງິນໃຫ້ແກ່ ກຸ່ມຊາວກະສິກອນ ແລະ ຈຸນລະທຸລະກິດ (MSME) ທີ່ເຄື່ອນໄຫວໃນຕ່ອງໂສ້ການຜະລິດ, ການຈໍລະຈອນ ແລະ ການຈຳໜ່າຍຜະລິດຕະພັນກະສິກຳ ຢູ່ນະຄອນຫຼວງວຽງຈັນ. ໂຄງການດັ່ງກ່າວເປັນໂຄງການເຮັດຮ່ວມ ກັບ ສາມະຄົມສະຖາບັນການເງິນຈຸລະພາກ.
- ໂຄງການສະໜອງສິນເຊື່ອຈາກກອງທຶນ SME ຈຳນວນ 200 ຕື້ກີບ ໃຫ້ແກ່ຜູ້ປະກອບການທຸລະກິດກະສິກຳ ແລະ ຜູ້ປະກອບການໃນຂະແໜງການອື່ນໆ ທີ່ຖືກກະທົບຈາກວິກິດການ COVID-19. ສຄອ ແຫ່ງຊາດລາວ ຈະຖືບົດບາດເປັນຜູ້ກວດສອບ ແລະ ຄໍ້າປະກັນຄວາມສາມາດ ແລະ ປະຫວັດຂອງຜູ້ກູ້ຢືມຕໍ່ທະນາຄານທຸລະກິດທີ່ຢູ່ໃນໂຄງການກອງທຶນ SME.
- ໂຄງການຟື້ນຟູທຸລະກິດທ່ອງທ່ຽວຕາມບົດຄົ້ນຄວ້າຂອງໜ່ວຍງານຄົ້ນຄວ້າການທ່ອງທ່ຽວຂອງ ສຄອ ແຫ່ງຊາດລາວ ທີ່ປະກອບມີການຈັດຕັ້ງ ແລະ ເຄື່ອນໄຫວຂອງຄະນະກຳມະການຮ່ວມກັບ ພາກລັດ ແລະ ພາກທຸລະກິດເພື່ອໂຄສະນາການທ່ອງທ່ຽວ "ລາວທ່ຽວລາວ", ການພັດທະນາລະບົບການເກັບຄ່າທຳນຽມການທ່ອງທ່ຽວລວມສູນເພື່ອໃຫ້ລັດຖະບານມີລາຍຮັບແນ່ນອນ ແລະ ອື່ນໆ.

- ໂຄງການຟື້ນຟູອຸດສາຫະກຳປຸງແຕ່ງ ຕາມບົດຄົ້ນຄວ້າຂອງໜ່ວຍງານຄົ້ນຄວ້າອຸດສາຫະກຳຂອງ ສຄອ ແຫ່ງຊາດລາວທີ່ປະກອບມີການອຳນວຍຄວາມສະດວກໃຫ້ໂຮງງານປັບປຸງລະບົບການຜະລິດຄືນໃໝ່ ຕາມຄວາມຮຽກຮ້ອງຕ້ອງການຂອງຜູ້ຊື້ໃໝ່, ການເຂົ້າເຖິງແຫຼ່ງທຶນ ເພື່ອການປັບປຸງ ແລະ ອື່ນໆ.
- ໂຄງການສ້າງໜ່ວຍງານໃຫ້ຄຳແນະນຳແກ້ໄຂບັນຫາໃຫ້ SME ແລະ MSME ທີ່ໄດ້ຮັບຜົນກະທົບຈາກວິກິດການ COVID-19 ໃນຮູບການ SME-Clinic ຢູ່ໃນສູນສົ່ງເສີມ SME (SSC) ຂອງ ສຄອ ແຫ່ງຊາດລາວ.

**ຈ.** ປັບປຸງເນື້ອໃນຂອງຍຸດທະສາດ ແລະ ແຜນການໄລຍະ 05 ປີ ນັບແຕ່ປີ 2021-2025 ຂອງ ສຄອ ແຫ່ງຊາດລາວໃຫ້ແທດເໝາະກັບການປ່ຽນແປງສະພາບ ແລະ ຄວາມຕ້ອງການຈາກວິກິດການ COVID-19.

# ເອກະສານຊ້ອນທ້າຍ

ບົດລາຍງານຜົນໄດ້ຮັບຈາກການສໍາຫຼວດຂອງ COVID-19 ຕໍ່ກັບພາກທຸລະກິດ